cover-m6-12-tg-v2.pdf 1 25/03/2015 11:02:18

ສະໜັບໜູນການສ້າງຕົ້ນສະບັບ ໂດຍງົບປະມານແຫ່ງລັດ
ສະໜັບສະໜູນການພິມ ໂດຍທະນາຄານພັດທະນາອາຊີ
ພິມທີ່ Eastern Printing Public Co.Ltd. (ປະເທດໄທ)
ຕາມ ທບ 116 ພຈ 19032015
ຂະໜາດ 18x25 ຊມ ຈຳນວນພິມ 4.605 ຫົວ
ສະຫງວນລິຂະສິດ

ຄູ່ມືຄູ
ທຸລະກິດສຳລັບຮຽນຄວບກັບ 6 ສາຂາວິຊາ
ຊັ້ນມັດທະຍົມສຶກສາ ປີທີ 6

# ຄູ່ມືຄູ

# ທຸລະກິດສຳລັບຮຽນຄວບ ກັບ 6 ສາຂາວິຊາ

## ຊັ້ນມັດທະຍົມສຶກສາ ປີທີ 6

ຮຽນຮູ້ = Know
ກ່ຽວກັບ = About
ທຸລະກິດ = Business



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2015

ຫ້າມຂາຍ

# ຄູ່ມືຄູ
# ທຸລະກິດສຳລັບຮຽນຄວບ
# ກັບ 6 ສາຂາວິຊາ
## ຊັ້ນມັດທະຍົມສຶກສາ ປີທີ 6


ຮຽບຮຽງໂດຍ:

ຕິ່ນ ປາງປະເສີດ, ສູນພັດທະນາຜູ້ປະກອບກິດຈະການ ລາວ-ອິນເດຍ

ທິນນະລົງ ແກ້ວສິມບັດ, ສູນພັດທະນາຜູ້ປະກອບກິດຈະການ ລາວ-ອິນເດຍ

ກວດແກ້ໂດຍ:

ສີອຳພອນ ຈັນທະພອນ, ສູນພັດທະນາຜູ້ປະກອບກິດຈະການ ລາວ-ອິນເດຍ

ສຸກສະຫວັນ ພອນເທວາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

ພິມເຂົ້າໜ້າໂດຍ:

ສຸກສາຄອນ ພິງອຸດົມ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

ໂດຍການຮ່ວມມືຈາກ:

ສົມສັກ ພັນນະວົງ, ສູນສຶກສານິເທດ ແຂວງ ວຽງຈັນ

ສົມຍົດ ອິນທະວົງສາ, ສູນສຶກສານິເທດ ແຂວງ ບໍລິຄຳໄຊ

ຄຳພອນ ວິໄລທອງ, ມ.ສ ຂິວໂດນ ແຂວງ ຄຳມ່ວນ

ຊົມພິນ ມູນຊົມພູ, ມ.ປ ໂພນສະຫວັນ ແຂວງ ສະຫວັນນະເຂດ



ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2015



kabm6-12-tg-v2.indb 1 23/03/2015 09:13:46

# ຄຳນຳ

ປຶ້ມຄູ່ມືຄູ ທຸລະກິດເຫຼັ້ມນີ້ໄດ້ຮັບການຮຽບຮຽງຂຶ້ນຕາມຫຼັກສູດ ວິຊາ ທຸລະກິດຊັ້ນມັດທະຍົມສຶກສາຕອນປາຍປີທີ 6 ສະບັບປີ 2011, ເຊິ່ງໄດ້ຮັບການພັດທະນາໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງ ສ.ປ.ປ ລາວ ເພື່ອຂ້າມຜ່ານຈາກການຜະລິດແບບທຳມະຊາດໄປສູ່ການຜະລິດເປັນສິນຄ້າ ແລະ ກ້າວໄປສູ່ການເປັນເສດຖະກິດປະຊາຄົມອາຊຽນ ແລະ ຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວຕາມທິດທາງຂອງພັກ ແລະລັດວາງອອກ. ນອກຈາກນີ້ ວິຊາ ທຸລະກິດ ຍັງປູກຈິດສຳນຶກຄວາມຮູ້ທາງດ້ານທຸລະກິດໃຫ້ແກ່ນັກຮຽນໄດ້ຮຽນຮູ້ ແລະ ການກຽມຄວາມພ້ອມເປັນຜູ້ປະກອບກິດຈະການໃນອານາຄົດ.

ດັ່ງນັ້ນ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາຈຶ່ງໄດ້ຮຽບຮຽງປຶ້ມແບບຮຽນ ແລະປຶ້ມຄູ່ມືຄູ ວິຊາ ທຸລະກິດ ເຊິ່ງເປັນປະໂຫຍດໃຫ້ຄູສອນ ແລະ ນັກຮຽນຊັ້ນມັດທະຍົມປີທີ 6 ໄດ້ນຳໄປໃຊ້ເຂົ້າໃນການຮຽນ-ການສອນ ໃຫ້ມີຄວາມຖືກຕ້ອງຕາມມາດຕະຖານຄວາມສາມາດໃນແຕ່ລະຊັ້ນຮຽນ. ໃຫ້ຜູ້ບໍລິຫານໂຮງຮຽນຮູ້ເນື້ອໃນລະອຽດໃນປຶ້ມເຫຼັ້ມນີ້, ຄູສອນສາມາດນຳໃຊ້ເປັນເຄື່ອງມືໃນການວາງແຜນການຮຽນ-ການສອນ ແລະ ການແຕ່ງບົດສອນ.

ຄະນະຮັບຜິດຊອບການຮຽບຮຽງ ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູຊຸດນີ້ ຫວັງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ຜູ້ບໍລິຫານໂຮງຮຽນ, ຄູສອນ ແລະ ນັກຮຽນຢ່າງຫຼວງຫຼາຍ, ຫາກທ່ານນຳໄປໃຊ້ແລ້ວມີຄວາມຄິດເຫັນ,ຂໍ້ສະເໜີຫຼືຄຳແນະນຳປະການໃດກະລຸນາສົ່ງຄຳ ແນະນຳດັ່ງກ່າວໄປສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເພື່ອຈະໄດ້ພິຈາລະນາປັບປຸງໃຫ້ສົມບູນຂຶ້ນກວ່າເກົ່າ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ

ຄຳແນະນຳລວມ.....................................................................................1

1. ຈຸດພິເສດຂອງວິຊາ.......................................................................1
2. ຈຸດປະສົງ......................................................................................1
3. ເນື້ອໃນ........................................................................................1
4. ແນະນຳວິທີສອນ ແລະ ກິດຈະກຳການສອນ...........................................2
5. ແນະນຳການນຳໃຊ້ສື່ການສອນ..........................................................3
6. ແນະນຳການວັດ ແລະ ປະເມີນຜົນ......................................................4
7. ແນະນຳການສ້າງແຜນການສອນປະຈຳປີ...............................................4
8. ແນະນຳການແຕ່ງບົດສອນ.................................................................8
9. ແນະນຳການສອນແຕ່ລະບົດ...............................................................9

ບົດທີ 1 ຂ້ອຍຈະຈັດຕັ້ງທຸລະກິດໄດ້ແນວໃດ.........................................................10

1. ຈຸດປະສົງ......................................................................................10
2. ເນື້ອໃນຕົ້ນຕໍ..................................................................................10
3. ສື່ການສອນ....................................................................................11
4. ວິທີດຳເນີນການສອນ......................................................................12
5. ການວັດ ແລະ ປະເມີນຜົນ................................................................15

ບົດທີ 2 ຂ້ອຍຈະດຳເນີນທຸລະກິດໄດ້ແນວໃດ........................................................30

1. ຈຸດປະສົງ......................................................................................30
2. ເນື້ອໃນຕົ້ນຕໍ..................................................................................30
3. ສື່ການສອນ....................................................................................31
4. ວິທີດຳເນີນການສອນ......................................................................31
5. ການວັດ ແລະ ປະເມີນຜົນ................................................................34

ບົດທີ 3 ຂັ້ນຕອນຕໍ່ໄປເພື່ອຈະກາຍເປັນນັກທຸລະກິດມີຈັກຂັ້ນຕອນ..............................54

1. ຈຸດປະສົງ......................................................................................54
2. ເນື້ອໃນຕົ້ນຕໍ..................................................................................54
3. ສື່ການສອນ....................................................................................54
4. ວິທີດຳເນີນການສອນ......................................................................54
5. ການວັດ ແລະ ປະເມີນຜົນ................................................................56

ບົດທີ 4 ວິທີອະທິບາຍແຜນດຳເນີນທຸລະກິດສ່ວນຕົວຢ່າງລະອຽດ................................58
1. ຈຸດປະສົງ.............................................................................................58
2. ເນື້ອໃນຕົ້ນຕໍ..........................................................................................58
3. ສື່ການສອນ............................................................................................59
4. ວິທີດຳເນີນການສອນ..............................................................................59
5. ການວັດ ແລະ ປະເມີນຜົນ.......................................................................60

# ຄຳແນະນຳລວມ

## 1. ຈຸດພິເສດຂອງວິຊາ

ວິຊາ ທຸລະກິດ ໝາຍເຖິງຄວາມເຂົ້າໃຈ ແລະ ພາລະບົດບາດຂອງທຸລະກິດໃນສັງຄົມ, ການປະກອບສ່ວນຂອງທຸລະກິດຕໍ່ຄວາມຮັ່ງມີຂອງຊາດ, ທັດສະນະຄະຕິ ແລະ ການປະພຶດຂອງນັກທຸລະກິດ ແລະ ຍັງບອກໃຫ້ຮູ້ວ່າທຸລະກິດກຳລັງດຳເນີນໄປໄດ້ແນວໃດ.

ວິຊາ ທຸລະກິດ ແມ່ນຫຼັກສູດການຮຽນ-ການສອນ ສຳລັບຄູສອນໃນຂົງເຂດການສຶກສາວິຊາຊີບ, ການສຶກສາລະດັບມັດທະຍົມຕອນປາຍ ແລະ ການສຶກສາລະດັບສູງຂຶ້ນໄປອີກ.

ການນຳໃຊ້ປຶ້ມຄູ່ມືຄູນີ້ ຖືກສ້າງຂຶ້ນມາເພື່ອສ້າງຄວາມຕື່ນເຕັ້ນໃຫ້ກັບນັກຮຽນ ແລະ ເສີມສ້າງທັດສະນະຄະຕິທາງດ້ານບວກໃນການດຳເນີນວຽກງານດ້ານທຸລະກິດ ແລະ ສ້າງວຽກເຮັດງານທຳໃຫ້ແກ່ນັກຮຽນໜຸ່ມທີ່ມີເກນອາຍຸລະຫວ່າງ 15-18 ປີ.

## 2. ຈຸດປະສົງ

ຈຸດປະສົງຂອງ ວິຊາ ທຸລະກິດ ແມ່ນເພື່ອປະກອບສ່ວນໃນການເສີມສ້າງພັດທະນາການຂອງທຸລະກິດໃນທົ່ວປະເທດ ຫຼື ສັງຄົມໃດໜຶ່ງ ໂດຍການໂຄສະນາປູກຈິດສຳນຶກໃຫ້ກຸ່ມໄວໜຸ່ມຮູ້ຈັກໂອກາດ ແລະ ສິ່ງທ້າທາຍຂອງການເຮັດທຸລະກິດ ແລະ ການປະກອບອາຊີບ ແລະ ຮູ້ຈັກກຳນົດອານາຄົດຂອງຕົນເອງ.

**ຈຸດປະສົງຕົ້ນຕໍຂອງ ວິຊາ ທຸລະກິດ ແມ່ນ**:

- ປູກຈິດສຳນຶກໃນການເຮັດທຸລະກິດ ແລະ ການປະກອບອາຊີບໃຫ້ກາຍເປັນໂອກາດຂອງການມີອາຊີບໃຫ້ແກ່ຊາວໜຸ່ມໃນລະດັບມັດທະຍົມຕອນປາຍ ແລະ ການສຶກສາ ວິຊາຊີບ.
- ໃຫ້ຄວາມຮູ້ທີ່ເປັນແບບຢ່າງທາງດ້ານປະຕິບັດທີ່ມີຄຸນນະພາບ ແລະ ມີຄວາມກ້າສ່ຽງ, ກ້າລິເລີ່ມການດຳເນີນທຸລະກິດໃຫ້ມີຜົນສຳເລັດ.
- ອຳນວຍຂໍ້ສະດວກໃນການປັບປຸງການສຶກສາຮ່ຳຮຽນໃນໄລຍະຂ້າມຜ່ານ ຂອງການສຶກສາເພື່ອເຮັດໃຫ້ຄົນເຮົາມີຄວາມເຂົ້າໃຈດີຂຶ້ນກ່ຽວກັບໜ້າທີ່ ແລະ ການດຳເນີນທຸລະກິດ.

## 3. ເນື້ອໃນ

ຫຼັກສູດ ວິຊາ ທຸລະກິດ ໄດ້ສ້າງຂຶ້ນມາໜຶ່ງຊຸດ ແລະ ອອກແບບໄວ້ເພື່ອຊ່ວຍນັກຮຽນໃຫ້ມີຄວາມສຳນຶກກ່ຽວກັບທຸລະກິດ ເຊິ່ງເປັນທາງເລືອກໃນການຊອກຫາວຽກເຮັດງານທຳໃຫ້ແກ່ເຂົາເຈົ້າ ເພື່ອປະກອບອາຊີບດ້ວຍຕົນເອງ ແລະ ສ້າງອາຊີບໃຫ້ແກ່ຜູ້ອື່ນໆໄດ້ພາຍຫຼັງທີ່ໄດ້ຈົບຈາກການຮຽນ.

ເພື່ອປະກອບສ່ວນໃນການເສີມສ້າງ ແລະ ພັດທະນາເສດຖະກິດ-ສັງຄົມພາຍໃນປະເທດ



kabm6-12-tg-v2.indb 1 23/03/2015 09:13:46

ທາງດ້ານໂຄສະນາປູກຈິດສຳນຶກຄວາມຮູ້ກ່ຽວກັບທຸລະກິດໃຫ້ກຸ່ມນັກຮຽນໃນເກນອາຍຸ 15-18 ປີ, ໃຫ້ຮູ້ຈັກໂອກາດ ແລະ ສິ່ງທ້າທາຍຂອງການເຮັດທຸລະກິດ.

## 4. ແນະນຳວິທີສອນ ແລະ ກິດຈະກຳການສອນ

**ວິທີສອນ**

ການສອນກ່ຽວກັບພື້ນຖານວິຊາອາຊີບມີຫຼາຍວິທີ, ແຕ່ໃນຊັ້ນມັດທະຍົມຕອນປາຍໄດ້ນຳໃຊ້ 3 ວິທີຄື: ການອະທິບາຍ, ການສາທິດ, ການທົດລອງ ເຊິ່ງທັງ 3 ວິທີນີ້ຈະໃຊ້ຄວບຄູ່ກັນ ແລະ ໃຊ້ໃຫ້ເໝາະສົມກັບເນື້ອໃນບົດທີ່ນຳມາສອນ.

ຄູສອນທີ່ມີປະສິດທິຜົນຄວນມີການປັບປຸງເຕັກນິກໃນການສອນຂອງຕົນເອງໃຫ້ຫຼາກຫຼາຍເລື້ອຍໆ. ເຕັກນິກດັ່ງກ່າວທີ່ເຮັດໃຫ້ນັກຮຽນມີສ່ວນຮ່ວມຢ່າງຫ້າວຫັນໃນຂະບວນການຮຽນ-ການສອນ ລວມມີການນຳສະເໜີບົດ, ການສົນທະນາເປັນກຸ່ມ, ການລະດົມສະໝອງ, ກໍລະນີສຶກສາ ແລະ ເກມທຸລະກິດ.

**4.1 ການສອນແບບອະທິບາຍ**

- ມີການວາງແຜນ ໂດຍເລືອກບັນຫາທີ່ນັກຮຽນຢາກຮູ້ ແລະ ກຳລັງສົນໃຈກ່ຽວຂ້ອງກັບບົດຮຽນ ແລະ ຕົວນັກຮຽນ.
- ວາງຈຸດປະສົງທີ່ຈະໃຫ້ນັກຮຽນອະທິບາຍຕາມຄວາມຮູ້ຂອງພວກເຂົາເຈົ້າໃຫ້ກວ້າງຂວາງ.
- ການກະກຽມນັກຮຽນໃຫ້ມີຄວາມພ້ອມ, ມີຄວາມສົນໃຈ ແລະ ມີສ່ວນຮ່ວມກິດຈະກຳດ້ວຍຄວາມພໍໃຈ.
- ການອະທິບາຍຫົວຂໍ້ບົດຮຽນໃດໜຶ່ງພາຍໃນຫ້ອງຮຽນໃຫ້ນັກຮຽນມີໂອກາດອອກຄວາມຄິດເຫັນຕາມຄວາມສາມາດຂອງເຂົາເຈົ້າ.
- ສົນທະນາ, ຖາມຕອບຄຳຖາມ ແລະ ເຮັດບົດເຝິກຫັດໃນແຕ່ລະບົດ.

**4.2 ການສອນແບບສາທິດ**

**ກ. ການກຽມການສາທິດ**

- ພິຈາລະນາຄວາມຈຳເປັນທີ່ຈະຕ້ອງສາທິດ ບອກຈຸດປະສົງເຫດຜົນໃຫ້ນັກຮຽນຮູ້ວ່າເປັນຫຍັງຈຶ່ງຕ້ອງສາທິດ.
- ຄູຈະເຮັດການສາທິດຈະຕ້ອງທົບທວນຂັ້ນຕອນຂອງການສາທິດເຊັ່ນ: ເນື້ອໃນທີ່ຈະເວົ້າປະກອບການສາທິດ ແລະ ການບັນທຶກໄວ້ເປັນຂັ້ນຕອນ.
- ຈັດຫາ ແລະ ກະກຽມວັດສະດຸຕ່າງໆ ທີ່ຈະເຮັດການສາທິດໄວ້ພ້ອມຕາມບົດຮຽນທີ່ກຳນົດໄວ້.



kabm6-12-tg-v2.indb 2 23/03/2015 09:13:46

**ຂ. ຂັ້ນຕອນ ຫຼື ການສະແດງການສອນ**

- ສ້າງຄວາມສົນໃຈໃຫ້ນັກຮຽນເຫັນຄວາມສຳຄັນຂອງວຽກງານທີ່ຈະສາທິດອະທິບາຍຈຸດປະສົງໃຫ້ນັກຮຽນຮູ້.

- ສາທິດເປັນແຕ່ລະຂັ້ນຕອນຕາມລຳດັບ, ການເວົ້າຕ້ອງຊັດເຈນໃຫ້ນັກຮຽນໝົດຫ້ອງໄດ້ຍິນ ແລະ ຄູຄວນອະທິບາຍການຕັ້ງຄຳຖາມໃຫ້ນັກຮຽນໄປພ້ອມ.

- ເປີດໂອກາດໃຫ້ນັກຮຽນໄດ້ຮ່ວມສະແດງການສາທິດ.

- ສະແດງ ແລະ ທົບທວນຄືນຂັ້ນຕອນຂອງການສາທິດທີ່ສຳຄັນຄືນໃໝ່ ຖ້ານັກຮຽນຫຼາຍຄົນຍັງບໍ່ເຂົ້າໃຈແຈ້ງ.

**ຄ. ຂັ້ນສະຫຼຸບການສາທິດ**

- ສະຫຼຸບເລື້ອງສຳຄັນທີ່ຄູຕ້ອງການເນັ້ນໃຫ້ນັກຮຽນໄດ້ນຳເອົາໄປຈັດຕັ້ງປະຕິບັດ.

- ເຮັດບົດເຝິກຫັດແບບງ່າຍໆ ເພື່ອກວດສອບຄວາມເຂົ້າໃຈຂອງນັກຮຽນ.

**4.3 ການສອນແບບທົດລອງ**

- ນັກຮຽນເປັນຜູ້ຄົ້ນພົບຄວາມຈິງດ້ວຍຕົນເອງໂດຍຜ່ານການໃຊ້ວັດສະດຸ ແລະ ເຄື່ອງປະຈັກຕາ

- ນັກຮຽນສາມາດຈົດຈຳ ແລະ ຈື່ເລື້ອງທີ່ຕົນເອງຄົ້ນພົບໄດ້ດົນນານ ແລະ ຫຼາຍກວ່າຄູອະທິບາຍ ແລະ ເວົ້າສູ່ຟັງ.

- ນັກຮຽນສາມາດສຶກສາຈາກບັນຫາທີ່ຕົນເອງສົນໃຈ ແລະ ຢາກຮູ້.

- ນັກຮຽນສາມາດໃຊ້ວິທີການທົດລອງນີ້ແກ້ໄຂບັນຫາໃນຊີວິດປະຈຳວັນໄດ້.

- ນັກຮຽນໄດ້ປະຕິບັດກິດຈະກຳຕາມການແນະນຳຂອງຄູ.

## 5. ແນະນຳການນຳໃຊ້ສື່ການສອນ

ການນຳໃຊ້ສື່ການສອນນີ້ເປັນປັດໃຈທີ່ສຳຄັນ ເຊິ່ງກຳນົດວ່າການນຳສະເໜີນັ້ນມີປະສິດທິຜົນເທົ່າໃດ. ການນຳໃຊ້ສື່ການສອນ ແມ່ນມີປະສິດທິຜົນ ທ່ານຈະໄດ້ຮັບຄວາມສົນໃຈຈາກຜູ້ຟັງໃນເວລາສອນ ແລະ ສາມາດເລັ່ງໃສ່ຈຸດທີ່ສຳຄັນ. ສື່ການສອນແມ່ນສິ່ງທີ່ນັກຮຽນສາມາດແນມເຫັນ ແລະ ຊ່ວຍໃຫ້ຄູສາມາດສົ່ງຄວາມຮູ້ໃຫ້ນັກຮຽນໄດ້ໄວ. ສື່ການສອນບາງຊະນິດທີ່ໄດ້ນຳໃຊ້ມີດັ່ງນີ້:

1. ນຳໃຊ້ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ ວິຊາ "ທຸລະກິດ"
2. ວັດຖຸປະຈັກຕາ ຮູບພາບຕົວຈິງ, ຮູບແຕ້ມ, ວັດຖຸຕົວຈິງ, ແຜ່ນໃສ (ຖ້າມີ)
3. ບັດຄຳ (ສີແຕກຕ່າງກັນ) ແລະ ເຈ້ຍຂາວແຜ່ນໃຫຍ່ສຳລັບຂຽນຫົວຂໍ້ຄວາມຕ່າງໆ (ຖ້າມີ)



kabm6-12-tg-v2.indb 3 23/03/2015 09:13:46

## 6. ແນະນຳການວັດ ແລະ ປະເມີນຜົນ

ການວັດ ແລະ ປະເມີນຜົນການຮຽນແມ່ນສິ່ງທີ່ດີເພາະຈະໄດ້ຮູ້ວ່ານັກຮຽນໄດ້ຮັບຄວາມຮູ້ໜ້ອຍຫຼາຍປານໃດ. ການວັດຄວນຈະປະຕິບັດໄດ້ 3 ໄລຍະຄື:

- ວັດຜົນກ່ອນການສອນ ແມ່ນການວັດຄວາມຮູ້ຂອງນັກຮຽນກ່ອນການສອນບົດຮຽນໃໝ່ດ້ວຍການຖາມ ແລະ ສົນທະນາ ເພື່ອຢັ່ງເບິ່ງຄວາມພ້ອມຂອງນັກຮຽນວ່າມີຄວາມຮູ້ໃນເລື້ອງທີ່ຈະສອນໃນຊົ່ວໂມງນີ້ໜ້ອຍຫຼາຍປານໃດ ເພື່ອຄູຈະໄດ້ຫາວິທີສິ່ງຄວາມຮູ້ໃຫ້ງ່າຍຂຶ້ນ.

- ການວັດຜົນລະຫວ່າງການສອນ ແມ່ນການວັດຜົນໃນລະຫວ່າງຄູກຳລັງສອນ ຫຼື ພາຍຫຼັງທີ່ນັກຮຽນກຳລັງສຳເລັດການປະຕິບັດກິດຈະກຳໃດໜຶ່ງເພື່ອກວດເບິ່ງວ່າ ນັກຮຽນຈຳນວນໜ້ອຍຫຼາຍປານໃດສາມາດເຮັດສຳເລັດ ແລະ ບໍ່ສຳເລັດກິດຈະກຳ ຫຼື ບົດເຝິກຫັດທີ່ຄູວາງໃຫ້ເພື່ອຈະຊອກຫາວິທີຊ່ວຍເຫຼືອນັກຮຽນຖືກຕ້ອງ ແລະ ທັນການ.

- ການວັດຜົນຫຼັງການສອນ ແມ່ນການວັດຜົນຫຼັງການຮຽນຈົບບົດຮຽນໜຶ່ງໆ. ຄູດຳເນີນການວັດ ເພື່ອໃຫ້ຮູ້ວ່າໃນຊົ່ວໂມງນີ້ນັກຮຽນບັນລຸຕາມຈຸດປະສົງຂອງບົດຮຽນໜ້ອຍຫຼາຍປານໃດນັກຮຽນຈັກຄົນທີ່ຄວນໃຫ້ການຊ່ວຍເຫຼືອ ແລະ ຊ່ວຍເຫຼືອໃນດ້ານໃດ.

ວິທີການວັດ ຄູຄວນໃຊ້ຫຼາຍຮູບການອີງຕາມຄວາມເໝາະສົມແຕ່ລະຢ່າງເຊັ່ນ: ສັງເກດຈາກການເຮັດກິດຈະກຳ, ຕັ້ງຄຳຖາມໃຫ້ນັກຮຽນຕອບ, ກວດກາ ແລະ ບັນທຶກຜົນງານຂອງນັກຮຽນ. ການບັນທຶກຜົນງານຈາກການວັດຄູຄວນສ້າງຕາຕະລາງ ໂດຍມີຊື່ນັກຮຽນ ແລະ ຈຸດປະສົງການຮຽນ ໃນແຕ່ລະທັກສະເພື່ອສະດວກໃຫ້ແກ່ຄູໃນການຊ່ວຍເຫຼືອພວກເຂົາເຈົ້າ.

## 7. ແນະນຳການສ້າງແຜນການສອນປະຈຳປີ

ການສ້າງແຜນສິດສອນປະຈຳປີ ຜູ້ສອນຕ້ອງໄດ້ສຶກສາບັນຫາສິ່ງສຳຄັນດັ່ງນີ້:

- ສຶກສາຕາຕະລາງການສອນແຕ່ລະວິຊາ ຂອງແຕ່ລະຫ້ອງຕາມຕາຕະລາງສິດສອນປະຈຳສົກຮຽນຂອງໂຮງຮຽນ.

- ສຶກສາແຜນປະຕິບັດງານຂອງວິຊາການທີ່ກ່ຽວຂ້ອງກັບການສອນ ໂດຍອີງໃສ່ເງື່ອນໄຂຕ່າງໆເຊັ່ນ: ມື້ພັກຮຽນຢູ່ໃນສົກຮຽນ, ມື້ເລີ່ມຕົ້ນສອນ, ໄລຍະເວລາທວນຄືນ ແລະ ເວລາສອບເສັງພາກຮຽນທີ I-II.



kabm6-12-tg-v2.indb 4 23/03/2015 09:13:46

# ຕົວຢ່າງແຜນການສອນປະຈຳສົກຮຽນ:

| ເດືອນ | ອາທິດ | ຊົ່ວໂມງ | ເນື້ອໃນ | ໝາຍເຫດ |
|---|---|---|---|---|
| 9 | 1-2 | 4 | **ບົດທີ 1 ຂ້ອຍຈະຈັດຕັ້ງທຸລະກິດໄດ້ແນວໃດ**<br>**I. ເງິນທຶນທີ່ຈຳເປັນໃນການເລີ່ມຕົ້ນເຮັດທຸລະກິດ**<br>1. ການຄາດຄະເນເງິນທຶນເລີ່ມຕົ້ນເຮັດທຸລະກິດມີຈັກຢ່າງ?<br>**II. ການໄດ້ຮັບເງິນໃນການເລີ່ມຕົ້ນເຮັດທຸລະກິດ**<br>**ຄຳຖາມກ່ຽວກັບການໄດ້ຮັບເງິນທຶນ:**<br>1) ເງິນທຶນທັງໝົດທີ່ຕ້ອງການສາມາດຢືມໄດ້ບໍ່?<br>2) ເງິນທຶນສາມາດໄດ້ມາຈາກໃສ?<br>3) ສິນເຊື່ອ ຫຼື ໜີ້ການເງິນສາມາດໄດ້ມາຈາກໃສ?<br>4) ຕົວອັກສອນຕົວ 5 Cs ກ່ຽວກັບສິນເຊື່ອມີຫຍັງແດ່<br>5) ເຮັດແນວໃດໂອກາດທີ່ຈະກູ້ຢືມເງິນໄດ້ຈຶ່ງຈະມີຫຼາຍຂຶ້ນ, ໂດຍສະເພາະນັກທຸລະກິດທີ່ເປັນຜູ້ຍິງອາດຕ້ອງປະເຊີນໜ້າກັບອຸປະສັກໃນການເຂົ້າຫາສິນເຊື່ອ?<br>6) ຈະນຳໃຊ້ທຶນແນວໃດ?<br>ກ. ມູນຄ່າໃຊ້ຈ່າຍເລີ່ມຕົ້ນ.<br>ຂ. ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດ.<br>ຄ. ຄ່າໃຊ້ຈ່າຍສ່ວນຕົວ.<br>1. ແຫຼ່ງທຶນຂອງທຸລະກິດແມ່ນໄດ້ມາຈາກໃສ?<br>1.1. ແຫຼ່ງທຶນຕົນເອງ<br>1.2. ການກູ້ຢືມຈາກສະຖາບັນການເງິນ<br>1.3. ການພິຈາລະນາໃນການສະໝັກຂໍກູ້ຢືມເງິນມາເຮັດທຸລະກິດ.<br>1.4. ມາດຖານການປະເມີນແຫຼ່ງເງິນກູ້<br>1.5. ຄວາມກັງວົນຂອງພະນັກງານຜູ້ໃຫ້ກູ້ຢືມເງິນ | |



kabm6-12-tg-v2.indb 5 23/03/2015 09:13:46

| ເດືອນ | ອາທິດ | ຊົ່ວໂມງ | ເນື້ອໃນ | ໝາຍເຫດ |
|---|---|---|---|---|
| | | | 2. ແຫຼ່ງທີ່ມາຂອງທຸລະກິດການເງິນ<br>3. ເງິນຫຸ້ນ ແລະ ເງິນທຶນ | |
| 9 | 3-4 | 4 | **ບົດທີ 2 ຂ້ອຍຈະດຳເນີນທຸລະກິດໄດ້ແນວໃດ**<br>**I. ຮູ້ຈັກຕົ້ນທຶນການຜະລິດຂອງທຸລະກິດ**<br>1. ຄ່າໃຊ້ຈ່າຍທາງກົງ ແລະ ທາງອ້ອມ ໝາຍເຖິງຫຍັງ?<br>2. ການຈັດແບ່ງຄ່າໃຊ້ຈ່າຍຕາມເງື່ອນໄຂແມ່ນແນວໃດ?<br>2.1 ເງື່ອນໄຂຂອງຄ່າໃຊ້ຈ່າຍ<br>2.2 ຄ່າໃຊ້ຈ່າຍສຳລັບພະນັກງານ<br>2.3 ຕົ້ນທຶນວັດຖຸ<br>2.5 ຄ່າໃຊ້ຈ່າຍອື່ນໆ<br>2.5 ຄ່າໃຊ້ຈ່າຍຕົ້ນທຶນ<br>2.6 ຄິດໄລ່ຄ່າຫຼຸ້ຍຫ້ຽນນີ້ແນວໃດ?<br>2.7 ການຄາດຄະເນຄ່າໃຊ້ຈ່າຍ<br>2.8 ການຄາດຄະເນຄ່າໃຊ້ຈ່າຍປະຈຳເດືອນສຳລັບປີ<br>**II. ການບໍລິຫານການເງິນ**<br>1. ຄຳຖາມສຳຄັນກ່ຽວກັບການເກັບກຳການບັນທຶກມີ:<br>1.1 ເປັນຫຍັງຕ້ອງບັນທຶກ?<br>1.2 ຈະສາມາດສ້າງລະບົບການບັນທຶກໄດ້ດີແນວໃດ?<br>1.3 ແມ່ນຫຍັງທີ່ຜູ້ອື່ນຢາກຮູ້ກ່ຽວກັບການເງິນຂອງທຸລະກິດພວກນ້ອງ?<br>1.4 ທຸລະກິດຂະໜາດນ້ອຍຄວນເກັບບັນທຶກຫຍັງແດ່? | |



kabm6-12-tg-v2.indb 6 23/03/2015 09:13:46

| ເດືອນ | ອາທິດ | ຊົ່ວໂມງ | ເນື້ອໃນ | ໝາຍເຫດ |
|---|---|---|---|---|
| | | | 1.5 ແມ່ນຜູ້ໃດທີ່ຈະຕ້ອງຮັບຜິດຊອບເກັບກຳບັນທຶກການເງິນ?<br>1.6 ມັນແມ່ນທາງທີ່ດີທີ່ຈະເກັບຮັກສາເງິນທຸລະກິດກັບເງິນໃຊ້ຈ່າຍໃນຄອບຄົວໄວ້ນຳກັນບໍ່?<br>2. ການປະເມີນດ້ານການເງິນແມ່ນແນວໃດ?<br>3. ຈະສ້າງແຜນການຂອງກະແສເງິນສົດໄດ້ຄືແນວໃດ.<br>4. ການຄາດຄະເນການນຳໃຊ້ກະແສເງິນສົດແມ່ນແນວໃດ? | |
| 10 | 5 | 2 | **ບົດທີ 3 ຂັ້ນຕອນຕໍ່ໄປເພື່ອຈະກາຍເປັນນັກທຸລະກິດມືຈັກຂັ້ນຕອນ**<br>**I. ການກະກຽມແຜນທຸລະກິດ**<br>❖ ຄຳຖາມກ່ຽວກັບການວາງແຜນທຸລະກິດ<br>1) ແຜນທຸລະກິດແມ່ນຫຍັງ?<br>2) ເປັນຫຍັງຈຶ່ງຕ້ອງຂຽນແຜນທຸລະກິດ?<br>3) ເມື່ອໃດຈຶ່ງຕ້ອງຂຽນແຜນທຸລະກິດ?<br>4) ມີແຜນທຸລະກິດປະເພດໃດແດ່?<br>5) ແມ່ນໃຜເປັນຜູ້ຂຽນແຜນທຸລະກິດ?<br>6) ແຜນທຸລະກິດຂຽນໄດ້ແນວໃດ?<br>7) ຈະເອົາແຜນທຸລະກິດໄປເຮັດຫຍັງ?<br>8) ແຜນທຸລະກິດມີຮູບຮ່າງລັກສະນະຄືແນວໃດ<br>9) ມີຫຍັງແດ່ທີ່ປະກອບເຂົ້າໃນແຜນທຸລະກິດ?<br>10) ແຜນທຸລະກິດມີໂຄງຮ່າງການປະກອບຄືແນວໃດ? | |

| ເດືອນ | ອາທິດ | ຊົ່ວໂມງ | ເນື້ອໃນ | ໝາຍເຫດ |
|---|---|---|---|---|
| 10 | 6 | 2 | **ບົດທີ 4 ວິທີອະທິບາຍແຜນດຳເນີນທຸລະກິດສ່ວນຕົວຢ່າງລະອຽດ**<br>**I. ວິທີອະທິບາຍແຜນທຸລະກິດຢ່າງລະອຽດມີຄືແນວໃດ**<br>**❖ ມາດຕະຖານແຜນທຸລະກິດ**<br>1) ບົດສະຫຼຸບສຳລັບຜູ້ບໍລິຫານ<br>2) ແນວຄິດທຸລະກິດ ແລະ ການຕະຫຼາດ<br>3) ແຜນການການຕະຫຼາດກ່ຽວກັບຜະລິດຕະພັນ<br>4) ແຜນການ ການຕະຫຼາດກ່ຽວກັບລາຄາ<br>5) ແຜນການຕະຫຼາດກ່ຽວກັບສະຖານທີ່<br>6) ແຜນການຕະຫຼາດກ່ຽວກັບການສົ່ງເສີມການຂາຍ<br>7) ຮູບແບບທາງກົດໝາຍ:<br>8) ເງິນທຶນເບື້ອງຕົ້ນ:<br>9) ແຫຼ່ງເງິນກູ້ທຶນເບື້ອງຕົ້ນ<br>10) ການຈັດຕັ້ງ ແລະ ພະນັກງານ<br>11) ຕົ້ນທຶນ ແລະ ຄ່າໃຊ້ຈ່າຍຕ່າງໆໃນການດຳເນີນທຸລະກິດ<br>12) ແຜນການກ່ຽວກັບກະແສເງິນສົດ<br>13) ກຳໄລ<br>14) ຍອດຍົກມາ | |

## 8. ແນະນຳການແຕ່ງບົດສອນ

ການສອນ ວິຊາ "ທຸລະກິດ" ຢູ່ຊັ້ນມັດທະຍົມຕອນປາຍປີທີ 6 ກ່ອນອື່ນໝົດຄູຕ້ອງສຶກສາໃຫ້ເຂົ້າໃຈກ່ຽວກັບຈຸດເປົ້າໝາຍ, ສະມັດຖະພາບຂັ້ນພື້ນຖານໃນດ້ານການຮຽນ-ການສອນ ແລະ ຈຸດປະສົງສະເພາະບົດຕາມຫຼັກສູດການຮຽນການສອນທີ່ສະເໜີຢູ່ໃນແຕ່ລະບົດ. ໂດຍອີງໃສ່ປຶ້ມຄູ່ມືຄູທີ່ທາງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ໄດ້ຮຽບຮຽງ ແລະ ສ້າງຂຶ້ນ.



kabm6-12-tg-v2.indb 8 23/03/2015 09:13:46

**ການແຕ່ງບົດສອນຕ້ອງປະກອບດ້ວຍຂັ້ນຕອນ:**

1. ລາຍລະອຽດຂອງວິຊາ, ໂຄງສ້າງລາຍລະອຽດຂອງວິຊາ, ໂຄງສ້າງຂອງບົດ ແລະ ການແຕ່ງບົດສອນປະກອບມີ 5 ຂັ້ນຕອນດັ່ງນີ້:

2. ຈຸດປະສົງ

3. ເນື້ອໃນ

4. ສື່ການຮຽນ-ການສອນ

5. ກິດຈະກຳການຮຽນ-ການສອນ

6. ການວັດ ແລະ ປະເມີນຜົນ

## 9. ແນະນຳການສອນແຕ່ລະບົດ



kabm6-12-tg-v2.indb 9 23/03/2015 09:13:46

# ບົດທີ 1
# ຂ້ອຍຈະຈັດຕັ້ງທຸລະກິດໄດ້ແນວໃດ

**ຈຳນວນ 4 ຊົ່ວໂມງ**

## 1. ຈຸດປະສົງ

**ກິດຈະກຳ I. ການເລືອກຕະຫຼາດທີ່ເໝາະສົມ**

**ໃຫ້ນັກຮຽນສາມາດ:**

- ເຫັນໄດ້ເຖິງຄວາມແຕກຕ່າງລະຫວ່າງຈຳນວນເງິນທີ່ຈ່າຍກ່ອນການເຮັດທຸລະກິດ
- ແລະ ຈຳນວນເງິນທີ່ຈ່າຍໃນເວລາເລີ່ມຕົ້ນທຸລະກິດ.
- ປະເມີນຈຳນວນເງິນທີ່ຕ້ອງການເພື່ອເລີ່ມຕົ້ນເຮັດທຸລະກິດນັ້ນມີຫຼາຍເທົ່າໃດ.
- ຄິດໄລ່ການຄາດຄະເນຈຳນວນເງິນທີ່ຈ່າຍໃນໄລຍະກ່ອນ ແລະ ຫຼັງການເລີ່ມຕົ້ນເຮັດທຸລະກິດ.

**ກິດຈະກຳ II. ການໄດ້ຮັບເງິນເພື່ອເລີ່ມຕົ້ນເຮັດທຸລະກິດ**

**ໃຫ້ນັກຮຽນສາມາດ:**

- ກຳນົດຜົນດີ ແລະ ຜົນເສຍຂອງການນຳໃຊ້ແຫຼ່ງເງິນທຶນຕ່າງໆເຂົ້າໃນການເລີ່ມຕົ້ນເຮັດທຸລະກິດ.
- ເຂົ້າໃຈເຖິງຂໍ້ຈຳກັດຂອງບົດບາດ ຍິງ-ຊາຍ ກ່ຽວກັບດ້ານການເງິນ.
- ຮູ້ກ່ຽວກັບແຫຼ່ງທີ່ມາຂອງທຸລະກິດການເງິນ, ປະເພດເງິນທຶນຫຸ້ນ, ຜົນດີ ແລະ ຜົນເສຍຂອງມັນ.

## 2. ເນື້ອໃນຕົ້ນຕໍ

**ກິດຈະກຳ I. ເງິນທຶນທີ່ຈຳເປັນໃນການເລີ່ມຕົ້ນເຮັດທຸລະກິດ**

ການສ້າງຕັ້ງທຸລະກິດໃດໜຶ່ງ ມັນຮຽກຮ້ອງໃຫ້ມີເງິນຈຳນວນໜຶ່ງທີ່ຈະຕ້ອງມີການໃຊ້ຈ່າຍກ່ອນທີ່ກິດຈະກຳຂອງທຸລະກິດສາມາດເລີ່ມຕົ້ນສ້າງລາຍຮັບຈາກການຂາຍ. ນັກທຸລະກິດຫຼາຍຄົນມັກຈະປະເມີນຈຳນວນເງິນທຶນທີ່ຕ້ອງການນັ້ນຕ່ຳເກີນໄປ ເພາະວ່າພວກເຂົາເຈົ້າຄິດໄລ່ຄ່າໃຊ້ຈ່າຍພຽງແຕ່ສຳລັບການລົງທຶນຊື້ເຄື່ອງຈັກອຸປະກອນ, ພາຫະນະ ແລະ ສິ່ງອື່ນໆ. ພວກເຂົາເຈົ້າບໍ່ໄດ້ຄຳນຶງເຖິງໄລຍະຂອງອາທິດທຳອິດ ຫຼື ເດືອນທຳອິດຈະມີຫຼາຍຢ່າງທີ່ຈຳເປັນຕ້ອງໃຊ້ຈ່າຍໃນການດຳເນີນທຸລະກິດ ເຊັ່ນວ່າ: ການຄ້າ, ການຜະລິດ ຫຼື ການບໍລິການ. ໝາຍຄວາມວ່າລາຍໄດ້ຈາກການຂາຍຈະບໍ່ກວມເອົາຄ່າໃຊ້ຈ່າຍສຳລັບທຸລະກິດທີ່ກຳລັງດຳເນີນຢູ່. ສິ່ງເຫຼົ່ານີ້ສາມາດນຳໄປສູ່ບັນຫາການຂາດຄວາມສອດຄ່ອງຂອງນັກທຸລະກິດທີ່ບໍ່ສາມາດຈ່າຍເງິນເດືອນ



kabm6-12-tg-v2.indb 10 23/03/2015 09:13:46

ໃຫ້ພະນັກງານ ຫຼື ຜູ້ສະໜອງ. ຈຳນວນເງິນທີ່ຈຳເປັນເພື່ອຈະນຳມາເປັນເງິນທຶນທຶນຂອງການເລີ່ມຕົ້ນທຸລະກິດນັ້ນ. ໂດຍທົ່ວໄປແລ້ວຈະຕ້ອງມີຫຼາຍກວ່າຈຳນວນເງິນທີ່ນັກທຸລະກິດຜູ້ຍິງ ຫຼື ຜູ້ຊາຍມີຢູ່ໃນຖົງຂອງຕົນເອງ. ມັນຕ້ອງໄດ້ຊອກຫາເອົາມາຈາກຫຼາຍບ່ອນ, ມັນເປັນສິ່ງທີ່ຈຳເປັນຕ້ອງໄດ້ຮູ້ຢ່າງຊັດເຈນວ່າເງິນທຶນທີ່ຕ້ອງການນັ້ນມີຈຳນວນເງິນຫຼາຍເທົ່າໃດ.

**ກິດຈະກຳ II. ການໄດ້ຮັບເງິນໃນການເລີ່ມຕົ້ນທຸລະກິດ**

ຄວາມຄາດຫວັງຫຼາຍຢ່າງຂອງຜູ້ເປັນເຈົ້າຂອງທຸລະກິດຂະໜາດນ້ອຍ ມີແນວຄວາມຄິດ ແລະ ແຜນການທີ່ດີ. ເຖິງແນວໃດກໍຕາມ, ພວກເຂົາອາດຈະພົບວ່າເງິນທຶນ ທີ່ຈຳເປັນສຳລັບການເລີ່ມຕົ້ນທຸລະກິດຈະບໍ່ໄດ້ມາແບບງ່າຍດາຍ. ດ້ວຍເຫດຜົນເຫຼົ່ານັ້ນ, ຄວາມຄາດຫວັງຫຼາຍຢ່າງຂອງທຸລະກິດຂະໜາດນ້ອຍຈຶ່ງບໍ່ເຄີຍໄດ້ຮັບການດຳເນີນການ. ນັກຮຽນຄວນຄຳນຶງເຖິງປະເພດຂອງເງິນທຶນທີ່ມີຕໍ່ຄວາມຫວັງຂອງຜູ້ເປັນເຈົ້າຂອງທຸລະກິດ, ຄວນຈະເນັ້ນໜັກໃສ່ການກຽມຄວາມພ້ອມ ແລະ ການວາງແຜນ ທີ່ຈະເພີ່ມໂອກາດຄວາມເປັນໄປໄດ້ຂອງການໄດ້ຮັບເງິນທຶນທີ່ຈຳເປັນມາ.

ແນ່ນອນຢູ່ແລ້ວ ນັກທຸລະກິດຈະຕ້ອງມີເງິນລົງທຶນເປັນຂອງຕົນເອງເກືອບໝົດໃນທຸລະກິດ. ເຖິງຢ່າງໃດກໍຕາມ, ເງິນທຶນທີ່ຈຳເປັນສ່ວນໜຶ່ງໃນການເລີ່ມຕົ້ນດຳເນີນທຸລະກິດ ສາມາດໄດ້ມາຈາກສິນເຊື່ອ. ຫົວຂໍ້ນີ້ຈະລະບຸແຫຼ່ງທີ່ມາຂອງເງິນທຶນ ທີ່ເປັນທ່າແຮງຂອງເງິນລົງທຶນເບື້ອງຕົ້ນ ແລະ ແນະນຳກ່ຽວກັບວິທີການກຽມຄວາມພ້ອມສຳລັບການຮັບມືກັບໜີ້ສິນ ຫຼື ເງິນກູ້ຢືມແນວໃດ.

## 3. ສື່ການສອນ

**ກິດຈະກຳ I. ເງິນທຶນທີ່ຈຳເປັນໃນການເລີ່ມຕົ້ນເຮັດທຸລະກິດ**

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ວິຊາ ທຸລະກິດ ມ.6
- ເອກະສານປະກອບ ຫຼື ເຈ້ຍຄຳຖາມ ແລະ ຄຳຕອບທີ່ກ່ຽວຂ້ອງ.
- ກະດານດຳ ຫຼື ຂາວ.

**ກິດຈະກຳ II. ການໄດ້ຮັບເງິນໃນການເລີ່ມຕົ້ນທຸລະກິດ**

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ວິຊາ ທຸລະກິດ ມ.6
- ເອກະສານປະກອບ ຫຼື ເຈ້ຍຄຳຖາມ ແລະ ຄຳຕອບທີ່ກ່ຽວຂ້ອງ.
- ກະດານດຳ ຫຼື ຂາວ.



kabm6-12-tg-v2.indb 11 23/03/2015 09:13:46

## 4. ວິທີດຳເນີນການສອນ

### ກິດຈະກຳ I. ເງິນທຶນທີ່ຈຳເປັນໃນການເລີ່ມຕົ້ນເຮັດທຸລະກິດ

**1) ການກະກຽມ**

- ເນື້ອໃນບົດຮຽນ, ຄຳຖາມທີ່ກ່ຽວຂ້ອງ ເຊິ່ງຢູ່ໃນປຶ້ມຄູ່ມືຄູ ວິຊາ: ທຸລະກິດ ມ.6
- ຄຳຖາມບົດເຝິກຫັດທີ 1, 2 ແລະ ຄຳຕອບບົດເຝິກຫັດທີ 1, 2
- ສ້າງເຄື່ອງມືວັດ ແລະ ປະເມີນຜົນຕາມແຕ່ລະຂັ້ນຕອນຕາມຄວາມເໝາະສົມ.

**2) ຂັ້ນຕອນການສອນ**

- ຄູນຳພານັກຮຽນສ້າງບັນຍາກາດກ່ອນການເຂົ້າສູ່ບົດຮຽນຕົວຈິງ.
- ຄູຕັ້ງຄຳຖາມກ່ຽວກັບບົດຮຽນເກົ່າທີ່ຮຽນຜ່ານມາໃຫ້ນັກຮຽນອາສາສະໝັກຕອບ.
- ຫຼັງຈາກນັກຮຽນຕອບແລ້ວ ຄູສະຫຼຸບຄືນໃຫ້ນັກຮຽນຟັງ ພ້ອມທັງຖາມຄືນບົດຮຽນຜ່ານມາ ຍັງມີຈຸດໃດທີ່ບໍ່ເຂົ້າໃຈ ຄູອະທິບາຍເພີ່ມເຕີມ.

**ຂັ້ນຕອນທີ 1**

- ຄູນຳເຂົ້າສູ່ບົດຮຽນໂດຍການບັນລະຍາຍຕາມແຕ່ລະຫົວຂໍ້ຈາກປຶ້ມແບບຮຽນຖ້າມີເງື່ອນໄຂຄູສາມາດນຳໜັງສືພິມ, ວາລະສານ ຫຼື ສາຍແຜ່ນຊີດີໃຫ້ນັກຮຽນເບິ່ງ.

ຄູຕັ້ງຫົວຂໍ້ສົນທະນາກັບນັກຮຽນຕາມແຕ່ລະຂໍ້ດັ່ງນີ້:

1) ການຄາດຄະເນເງິນທຶນເລີ່ມຕົ້ນເຮັດທຸລະກິດມີຈັກຢ່າງ?

- ການດຳເນີນການຈ່າຍເງິນລ່ວງໜ້າ ຫຼື ເງິນລົງທຶນ
- ການລິເລີ່ມດຳເນີນການຈ່າຍເງິນ ຫຼື ທຶນໝູນວຽນ

- ຫຼັງຈາກສົນທະນາກັນແລ້ວ ຄູອະທິບາຍ, ສະຫຼຸບ ແລະ ໃຫ້ນັກຮຽນຈົດເອົາເປັນບົດຮຽນໂດຍອີງຕາມປຶ້ມແບບຮຽນຂອງແຕ່ລະຫົວຂໍ້.

**ຂັ້ນຕອນທີ 2**

- ຄູຕັ້ງຄຳຖາມກ່ຽວກັບຫົວຂໍ້ທີ່ຮຽນຜ່ານມາອີກເທື່ອໜຶ່ງ ແລ້ວໃຫ້ນັກຮຽນອາສາສະໝັກຕອບ 1-2 ຄົນ ຫຼື ຄູຈະບົ່ງຕົວເອົາກໍໄດ້.
- ຫຼັງຈາກນັກຮຽນຕອບແລ້ວ ຄູກ່າວຄຳຍ້ອງຍໍຊົມເຊີຍ ແລະ ໃຫ້ຄະແນນ.
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ ກຸ່ມລະ 4-5 ຄົນ.
- ຄູຢາຍເຈ້ຍຄຳຖາມບົດເຝິກຫັດທີ 1, 2 ໃຫ້ແຕ່ລະກຸ່ມອ່ານ ຫຼື ຄູອາດຈະແນະນຳແຕ່ລະກຸ່ມອ່ານຄຳຖາມບົດເຝິກຫັດທີ 1, 2 ໃນປຶ້ມແບບຮຽນກໍໄດ້.
- ໃຫ້ນັກຮຽນແຕ່ລະຄົນໃນກຸ່ມຮ່ວມກັນຕອບບົດເຝິກຫັດທີ 1, 2 ແລ້ວໃຫ້ຕາງໜ້າ ແຕ່ລະກຸ່ມຂຶ້ນລາຍງານຜົນການຄົ້ນຄວ້າ ແລະ ໃຫ້ໝູ່ເພື່ອນປະກອບຄຳເຫັນເພີ່ມເຕີມ.

- ຄູສະຫຼຸບເນື້ອໃນບົດເຝິກຫັດທີ 1, 2 ໃຫ້ຖືກຕ້ອງຊັດເຈນ ແລະ ຍ້ອງຍໍ.
- ຄູສະຫຼຸບບົດຮຽນແຕ່ລະຫົວຂໍ້ທີ່ຮຽນມາໃນຊົ່ວໂມງນີ້ໂດຍຫຍໍ້.
- ຄູແນະນຳໃຫ້ນັກຮຽນອ່ານຄົ້ນຄວ້າຫົວຂໍ້ທີ່ຈະຮຽນຕໍ່ໄປ ກ່ອນກ້າວເຂົ້າສູ່ບົດຮຽນໃໝ່.

**3) ແນະນຳ**

ຂັ້ນຕອນການເຂົ້າສູ່ບົດຮຽນ ຫຼື ການສອນ, ຄູສາມາດນຳສະເໜີຮູບພາບ, ໜັງສືພິມ ຫຼື ຂໍ້ມູນຂ່າວສານຕ່າງໆທີ່ມີເນື້ອໃນກ່ຽວຂ້ອງກັບບົດຮຽນ.

**4) ແຫຼ່ງຂໍ້ມູນເພີ່ມເຕີມ**

ຖ້າມີເງື່ອນໄຂ ກໍລະນີໃຫ້ສຶກສາເອົາເນື້ອໃນທີ່ກ່ຽວຂ້ອງຈາກຫຼາຍແຫຼ່ງ ເຊັ່ນ: ໂທລະພາບ, ໜັງສືພິມ, ແລະ ເອກະສານທີ່ກ່ຽວຂ້ອງກັບ ວິຊາ: ທຸລະກິດ.

**5) ເອກະສານປະກອບ**

- ເຈ້ຍຄຳຖາມ ແລະ ຄຳຕອບບົດເຝິກຫັດທີ 1, 2

**ກິດຈະກຳ II. ການໄດ້ຮັບເງິນໃນການເລີ່ມຕົ້ນທຸລະກິດ**

**1) ການກະກຽມ**

- ເນື້ອໃນບົດຮຽນ, ຄຳຖາມທີ່ກ່ຽວຂ້ອງ ເຊິ່ງຢູ່ໃນປື້ມຄູ່ມືຄູ ວິຊາ: ທຸລະກິດ ມ.6
- ກໍລະນີສຶກສາທີ 1 ແລະ ບົດເຝິກຫັດທີ 3
- ສ້າງເຄື່ອງມືວັດ ແລະ ປະເມີນຜົນຕາມແຕ່ລະຂັ້ນຕອນຕາມຄວາມເໝາະສົມ.

**2) ຂັ້ນຕອນການສອນ**

- ຄູນຳພານັກຮຽນສ້າງບັນຍາກາດກ່ອນການເຂົ້າສູ່ບົດຮຽນຕົວຈິງ.
- ຄູຕັ້ງຄຳຖາມກ່ຽວກັບບົດຮຽນເກົ່າທີ່ຮຽນຜ່ານມາໃຫ້ນັກຮຽນອາສາສະໝັກຕອບ.
- ຫຼັງຈາກນັກຮຽນຕອບແລ້ວ ຄູສະຫຼຸບຄືນໃຫ້ນັກຮຽນຟັງ ພ້ອມທັງຖາມຄືນບົດຮຽນຜ່ານມາ ຍັງມີຈຸດໃດທີ່ບໍ່ເຂົ້າໃຈຄູອະທິບາຍເພີ່ມເຕີມ.

**ຂັ້ນຕອນທີ 1**

- ຄູນຳເຂົ້າສູ່ບົດຮຽນໂດຍການບັນລະຍາຍຕາມແຕ່ລະຫົວຂໍ້ຈາກປື້ມແບບຮຽນ ຖ້າມີເງື່ອນໄຂຄູສາມາດນຳໜັງສືພິມ, ວາລະສານ ຫຼື ສາຍແຜ່ນຊີດີໃຫ້ນັກຮຽນເບິ່ງ.
- ຄູຕັ້ງຫົວຂໍ້ສົນທະນາກັບນັກຮຽນຕາມແຕ່ລະຂໍ້ດັ່ງນີ້:
- ຄຳຖາມກ່ຽວກັບການໄດ້ຮັບເງິນທຶນ:

1) ເງິນທຶນທັງໝົດທີ່ຕ້ອງການສາມາດຢືມໄດ້ບໍ່?

2) ເງິນທຶນສາມາດໄດ້ມາຈາກໃສ?

3) ສິນເຊື່ອ ຫຼື ໜີ້ການເງິນສາມາດໄດ້ມາຈາກໃສ?



kabm6-12-tg-v2.indb 13 23/03/2015 09:13:46

4) ຕົວອັກສອນຕົວ 5 C's ກ່ຽວກັບສິນເຊື່ອມີຫຍັງແດ່? ເຮັດແນວໃດໂອກາດທີ່ຈະກູ້ຢືມເງິນໄດ້ຈຶ່ງຈະມີຫຼາຍຂຶ້ນ, ໂດຍສະເພາະນັກທຸລະກິດທີ່ເປັນຜູ້ຍິງອາດຕ້ອງປະເຊີນໜ້າກັບອຸປະສັກໃນການເຂົ້າຫາສິນເຊື່ອ?

5) ຈະນຳໃຊ້ທຶນແນວໃດ?

ກ. ມູນຄ່າໃຊ້ຈ່າຍເລີ່ມຕົ້ນ.

ຂ. ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດ.

ຄ. ຄ່າໃຊ້ຈ່າຍສ່ວນຕົວ.

- ຫຼັງຈາກສົນທະນາກັນແລ້ວ ຄູອະທິບາຍ, ສະຫຼຸບ ແລະ ໃຫ້ນັກຮຽນຈົດເອົາເປັນບົດຮຽນໂດຍອີງຕາມປຶ້ມແບບຮຽນຂອງແຕ່ລະຫົວຂໍ້.

**ຂັ້ນຕອນທີ 2**

- ຄູຈັດແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມກຸ່ມລະ 4-5 ຄົນ.

- ຄູຢາຍເຈ້ຍກໍລະນີສຶກສາທີ 1 ໃຫ້ແຕ່ລະກຸ່ມອ່ານ ຫຼື ຄູອາດຈະແນະນຳແຕ່ລະກຸ່ມອ່ານກໍລະນີສຶກສາທີ 1 ໃນປຶ້ມແບບຮຽນກໍໄດ້.

- ໃຫ້ນັກຮຽນແຕ່ລະຄົນໃນກຸ່ມຮ່ວມກັນຄົ້ນຄວ້າ ແລະ ຕອບບົດກໍລະນີສຶກສາ ແລ້ວໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານຜົນການຄົ້ນຄວ້າ.

- ຄູສະຫຼຸບເນື້ອໃນບົດກໍລະນີສຶກສາ ແລະ ຍ້ອງຍໍ.

**ຂັ້ນຕອນທີ 3**

- ຄູຈັດແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມຄືເກົ່າ.

- ຄູຢາຍເຈ້ຍບົດເຝິກຫັດທີ 3 ໃຫ້ແຕ່ລະກຸ່ມອ່ານຄົ້ນຄວ້າ ແລະ ຕອບຄຳຖາມແຕ່ລະຂໍ້ແລ້ວໃຫ້ແຕ່ລະຄົນໃນກຸ່ມຂຶ້ນລາຍງານຄຳຕອບຂອງແຕ່ລະຂໍ້.

- ຄູສະຫຼຸບເນື້ອໃນບົດເຝິກຫັດທີ 3 ໃຫ້ຖືກຕ້ອງ, ຊັດເຈນ ແລະ ຍ້ອງຍໍ.

**ຂັ້ນຕອນທີ 4**

- ຄູຕັ້ງຫົວຂໍ້ສົນທະນາກັບນັກຮຽນຕາມແຕ່ລະຂໍ້ດັ່ງນີ້:

❖ ຄຳຖາມກ່ຽວກັບການໄດ້ຮັບເງິນທຶນມີຫຍັງແດ່?

1. ຂໍ້ຈຳກັດຂອງບົດບາດ ຍິງ-ຊາຍ ກ່ຽວກັບການເຂົ້າເຖິງການເງິນ.

2. ແຫຼ່ງທຶນຂອງທຸລະກິດແມ່ນໄດ້ມາຈາກໃສ?

1) ແຫຼ່ງທຶນຕົນເອງ

2) ການກູ້ຢືມຈາກສະຖາບັນການເງິນ

3) ການພິຈາລະນາໃນການສະໝັກຂໍກູ້ຢືມເງິນມາເຮັດທຸລະກິດ.

4) ມາດຖານການປະເມີນແຫຼ່ງເງິນກູ້

5) ຄວາມກັງວົນຂອງພະນັກງານຜູ້ໃຫ້ກູ້ຢືມເງິນ

3. ແຫຼ່ງທີ່ມາຂອງທຸລະກິດການເງິນ

4. ເງິນຫຸ້ນ ແລະ ເງິນທຶນ

- ຄູສະຫຼຸບບົດຮຽນໃນແຕ່ລະຫົວຂໍ້ທີ່ຮຽນມາໃນຊົ່ວໂມງນີ້ໂດຍຫຍໍ້.
- ຄູແນະນຳໃຫ້ນັກຮຽນອ່ານຄົ້ນຄວ້າຫົວຂໍ້ທີ່ຈະຮຽນຕໍ່ໄປ ກ່ອນກ້າວເຂົ້າສູ່ບົດຮຽນໃໝ່.

**3) ແນະນຳ**

ຂັ້ນຕອນການເຂົ້າສູ່ບົດຮຽນ ຫຼື ການສອນ, ຄູສາມາດນຳສະເໜີຮູບພາບ, ໜັງສືພິມ ຫຼື ຂໍ້ມູນຂ່າວສານຕ່າງໆ ທີ່ມີເນື້ອໃນກ່ຽວຂ້ອງກັບບົດຮຽນ.

**4) ແຫຼ່ງຂໍ້ມູນເພີ່ມເຕີມ**

ຖ້າມີເງື່ອນໄຂ ກໍລະນີໃຫ້ສຶກສາເອົາເນື້ອໃນທີ່ກ່ຽວຂ້ອງຈາກຫຼາຍແຫຼ່ງ ເຊັ່ນ: ໂທລະພາບ, ໜັງສືພິມ, ແລະ ເອກະສານທີ່ກ່ຽວຂ້ອງກັບ ວິຊາ: ທຸລະກິດ.

**5) ເອກະສານປະກອບ**

- ບົດກໍລະນີສຶກສາ ແລະ ຄຳຕອບບົດເຝິກຫັດທີ 3.

## 5. ການວັດ ແລະ ປະເມີນຜົນ

**ສັງເກດຈາກ**

- ການຕອບຄຳຖາມຂອງນັກຮຽນແຕ່ລະຄົນ.
- ການເຮັດກິດຈະກຳຮ່ວມກັນຂອງນັກຮຽນແຕ່ລະກຸ່ມ.
- ການມີສ່ວນຮ່ວມອອກຄວາມຄິດຄວາມເຫັນ.
- ການສອບເສັງປະຈຳບົດ.

**ກິດຈະກຳ I. ບົດເຝິກຫັດ ແລະ ຄຳຕອບ**

**ບົດເຝິກຫັດທີ 1**: ໃຫ້ນັກຮຽນໃສ່ເຄື່ອງໝາຍ (✓) ໃສ່ຫ້ອງທີ່ເຫັນວ່າຖືກຕ້ອງທີ່ສຸດ ເງິນທຶນເລີ່ມຕົ້ນເຮັດທຸລະກິດທີ່ເອົາມາໃຊ້ຈ່າຍ

| ລາຍການຈ່າຍ | ກ່ອນເຮັດທຸລະກິດ | ເລີ່ມເຮັດທຸລະກິດ | ລາຍຈ່າຍອື່ນໆ |
|---|---|---|---|
| ຄ່າຈົດທະບຽນທຸລະກິດ | | | |
| ທຶນຈົດທະບຽນທຸລະກິດ | | | |

| | | | |
|---|---|---|---|
| ເງິນເດືອນພະນັກງານ<br>ເດືອນທຳອິດ | | | |
| ຄ່າທຳນຽມຂອງ<br>ສະຖາປະນິກ<br>ໃນການວາງແຜນ | | | |
| ຊື້ເຄື່ອງຈັກ | | | |
| ຊື້ວັດຖຸດິບ | | | |
| ຄ່າຕິດຕັ້ງໄຟຟ້າ<br>ໃສ່ເຄື່ອງຈັກ | | | |
| ຊື້ສິນຄ້າສຳເລັດຮູບ | | | |
| ຄ່າໂຄສະນາເປີດທຸລະກິດ | | | |
| ຄ່າເຊົ່າ/ຊື້ທີ່ດິນຢູ່ເຂດ<br>ພື້ນທີ່ອຸດສາຫະກຳ | | | |
| ຄ່າປຸກສ້າງເຮືອນພັກ | | | |
| ເງິນເດືອນເຈົ້າຂອງ<br>ທຸລະກິດເດືອນທຳອິດ | | | |
| ເຄື່ອງໃຊ້ຫ້ອງການ<br>ສຳລັບ 2 ເດືອນ | | | |
| ຄ່າຕິດຕັ້ງໄຟຟ້າ | | | |
| ຊື້ລິດບັນທຸກມືສອງ | | | |
| ຄ່າທີ່ປຶກສາດ້ານການລົງທຶນ | | | |
| ຄ່າເຊົ່າຫ້ອງການ | | | |
| ການຊື້ຫຸ້ນ | | | |



kabm6-12-tg-v2.indb 16 23/03/2015 09:13:47

| | | | |
|---|---|---|---|
| ຄ່າປະກັນອັກຄີໄພ | | | |
| ຄ່າປະກັນສຸຂະພາບ ຂອງພະນັກງານ | | | |
| ຄ່າລົດສ່ວນຕົວ ຂອງຄູ່ຜົວເມຍ ເຈົ້າຂອງທຸລະກິດ | | | |
| ການສົ່ງເສີມການຂາຍ | | | |
| ອຸປະກອນຄອມພິວເຕີ | | | |
| ຊື້ວັດຖຸກໍ່ສ້າງໂຮງງານ | | | |
| ຄ່າຮຽນຂອງລູກພະນັກງານ | | | |
| ຄ່າຕິດຕັ້ງໂທລະສັບ | | | |
| ໃບເກັບເງິນຄັ້ງທີ່ 1 ຂອງ ໂທລະສັບເດືອນທຳອິດ | | | |
| ຊື້ສິນຄ້າທົດແທນໄວ້ໃນສາງ | | | |
| ຄ່າເດີນທາງຜູ້ສະໜອງ ເຄື່ອງຈັກ | | | |
| ຄ່າປະກັນໄພລົດປີທຳອິດ | | | |
| ຄ່າບຳລຸງຮັກສາລົດຂົນສົ່ງ | | | |
| ອັດຕາດອກເບ້ຍ ຂອງສິນເຊື່ອ | | | |
| ໃຊ້ໜີ້ເງິນກູ້ຢືມຄືນໃຫ້ໝູ່ | | | |



kabm6-12-tg-v2.indb 17 23/03/2015 09:13:47

**ຄຳຕອບບົດເຝິກຫັດທີ 1**: ໃຫ້ນັກຮຽນໃສ່ເຄື່ອງໝາຍ (✓) ໃສ່ຫ້ອງທີ່ເຫັນວ່າຖືກຕ້ອງທີ່ສຸດ ເງິນທຶນເລີ່ມຕົ້ນເຮັດທຸລະກິດທີ່ເອົາມາໃຊ້ຈ່າຍ

| ລາຍການຈ່າຍ | ກ່ອນເຮັດທຸລະກິດ | ເລີ່ມເຮັດທຸລະກິດ | ລາຍຈ່າຍອື່ນໆ |
|---|---|---|---|
| ຄ່າຈົດທະບຽນທຸລະກິດ | | ✓ | |
| ທຶນຈົດທະບຽນທຸລະກິດ | ✓ | | |
| ເງິນເດືອນພະນັກງານ ເດືອນທຳອິດ | | ✓ | |
| ຄ່າທຳນຽມຂອງ ສະຖາປະນິກ ໃນການວາງແຜນ | ✓ | | |
| ຊື້ເຄື່ອງຈັກ | ✓ | | |
| ຊື້ວັດຖຸດິບ | ✓ | | |
| ຄ່າຕິດຕັ້ງໄຟຟ້າໃສ່ເຄື່ອງຈັກ | ✓ | | |
| ຊື້ສິນຄ້າສຳເລັດຮູບ | | ✓ | |
| ຄ່າໂຄສະນາເປີດທຸລະກິດ | ✓ | | |
| ຄ່າເຊົ່າ/ຊື້ທີ່ດິນຢູ່ເຂດພື້ນ ທີ່ອຸດສາຫະກຳ | ✓ | | |
| ຄ່າປຸກສ້າງເຮືອນພັກ | | | ✓ |
| ເງິນເດືອນເຈົ້າຂອງ ທຸລະກິດເດືອນ ທຳອິດ | | ✓ | |
| ເຄື່ອງໃຊ້ຫ້ອງການ ສຳລັບ 2 ເດືອນ | ✓ | | |
| ຄ່າຕິດຕັ້ງໄຟຟ້າ | ✓ | | |
| ຊື້ລົດບັນທຸກມືສອງ | | ✓ | |



kabm6-12-tg-v2.indb 18 23/03/2015 09:13:47

| | | | |
|---|---|---|---|
| ຄ່າທີ່ປຶກສາດ້ານການລົງທຶນ | | | ✓ |
| ຄ່າເຊົ່າຫ້ອງການ | | ✓ | |
| ການຊື້ຫຸ້ນ | | | ✓ |
| ຄ່າປະກັນອັກຄີໄພ | ✓ | | |
| ຄ່າປະກັນສຸຂະພາບ<br>ຂອງພະນັກງານ | | | ✓ |
| ຄ່າລົດສ່ວນຕົວ<br>ຂອງຄູ່ຜົວເມຍ<br>ເຈົ້າຂອງທຸລະກິດ | | | ✓ |
| ການສົ່ງເສີມການຂາຍ | | ✓ | |
| ອຸປະກອນຄອມພິວເຕີ | | | ✓ |
| ຊື້ວັດຖຸກໍ່ສ້າງໂຮງງານ | ✓ | | |
| ຄ່າຮຽນຂອງລູກພະນັກງານ | | | ✓ |
| ຄ່າຕິດຕັ້ງໂທລະສັບ | ✓ | | |
| ໃບເກັບເງິນຄັ້ງທີ່ 1 ຂອງ<br>ໂທລະສັບເດືອນທຳອິດ | | ✓ | |
| ຊື້ສິນຄ້າທົດແທນໄວ້ໃນສາງ | | | ✓ |
| ຄ່າເດີນທາງຜູ້ສະໜອງ<br>ເຄື່ອງຈັກ | | | ✓ |
| ຄ່າປະກັນໄພລົດປີທຳອິດ | | | ✓ |
| ຄ່າບຳລຸງຮັກສາລົດຂົນສົ່ງ | | | ✓ |
| ອັດຕາດອກເບ້ຍຂອງສິນເຊື່ອ | | ✓ | |
| ໃຊ້ໜີ້ເງິນກູ້ຢືມຄືນໃຫ້ໝູ່ | | ✓ | |



kabm6-12-tg-v2.indb 19 23/03/2015 09:13:47

**ບົດເຝິກຫັດທີ 2**: ການເລີ່ມຕົ້ນຮ້ານຂາຍເຂົ້າຕົ້ມປີ້ງ

ນາງ ບົວສີ ເຮັດວຽກຢູ່ກັບຮ້ານຂາຍເຂົ້າຕົ້ມປີ້ງມາເປັນເວລາຫຼາຍປີແລ້ວ, ຮ້ານດັ່ງກ່າວໄດ້ຜະລິດເຂົ້າຕົ້ມປີ້ງ ແລະ ເຂົ້າສັງຂະຫຍາຂາຍໃຫ້ລູກຄ້າທີ່ອາໄສຢູ່ໃກ້ໆແຖວນັ້ນ. ນອກຈາກນີ້, ທາງຮ້ານຍັງຮັບສັ່ງເຂົ້າຕົ້ມປີ້ງ ແລະ ເຂົ້າສັງຂະຫຍາ ທີ່ມີລົດຊາດຫອມຫວານໃຫ້ແກ່ງານດອງ, ງານວັນເກີດ ແລະ ງານສຳຄັນຕ່າງໆ ສົ່ງໃຫ້ລູກຄ້າເຖິງເຮືອນ.

ນາງ ບົວສີ ໄດ້ຮຽນຮູ້ໝົດທຸກຢ່າງກ່ຽວກັບວິທີເຮັດເຂົ້າຕົ້ມປີ້ງ ແລະ ເຂົ້າສັງຂະຫຍາ ນັບຕັ້ງແຕ່ຂັ້ນຕອນການກະກຽມວັດຖຸດິບ ແລະ ສ່ວນປະສົມທີ່ຈະເຮັດເຂົ້າໜົມຊະນິດຕ່າງໆ, ຂັ້ນຕອນການກະກຽມອົບປີ້ງເຂົ້າໜົມຕະຫຼອດຮອດວຽກທຸກໆຢ່າງຢູ່ໃນຮ້ານ ລວມທັງວິທີຕິດຕໍ່ພົວພັນກັບລູກຄ້າເພື່ອຂາຍເຂົ້າໜົມໃຫ້, ລາວໄດ້ຮັບເງິນເດືອນດ້ວຍຄວາມພໍໃຈ 1,000,000 ກີບ. ນາງ ບົວສີ ຕ້ອງການຢາກມີຮ້ານຂາຍເຂົ້າຕົ້ມປີ້ງ ແລະ ເຂົ້າສັງຂະຫຍາທີ່ເປັນຂອງຕົນເອງຈັກຮ້ານໜຶ່ງ ສະນັ້ນ, ລາວຈຶ່ງພະຍາຍາມທ້ອນເງິນໄວ້ໃນບັນຊີເງິນຝາກປະຢັດຂອງລາວ.

ລາວໄດ້ຈົດກ່າຍລາຍການເຄື່ອງຈັກ ແລະ ອຸປະກອນຕ່າງໆ ເຊິ່ງລາວຕ້ອງການເລີ່ມຕົ້ນເປັນຂອງລາວເອງ. ນອກຈາກນີ້ລາວຍັງໄດ້ຊອກຮູ້ກ່ຽວກັບລາຄາ. ມູນຄ່າສ່ວນໃຫຍ່ມີລາຄາແພງແມ່ນເຕົາອົບໄຟຟ້າທີ່ມີລາຄາ 1,250,000 ກີບ, ນອກຈາກນັ້ນລາວຍັງຕ້ອງ ການເຄື່ອງຈັກຕີແປ້ງລາຄາ 500,000 ກີບ, ເຄື່ອງຊັ່ງນໍ້າໜັກລາຄາ 250,000 ກີບ, ຖ້ວຍ, ຈານ, ພາຊະນະ, ກ່ອງແກັດ ແລະ ເຄື່ອງມືຕ່າງໆລາຄາ 230,000 ກີບ, ຕູ້ວາງເຂົ້າຕົ້ມປີ້ງ, ເຂົ້າສັງຂະຫຍາ 600,000 ກີບ, ແລະ ຕູ້ເຢັນໃຫຍ່ ລາຄາ 2,500,000 ກີບ, ເຊິ່ງຈະຊ່ວຍໃຫ້ລາວສາມາດເກັບຮັກສາເຂົ້າຕົ້ມປີ້ງ, ເຂົ້າສັງຂະຫຍາໄວ້ໄດ້ຢ່າງໜ້ອຍສາມມື້. ນອກຈາກນັ້ນລາວຍັງຕ້ອງການອຸປະກອນປະກອບໃສ່ຫ້ອງຂາຍເຊັ່ນ: ຖ້ານວາງຂາຍເຂົ້າໜົມທີ່ມີຫຼາຍຊັ້ນ ແລະ ເຄື່ອງຄິດໄລ່ເລກເປັນເງິນ 3,500,000 ກີບ. ລາວຢາກໄດ້ຫ້ອງການນ້ອຍໆໜຶ່ງຫ້ອງສຳລັບລາວເອງ ແລະ ຫ້ອງພັກຜ່ອນນ້ອຍໆໜຶ່ງຫ້ອງສຳລັບພະນັກງານຂອງລາວ. ເຄື່ອງໃຊ້ສອຍມີສອງທີ່ຈະປະກອບເຂົ້າໃນສອງຫ້ອງດັ່ງກ່າວລາຄາປະມານ 800,000 ກີບ.

ຫຼັງຈາກທີ່ໄດ້ປະເມີນຕະຫຼາດແລ້ວ, ລາວກໍໄດ້ຕັດສິນໃຈເລີ່ມຕົ້ນເຮັດທຸລະກິດຂອງຕົນເອງ. ມັນເປັນໄລຍະເວລາທີ່ຫຍຸ້ງວຽກຫຼາຍສຳລັບ ນາງ ບົວສີ ຍ້ອນວ່າລາວຕ້ອງສ້າງແຜນທຸລະກິດຂອງລາວໃຫ້ສຳເລັດ, ຄາດຄະເນເງິນລົງທຶນ ແລະ ທຶນໝູນວຽນ ແລະ ຢືມເງິນຈາກທະນາຄານ. ລາວຕ້ອງຂຽນແຜນທຸລະກິດໃຫ້ສຳເລັດພາຍໃນໜຶ່ງເດືອນ. ແຜນດັ່ງກ່າວສະແດງໃຫ້ເຫັນວ່າມີຄວາມເປັນໄປໄດ້ ແລະ ລາວຕ້ອງໃຊ້ເງິນທຶນຂອງຕົນເອງກວມເຖິງ 30% ຂອງການລົງທຶນທັງໝົດ. ໃນເວລາດຽວກັນນັ້ນລາວມີຄວາມຈຳເປັນຕ້ອງເຊົ່າຮ້ານໆໜຶ່ງທີ່ເໝາະສົມກັບທຸລະກິດຂອງລາວຢູ່ໃນຕົວເມືອງທີ່ມີຄອບຄົວລາຍໄດ້ປານກາງ ເຊິ່ງຖືວ່າເປັນພື້ນຖານຂອງລູກຄ້າທີ່ດີ.



kabm6-12-tg-v2.indb 20 23/03/2015 09:13:47

ສອງເດືອນຕໍ່ມາຮ້ານຂອງລາວກໍຍັງບໍ່ທັນມີຫຍັງເລີຍ ແລະ ຄ່າເຊົ່າຮ້ານຕົກເປັນເງິນ 600,000 ກີບ ຕໍ່ເດືອນ, ລາວໃຊ້ເວລາໜຶ່ງເດືອນເພື່ອນຳເອົາແຜນທຸລະກິດຂອງລາວໄປສະເໜີຕໍ່ທະນາຄານໃດໜຶ່ງເພື່ອເຈລະຈາ ແລະ ຂໍກູ້ຢືມເງິນ.

ຈາກນັ້ນ, ລາວກໍໄດ້ຈົດທະບຽນທຸລະກິດ 350,000 ກີບ ແລະ ໄດ້ສັ່ງຊື້ເຄື່ອງຈັກ ແລະ ອຸປະກອນ ເຊິ່ງສາມາດຈັດສົ່ງມາໃຫ້ພາຍໃນກຳນົດ 3 ເດືອນ. ການຕິດຕັ້ງນ້ຳປະປາ, ໄຟຟ້າ ແລະ ໂທລະສັບກໍຕ້ອງໄດ້ລົງທະບຽນອອກຊື່ລາວເອງ ແລະ ລາວຕ້ອງໄດ້ຈ່າຍສຳລັບສິ່ງເຫຼົ່ານີ້ 4,500,000 ກີບ. ການປະກັນໄພຮ້ານເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້ ແລະ ລາວຕ້ອງຈ່າຍອີກ 350,000 ກີບ ຕໍ່ປີ. ເມື່ອເວລາເຄື່ອງຈັກ ແລະ ອຸປະກອນທີ່ລາວໄດ້ສັ່ງຊື້ມາຮອດແລ້ວ, ລາວກໍໄດ້ຢຸດການເປັນພະນັກງານຢູ່ຮ້ານຂາຍເຂົ້າຕົ້ມປີ້ງ ແລະ ເຂົ້າສັງຂະຫຍາ.

ລາວໄດ້ວາງແຜນຈະເປີດຮ້ານຂອງຕົນພາຍໃນໜຶ່ງເດືອນຫຼັງຈາກເຄື່ອງຈັກ ແລະ ອຸປະກອນໄດ້ມາຮອດ. ການຕິດຕັ້ງເຄື່ອງຈັກດັ່ງກ່າວ ຕ້ອງໃຊ້ເວລາ 2 ອາທິດ. ມູນຄ່າການຕິດຕັ້ງ 600,000 ກີບ.

ລາວໄດ້ເລືອກເອົາພະນັກງານຜູ້ຍິງ 2 ຄົນ ແລະ ພະນັກງານເຝິກງານໜຸ່ມຜູ້ໜຶ່ງເຮັດວຽກຢູ່ໂຮງເຮັດເຂົ້າໜົມ ແລະ ຈະຈ້າງພວກເຂົາເຮັດວຽກເລີຍ ເມື່ອເວລາຕິດຕັ້ງເຄື່ອງຈັກສຳເລັດ.

ເງິນເດືອນພະນັກງານທັງໝົດ ລວມເປັນເງິນ 1,500,000 ກີບ ຕໍ່ເດືອນ. ລາວໄດ້ເຝິກອົບຮົມໃຫ້ພະນັກງານໃນຊ່ວງໄລຍະກ່ອນບໍ່ທັນໄດ້ເປີດຮ້ານ.

ເມື່ອຕິດຕັ້ງເຄື່ອງອຸປະກອນທັງໝົດແລ້ວ ລາວຈະເປີດຮ້ານພາຍໃນ 2 ອາທິດ. ໃນໄລຍະ 2 ອາທິດທີ່ລາວເປີດຮ້ານນີ້, ນາງ ບົວສີ ໄດ້ເຝິກການເຮັດເຂົ້າຕົ້ມປີ້ງ ແລະ ເຂົ້າສັງຂະຫຍາໃຫ້ແກ່ພະນັກງານພາຍໃຕ້ເງື່ອນໄຂຂອງການຜະລິດ. ວັດຖຸດິບທີ່ເອົາມາເຮັດການຜະລິດຕໍ່ໜຶ່ງອາທິດຕົກເປັນມູນຄ່າ 200,000 ກີບ, ສ່ວນຄ່າໃຊ້ຈ່າຍອື່ນໆ ເຊັ່ນ: ຄ່ານ້ຳ, ຄ່າໄຟຟ້າ, ຄ່າໂທລະສັບ, ຄ່ານ້ຳມັນໃສ່ລົດ ແລະ ອື່ນໆ ຕົກເປັນ 300,000 ກີບ. ເພື່ອຮັບປະກັນໃຫ້ມີເຂົ້າໜົມໃນການເກັບຮັກສາໄວ້ຂາຍຢູ່ຕະຫຼອດ, ນາງ ບົວສີ ຈະເລີ່ມຜະລິດເປັນເວລາສອງອາທິດເພື່ອສະສົມໄວ້.

ກ່ອນຈະເລີ່ມເຮັດທຸລະກິດຂອງລາວ, ນາງ ບົວສີ ໄດ້ວາງແຜນນຳໃຊ້ການປະຊາສຳພັນ ແລະ ການໂຄສະນາບາງຢ່າງ ແລະ ຄິດວ່າຈະໄດ້ຮັບຂໍ້ສະເໜີກ່ຽວກັບການປະຊາສຳພັນທັງໝົດຈາກໜ່ວຍງານໂຄສະນາໃນລາຄາ 145,000 ກີບ.

ນາງ ບົວສີ ຍັງມີແຜນເຮັດການບໍລິການຈັດງານລ້ຽງຕື່ມອີກ. ເພື່ອຈຸດປະສົງນີ້ລາວໄດ້ຊື້ລົດມືສອງໜຶ່ງຄັນລາຄາ 64,000,000 ກີບ ແລະ ຈະຈ້າງຄົນຂັບລົດຄົນໜຶ່ງໂດຍໃຫ້ເງິນເດືອນ 800,000 ກີບ ຕໍ່ເດືອນ. ຄ່າປະກັນໄພລົດປີໜຶ່ງປະມານ 1,500,000 ກີບ.

ນາງ ບົວສີ ວາງແຜນການຄາດຄະເນຂາຍຢູ່ຮ້ານຕົນເອງປະມານ 60% ສ່ວນອີກ 40%

ຂອງຍອດຂາຍຈະຜ່ານການບໍລິການຈັດງານລ້ຽງ. ລູກຄ້າເຫຼົ່ານີ້ຈະຈ່າຍເງິນພາຍໃນສອງອາທິດ. ລາວຄາດຄະເນວ່າພາຍຫຼັງທີ່ເປີດຮ້ານໄດ້ໜຶ່ງເດືອນຈະເລີ່ມໃຫ້ບໍລິການຈັດງານລ້ຽງ.

**ຄໍາຖາມ**:

1. ຈົ່ງແຕ້ມເສັ້ນສະແດງເວລາ (ທີ່ມີການແບ່ງເສັ້ນແຕ່ລະເດືອນ) ໂດຍເລີ່ມຕົ້ນຕັ້ງແຕ່ ຕອນທີ່ ນາງ ບົວສີ ຕັດສິນໃຈເຮັດທຸລະກິດ ແລະ ເຫດການສໍາຄັນຕ່າງໆ ສໍາລັບກິດຈະກໍາທີ່ແຕກຕ່າງທີ່ຢູ່ໃນຊ່ວງເວລາເລີ່ມຕົ້ນເພື່ອຊອກຫາໄລຍະກ່ອນເຮັດທຸລະກິດນັ້ນ ແມ່ນເລີ່ມແຕ່ບ່ອນໃດຫາບ່ອນໃດ ແລະ ໄລຍະເລີ່ມເຮັດທຸລະກິດແມ່ນເລີ່ມຈາກບ່ອນໃດຫາບ່ອນໃດ.
2. ຈົ່ງແຕ້ມຕາຕະລາງໃນໄລຍະກ່ອນເຮັດທຸລະກິດ ແລະ ອີກຕາຕະລາງໜຶ່ງສໍາລັບໃນໄລຍະເລີ່ມເຮັດທຸລະກິດໂດຍນໍາໃຊ້ບົດເຝິກຫັດທີ 2 ເປັນແບບຢ່າງ ເພື່ອຄິດໄລ່ທຶນສໍາລັບການລົງທຶນ ແລະ ທຶນໝູນວຽນ.
3. ນາງ ບົວສີ ຕ້ອງການທຶນສໍາລັບການລົງທຶນເພື່ອໄປໃຊ້ຈ່າຍໃນໄລຍະກ່ອນການເຮັດທຸລະກິດຫຼາຍປານໃດ? ແລະ ລາວຕ້ອງການທຶນໝູນວຽນໄປໃຊ້ຈ່າຍໃນໄລຍະເລີ່ມຕົ້ນເຮັດທຸລະກິດຫຼາຍປານໃດ?
4. ທຶນເລີ່ມຕົ້ນທີ່ເປັນທຶນສ່ວນຕົວຂອງ ນາງ ບົວສີ ມີຫຼາຍປານໃດ? ແລະ ລາວຕ້ອງຢືມເງິນຈາກທະນາຄານຫຼາຍປານໃດ?
5. ໃນເດືອນທີສອງ ນາງ ບົວສີ ໄດ້ເພີ່ມທຶນໝູນວຽນຂຶ້ນອີກບໍ່? ຖ້າເພີ່ມ, ເປັນຫຍັງຈຶ່ງເພີ່ມ? ແລະ ເປັນຈໍານວນເງິນຫຼາຍປານໃດ?

**ຮ່າງຕາຕະລາງລາຍການຈໍານວນເງິນທີ່ຈ່າຍໃນໄລຍະກ່ອນການເຮັດທຸລະກິດ**

| ລ/ດ | ລາຍການລົງທຶນ | ລະບຸລາຍລະອຽດ | ຈໍານວນເງິນ (ກີບ) |
|---|---|---|---|
| 1 | ເຕົາອົບໄຟຟ້າ | | |
| 2 | ເຄື່ອງຕີແປ້ງ | | |
| 3 | ຊິງຊັ່ງນໍ້າໜັກ | | |
| 4 | ພາຊະນະ | | |
| 5 | ເຄື່ອງເຟີນີເຈີ (ໂຕະ, ຕູ້.....) | | |
| 6 | ຕູ້ເຢັນໃຫຍ່ | | |
| 7 | ຖ້ານວາງ + ຈັກຄິດໄລ່ | | |



kabm6-12-tg-v2.indb 22 23/03/2015 09:13:47

| | | | |
|---|---|---|---|
| 8 | ເຄື່ອງໃຊ້ມືສອງ | | |
| 9 | ຄ່າເຊົ່າຮ້ານ | | |
| 10 | ຄ່າຈົດທະບຽນ | | |
| 11 | ຄ່າຕິດຕັ້ງ | | |
| 12 | ຄ່າປະກັນໄພ | | |
| 13 | ມູນຄ່າຕິດຕັ້ງເຄື່ອງຈັກ | | |
| 14 | ເງິນເດືອນພະນັກງານ | | |
| 15 | ຄ່າວັດຖຸດິບ | | |
| 16 | ຄ່າໃຊ້ຈ່າຍອື່ນໆ<br>(ຄ່ານ້ຳ, ໄຟຟ້າ, ນ້ຳມັນ) | | |
| 17 | ຄ່າໂຄສະນາ | | |
| 18 | ຊື້ລົດມືສອງ | | |
| 19 | ຈ້າງຄົນຂັບລົດ | | |
| 20 | ຄ່າປະກັນໄພລົດ | | |
| | **ລວມ** | | |

**ຮ່າງຕາຕະລາງລາຍການຈຳນວນເງິນໃນເວລາເລີ່ມຕົ້ນເຮັດທຸລະກິດ**

| **ລ/ດ** | **ລາຍການລົງທຶນ** | **ລາຍຈ່າຍໃນເວລາເລີ່ມຕົ້ນເຮັດທຸລະກິດ (ກີບ)** | **ລາຍຈ່າຍ ຫຼື ທຶນໝູນວຽນ (ກີບ)** |
|---|---|---|---|
| 1 | ຄ່າເຊົ່າຮ້ານ | | |
| 2 | ຄ່າຈົດທະບຽນ | | |
| 3 | ຄ່າຕິດຕັ້ງ | | |



kabm6-12-tg-v2.indb 23 23/03/2015 09:13:47

| | | | |
|---|---|---|---|
| 4 | ຄ່າປະກັນໄພ | | |
| 5 | ມູນຄ່າຕິດຕັ້ງເຄື່ອງຈັກ | | |
| 6 | ເງິນເດືອນພະນັກງານ | | |
| 7 | ຄ່າວັດຖຸດິບ | | |
| 8 | ຄ່າໃຊ້ຈ່າຍອື່ນໆ<br>(ຄ່ານ້ຳ, ໄຟຟ້າ, ນ້ຳມັນ) | | |
| 9 | ຄ່າໂຄສະນາ | | |
| 10 | ຊື້ລົດມືສອງ | | |
| 11 | ຈ້າງຄົນຂັບລົດ | | |
| 12 | ຄ່າປະກັນໄພລົດ | | |
| | **ລວມ** | | |

**ຄຳຕອບບົດເຝິກຫັດທີ 2**:

1. ເສັ້ນສະແດງເວລາ (ທີ່ມີການແບ່ງເສັ້ນແຕ່ລະເດືອນ) ໂດຍເລີ່ມຕົ້ນຕັ້ງແຕ່ຕອນທີ່ ນາງ ບົວສີ ຕັດສິນໃຈເຮັດທຸລະກິດ ແລະ ເຫດການສຳຄັນຕ່າງໆ ສຳລັບກິດຈະກຳທີ່ແຕກຕ່າງທີ່ຢູ່ໃນຊ່ວງເວລາເລີ່ມຕົ້ນເພື່ອຊອກຫາໄລຍະກ່ອນເຮັດທຸລະກິດນັ້ນ ແມ່ນເລີ່ມແຕ່ບ່ອນໃດຫາບ່ອນໃດ ແລະ ໄລຍະເລີ່ມເຮັດທຸລະກິດແມ່ນເລີ່ມຈາກບ່ອນໃດຫາບ່ອນໃດ.

| ລ/ດ | ເນື້ອໃນລາຍການ | ເດືອນ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ |
|---|---|---|---|---|---|---|---|---|---|---|---|---|---|---|
| 1 | ສຶກສາຂໍ້ມູນກ່ຽວກັບອຸປະກອນ ແລະ ການຕະຫຼາດ | | | | | | | | | | | | | |
| 2 | ຂຽນແຜນທຸລະກິດໃຫ້ສໍາເລັດ | | | | | | | | | | | | | |
| 3 | ສອງເດືອນຕໍ່ມາຮ້ານລາວຍັງບໍ່ທັນມີຫຍັງເລີຍ | | | | | | | | | | | | | |
| 4 | ນໍາແຜນທຸລະກິດໄປສະເໜີຕໍ່ທະນາຄານ | | | | | | | | | | | | | |
| 5 | ຈົດທະບຽນທຸລະກິດ | | | | | | | | | | | | | |
| 6 | ສັ່ງຊື້ເຄື່ອງຈັກ/ອຸປະກອນ | | | | | | | | | | | | | |
| 7 | ຕິດຕັ້ງອຸປະກອນເຄື່ອງຈັກ/ເຝິກອົບຮົມໃຫ້ພະນັກງານກ່ອນທີ່ຈະເປີດຮ້ານ | | | | | | | | | | | | | |
| 8 | ກະກຽມເລີ່ມເປີດຮ້ານ ແລະ ເຝິກອົບຮົມຕື່ມອີກ | | | | | | | | | | | | | |
| 9 | ປະຊາສໍາພັນ ແລະ ໂຄສະນາບາງຢ່າງ | | | | | | | | | | | | | |



kabm6-12-tg-v2.indb 25 23/03/2015 09:13:47

2. ຕາຕະລາງໃນໄລຍະກ່ອນເຮັດທຸລະກິດ ແລະ ອີກຕາຕະລາງໜຶ່ງສຳລັບໃນໄລຍະເລີ່ມເຮັດທຸລະກິດ ເພື່ອຄິດໄລ່ທຶນສຳລັບການລົງທຶນ ແລະ ທຶນໝູນວຽນ.

**ຮ່າງຕາຕະລາງລາຍການຈຳນວນເງິນທີ່ຈ່າຍໃນໄລຍະກ່ອນການເຮັດທຸລະກິດ**

| ລ/ດ | ລາຍການລົງທຶນ | ລະບຸລາຍລະອຽດ | ຈຳນວນເງິນ (ກີບ) |
|---|---|---|---|
| 1 | ເຕົາອົບໄຟຟ້າ | ໜ່ວຍ | 1,250,000 |
| 2 | ເຄື່ອງຕີແປ້ງ | ໜ່ວຍ | 500,000 |
| 3 | ຊິງຊັ່ງນ້ຳໜັກ | ໜ່ວຍ | 250,000 |
| 4 | ພາຊະນະ | ອັນ | 230,000 |
| 5 | ເຄື່ອງເຟີນິເຈີ (ໂຕະ, ຕູ້.....) | ໜ່ວຍ | 600,000 |
| 6 | ຕູ້ເຢັນໃຫຍ່ | ໜ່ວຍ | 2,500,000 |
| 7 | ຖ້ານວາງ + ຈັກຄິດໄລ່ | ອັນ | 3,500,000 |
| 8 | ເຄື່ອງໃຊ້ມືສອງ | ອັນ | 800,000 |
| | **ລວມ** | | **9,630,0000** |

**ຮ່າງຕາຕະລາງລາຍການຈຳນວນເງິນໃນເວລາເລີ່ມຕົ້ນເຮັດທຸລະກິດ**

| ລ/ດ | ລາຍການລົງທຶນ | ລາຍຈ່າຍປະຈຳເດືອນ ຫຼື ທຶນໝູນວຽນ (ກີບ) | ລາຍຈ່າຍໃນເວລາເລີ່ມຕົ້ນເຮັດທຸລະກິດ (ກີບ) |
|---|---|---|---|
| 1 | ຄ່າເຊົ່າຮ້ານ | 600,000 | 600,000 |
| 2 | ຄ່າຈົດທະບຽນ | 0 | 350,000 |
| 3 | ຄ່າຕິດຕັ້ງ | 0 | 4,500,000 |
| 4 | ຄ່າປະກັນໄພ | 350,000 | 350,000 |
| 5 | ມູນຄ່າຕິດຕັ້ງເຄື່ອງຈັກ | 0 | 600,000 |
| 6 | ເງິນເດືອນພະນັກງານ | 1,500,000 | 1,500,000 |



kabm6-12-tg-v2.indb 26 23/03/2015 09:13:47

| | | | |
|---|---|---|---|
| 7 | ຄ່າວັດຖຸດິບ | 200,000 | 200,000 |
| 8 | ຄ່າໃຊ້ຈ່າຍອື່ນໆ<br>(ຄ່ານໍ້າ, ໄຟຟ້າ, ນໍ້າມັນ..) | 300,000 | 300,000 |
| 9 | ຄ່າໂຄສະນາ | 0 | 145,000 |
| 10 | ຊື້ລົດມືສອງ | 0 | 64,000,000 |
| 11 | ຈ້າງຄົນຂັບລົດ | 800,000 | 800,000 |
| 12 | ຄ່າປະກັນໄພລົດ | 1,500,000 | 1,500,000 |
| | **ລວມ** | **5,250,000** | **74,845,000** |

**ໝາຍເຫດ**: ເງິນທຶນທັງໝົດໃນການເລີ່ມຕົ້ນທຸລະກິດ ເທົ່າກັບ 84,475,000 ກີບ

(74,845,000 ກີບ + 9,630,000 ກີບ = 84,475,000 ກີບ)

ເທົ່າກັບ 5,250,000 ກີບ ແມ່ນທຶນໝູນວຽນ

3. ນາງ ບົວສີ ຕ້ອງການທຶນສໍາລັບການລົງທຶນ ເພື່ອໄປໃຊ້ຈ່າຍໃນໄລຍະກ່ອນການເຮັດທຸລະກິດ 9,630,000 ກີບ ແລະ ລາວຕ້ອງການທຶນໝູນວຽນໄປໃຊ້ຈ່າຍໃນໄລຍະເລີ່ມຕົ້ນເຮັດທຸລະກິດ 5,250,000 ກີບ.

4. ທຶນເລີ່ມຕົ້ນທີ່ເປັນທຶນສ່ວນຕົວຂອງ ນາງ ບົວສີ ມີ 3,600,000 ກີບ (12,000,000 x 30%) ແລະ ລາວຕ້ອງຢືມເງິນຈາກທະນາຄານ 80,875,000 ກີບ (84,475,000 ກີບ - 3,600,000 ກີບ).

5. ໃນເດືອນທີສອງ ນາງ ບົວສີ ຕ້ອງການທຶນໝູນວຽນເພີ່ມຂຶ້ນອີກ 40% ເທົ່າກັບ 33,790,000 ກີບ (84,475,000 ກີບ - 50,685,000 ກີບ) ຍ້ອນວ່າ ໃນເວລາເລີ່ມເປີດຮ້ານໄດ້ໜຶ່ງເດືອນ ລາວຈະຮັບບໍລິການຈັດງານລ້ຽງນອກສະຖານທີ່ພ້ອມ (ລູກຄ້າຕິດໜີ້ສອງອາທິດຈຶ່ງຈ່າຍ) ແລະ ອີກ 60% ແມ່ນຂາຍຢູ່ໃນຮ້ານ.

**ກິດຈະກໍາທີ II. ກໍລະນີສຶກສາ, ບົດເຝິກຫັດ ແລະ ຄໍາຕອບ**

**ກໍລະນີສຶກສາທີ 1**:

ນັກສຶກສາຄົນໜຶ່ງຫາກໍຮຽນຈົບຈາກສະຖາບັນເຕັກນິກ ທີ່ມີທັກສະໃນການນໍາໃຊ້ເຕັກໂນໂລຊີດ້ານຄອມພິວເຕີ. ລາວຕ້ອງການເລີ່ມຕົ້ນຕັ້ງຮ້ານອິນເຕີເນັດກາເຟຢູ່ໃກ້ກັບສະຖາບັນ ເຊິ່ງເປັນບ່ອນທີ່ນັກສຶກສາ ສາມາດພົບປະສ້າງສັນ ແລະ ໃຊ້ຄອມພິວເຕີ 5 ໜ່ວຍທີ່ລາວຫວັງໄວ້ວ່າ

ຈະຊື້ເຂົ້າຮ້ານ. ລາວອາດຈະຕ້ອງຢືມເງິນທຶນ ເພື່ອຕັ້ງທຸລະກິດຂອງລາວເອງ. ຖ້າພວກນ້ອງເປັນຕົວຂອງລາວ, ຈະຕອບຄຳຖາມດັ່ງລຸ່ມນີ້ ຄືແນວໃດກ່ຽວກັບການໄດ້ເງິນທຶນ.

1. ເຄື່ອງຄອມພິວເຕີ 5 ໜ່ວຍສຳລັບຮ້ານອິນເຕີເນັດກາເຟມີມູນຄ່າເທົ່າໃດ?
2. ລາວຈະສາມາດໄດ້ສິນເຊື່ອຈາກຮ້ານທີ່ລາວຈະຊື້ຄອມພິວເຕີບໍ່?
3. ລາວສາມາດໄປກູ້ຢືມເງິນໄດ້ຢູ່ໃສ?
   ກ. ກອງທຶນບ້ານ?
   ຂ. ສະຖາບັນການເງິນ?
4. ຖ້າລາວຕ້ອງໄປທະນາຄານເພື່ອກູ້ຢືມເງິນ, ລາວສາມາດເພີ່ມໂອກາດໄດ້ເງິນກູ້ຄືແນວໃດ?
5. ລາວຕ້ອງການເງິນທຶນຈຳນວນເທົ່າໃດເພື່ອເປັນເງິນທຶນຕັ້ງຮ້ານອິນເຕີເນັດກາເຟ?

**ຄຳຕອບກໍລະນີສຶກສາທີ 1**:

1. ເຄື່ອງຄອມພິວເຕີ 5 ໜ່ວຍສຳລັບຮ້ານອິນເຕີເນັດກາເຟມີມູນຄ່າ 7,500,000 ກີບ (1,500,000 ກີບ/ໜ່ວຍ x 5 ໜ່ວຍ).
2. ຮ້ານຂາຍຄອມພິວເຕີບໍ່ສາມາດໃຫ້ສິນເຊື່ອກັບລາວໄດ້ ຍ້ອນຊື້ໃນຈຳນວນໜ້ອຍ.
3. ລາວສາມາດໄປກູ້ຢືມເງິນໄດ້ນຳກອງທຶນບ້ານ ຫຼື ສະຖາບັນການເງິນກໍໄດ້.
4. ຖ້າລາວຕ້ອງໄປທະນາຄານເພື່ອກູ້ຢືມເງິນ, ລາວສາມາດເພີ່ມໂອກາດໄດ້ເງິນກູ້ຄື: ໄດ້ສິນເຊື່ອເພີ່ມ ຫຼື ທຶນເພີ່ມ.
5. ລາວຕ້ອງການເງິນທຶນຈຳນວນ 7,500,000 ກີບ ເພື່ອເປັນເງິນທຶນຕັ້ງຮ້ານອິນເຕີເນັດກາເຟ (ໝາຍເຫດ: ລາວຕ້ອງການແຕ່ຄອມພິວເຕີ 5 ໜ່ວຍ).

**ຄຳຖາມບົດເຝິກຫັດທີ 3**: ຄຳຖາມກ່ຽວກັບການໄດ້ຮັບເງິນທຶນ:

1. ເງິນທຶນທັງໝົດທີ່ຕ້ອງການສາມາດຢືມໄດ້ບໍ່?
2. ເງິນທຶນສາມາດໄດ້ມາຈາກໃສ?
3. ສິນເຊື່ອ ຫຼື ໜີ້ການເງິນສາມາດໄດ້ມາຈາກໃສ?
4. ຕົວອັກສອນ 5 C's ກ່ຽວກັບສິນເຊື່ອມີຫຍັງແດ່?
5. ເຮັດແນວໃດໂອກາດທີ່ຈະກູ້ຢືມເງິນໄດ້ຈຶ່ງຈະມີຫຼາຍຂຶ້ນ?
6. ຈະນຳໃຊ້ທຶນແນວໃດ?

**ຄຳຕອບບົດເຝິກຫັດທີ 3**: ຄຳຖາມກ່ຽວກັບການໄດ້ຮັບເງິນທຶນ:

1. ເງິນທຶນທີ່ຕ້ອງການສາມາດຢືມໄດ້.
2. ເງິນທຶນສາມາດໄດ້ມາຈາກ: ເງິນປະຢັດສ່ວນຕົວບຸກຄົນ, ໝູ່ເພື່ອນ ແລະ ຍາດພີ່ນ້ອງ.
3. ສິນເຊື່ອ ຫຼື ໜີ້ການເງິນສາມາດໄດ້ມາຈາກ: ທະນາຄານ, ບໍລິສັດການເງິນ, ອົງການຂອງລັດ

(ທີ່ມີການໃຫ້ກູ້ຢືມເງິນ), ສິນເຊື່ອການຄ້າ, ຜູ້ສະໜອງສິນເຊື່ອ ແລະ ສະຖາບັນການເງິນຈຸລະພາກ.

4. ຕົວອັກສອນ 5 C's ກ່ຽວກັບສິນເຊື່ອມີ: ບຸກຄະລິກ (Character), ຄວາມສາມາດ (Capacity), ເງິນທຶນ (Capital), ເງື່ອນໄຂ (Condition) ແລະ ຫຼັກຄ້ຳປະກັນ (Collateral).

5. ເຮັດແນວໃດໂອກາດທີ່ຈະກູ້ຢືມເງິນໄດ້ຈຶ່ງຈະມີຫຼາຍຂຶ້ນ ຄວນມີການຕຽມແຜນການມາເປັນຢ່າງດີກໍຈະມີໂອກາດທີ່ຈະກູ້ຢືມເງິນນຳທະນາຄານໄດ້ຫຼາຍຂຶ້ນ.

6. ຈະນຳໃຊ້ທຶນຄື: ໃຊ້ຈ່າຍໃນການເລີ່ມຕົ້ນທຸລະກິດ, ໃຊ້ຈ່າຍໃນການດຳເນີນທຸລະກິດ ແລະ ໃຊ້ຈ່າຍສ່ວນຕົວ.



kabm6-12-tg-v2.indb 29 23/03/2015 09:13:47

# ບົດທີ 2

# ຂ້ອຍຈະດຳເນີນທຸລະກິດໄດ້ແນວໃດ

**ຈຳນວນ 4 ຊົ່ວໂມງ**

## 1. ຈຸດປະສົງ

**ກິດຈະກຳ I. ຮູ້ຈັກຕົ້ນທຶນການຜະລິດຂອງທຸລະກິດ**

**ໃຫ້ນັກຮຽນສາມາດ:**

- ຮູ້ຈັກວ່າມີຕົ້ນທຶນຫຼາຍປະເພດແຕກຕ່າງກັນທີ່ເກີດຂຶ້ນໃນທຸລະກິດ ແລະ ສາມາດເກັບກຳຄ່າໃຊ້ຈ່າຍເທົ່າທີ່ຈະຕໍ່າໄດ້ ມັນເປັນສິ່ງທີ່ຈຳເປັນສຳລັບທຸລະກິດທີ່ສາມາດສ້າງຜົນກຳໄລໄດ້.

- ເຂົ້າໃຈວິທີຄິດໄລ່ຄ່າໃຊ້ຈ່າຍທາງກົງ ແລະ ທາງອ້ອມ ແລະ ຮູ້ຕົ້ນທຶນທີ່ຈະສາມາດສ້າງຜົນກຳໄລໄດ້.

**ກິດຈະກຳ VII. ການບໍລິຫານການເງິນ**

**ໃຫ້ນັກຮຽນສາມາດ:**

- ເຂົ້າໃຈຄວາມສຳຄັນຂອງການເກັບກຳການຈົດບັນທຶກການເງິນ ໃນທຸລະກິດຂະໜາດນ້ອຍຂອງທຸລະກິດໜຶ່ງ.

## 2. ເນື້ອໃນຕົ້ນຕໍ

**ກິດຈະກຳ I. ຮູ້ຈັກຕົ້ນທຶນການຜະລິດຂອງທຸລະກິດ**

ນັກທຸລະກິດທີ່ບໍລິຫານທຸລະກິດຕ້ອງຈ່າຍຄ່າສິນຄ້າ ແລະ ການບໍລິການທີ່ຕ້ອງການ ເພື່ອມາດຳເນີນທຸລະກິດ ເຊັ່ນ: ຄ່າວັດຖຸດິບ, ຄ່າເຟີນິເຈີຫ້ອງການ, ຄ່າໂທລະສັບ, ເງິນເດືອນສຳລັບພະນັກງານ ແລະ ອື່ນໆ. ຄ່າໃຊ້ຈ່າຍເຫຼົ່ານີ້ເອີ້ນວ່າຕົ້ນທຶນການຜະລິດ.

ເຈົ້າຂອງທຸລະກິດຕ້ອງຮູ້ຕົ້ນທຶນຂອງສິນຄ້າຢ່າງແນ່ນອນ ແລະ ການບໍລິການທີ່ເຂົາຄາດໝາຍໄວ້, ຖ້າຕົ້ນທຶນສູງກວ່າທີ່ລູກຄ້າພໍໃຈຍອມຈ່າຍສິນຄ້າດັ່ງກ່າວ ຫຼື ສູງກວ່າລາຄາຂອງຄູ່ແຂ່ງຜູ້ກ່ຽວຈະບໍ່ສາມາດຂາຍສິນຄ້າຂອງເຂົາອອກໄດ້. ໃນສະຖານະການເຊັ່ນນັ້ນນັກທຸລະກິດຕ້ອງຫຼຸດຕົ້ນທຶນການຜະລິດລົງ.

ມັນມີຕົ້ນທຶນຫຼາຍປະເພດແຕກຕ່າງກັນ ແລະ ການຮູ້ຕົ້ນທຶນການຜະລິດເຫຼົ່ານີ້ຈະພາໃຫ້ມີການຄຸ້ມຄອງກວດກາດີຂຶ້ນ ແລະ ຮັກສາຕົ້ນທຶນໃຫ້ຢູ່ໃນລະດັບຕໍ່າ.

**ກິດຈະກຳ II. ການບໍລິຫານການເງິນ**

ທຸລະກິດໃດກໍ່ຕາມຕ້ອງມີລະບົບການເກັບກຳການບັນທຶກການເງິນທີ່ມີປະສິດທິພາບ. ທຸລະກິດທຸກຢ່າງຈະຕ້ອງມີການບັນທຶກ. ມີຫຼາຍທຸລະກິດຂະໜາດນ້ອຍທີ່ລົ້ມເຫຼວ ຍ້ອນການເກັບກຳການບັນທຶກດ້ານການເງິນບໍ່ຖືກຕ້ອງ. ທຸລະກິດໜຶ່ງອາດມີສິນຄ້າທີ່ດີເລີດ, ມີຕົວເລກຂາຍສູງ, ມີກຳໄລດີ ແຕ່ຖ້າຂາດການເກັບກຳການບັນທຶກທີ່ບໍ່ຖືກຕ້ອງທຸລະກິດນັ້ນແມ່ນຈະກ້າວໄປສູ່ການ



kabm6-12-tg-v2.indb 30 23/03/2015 09:13:47

ລົ້ມລະລາຍ. ສ່ວນຫຼາຍແລ້ວ ເຈົ້າຂອງທຸລະກິດຂະໜາດນ້ອຍແມ່ນປະເຊີນກັບບັນຫາໃນການຕັດສິນໃຈທຸກມື້ ແລະ ການຕັດສິນໃຈທີ່ຖືກຕ້ອງ ແມ່ນຮຽກຮ້ອງໃຫ້ຜູ້ຈັດການເກັບກຳຂໍ້ມູນຂ່າວສານທຸກປະເພດລາຍການຂອງທຸລະກິດນັ້ນ. ລະບົບເກັບກຳຂໍ້ມູນທີ່ເໝາະສົມ ແລະ ຖືກຕ້ອງແມ່ນສະໜອງຂໍ້ມູນຂ່າວສານດ້ານການເງິນທີ່ຈຳເປັນ ເພື່ອແກ້ໄຂບັນຫາການຄຸ້ມຄອງບໍລິຫານໄດ້ງ່າຍກວ່າ ແລະ ເພື່ອເລືອກການຕັດສິນໃຈທີ່ດີ.

## 3. ສື່ການສອນ

**ກິດຈະກຳ I. ຮູ້ຈັກຕົ້ນທຶນການຜະລິດຂອງທຸລະກິດ**

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ວິຊາ ທຸລະກິດ ມ.6
- ເອກະສານປະກອບ ຫຼື ເຈ້ຍຄຳຖາມ ແລະ ຄຳຕອບທີ່ກ່ຽວຂ້ອງ.
- ຕາຕະລາງທີ່ກ່ຽວຂ້ອງ.
- ກະດານດຳ ຫຼື ຂາວ.

**ກິດຈະກຳ II. ການບໍລິຫານການເງິນ**

- ໃຫ້ເບິ່ງຕາມກິດຈະກຳ I

## 4. ວິທີດຳເນີນການສອນ

**ກິດຈະກຳ I. ຮູ້ຈັກຕົ້ນທຶນການຜະລິດຂອງທຸລະກິດ**

**1) ການກະກຽມ**

- ເນື້ອໃນບົດຮຽນ ແລະ ທີ່ກ່ຽວຂ້ອງ ເຊິ່ງຢູ່ໃນປຶ້ມຄູ່ມືຄູ ວິຊາ: ທຸລະກິດ ມ.6
- ຄຳຖາມ ແລະ ຄຳຕອບບົດເຝິກຫັດທີ 1, 2
- ສ້າງເຄື່ອງມືວັດ ແລະ ປະເມີນຜົນແຕ່ລະຂັ້ນຕອນຕາມຄວາມເໝາະສົມ.

**2) ຂັ້ນຕອນການສອນ**

- ຄູຕັ້ງຄຳຖາມກ່ຽວກັບບົດຮຽນເກົ່າທີ່ຮຽນຜ່ານມາໃຫ້ນັກຮຽນອາສາສະໝັກຕອບ.
- ຫຼັງຈາກນັກຮຽນຕອບແລ້ວຄູສະຫຼຸບຄືນໃຫ້ນັກຮຽນຟັງພ້ອມທັງຖາມຄືນບົດຮຽນຜ່ານມາຍັງມີຈຸດໃດທີ່ບໍ່ເຂົ້າໃຈ ຄູອະທິບາຍເພີ່ມເຕີມ.
- ຄູນຳເຂົ້າສູ່ບົດຮຽນໂດຍການບັນລະຍາຍຕາມແຕ່ລະຫົວຂໍ້ຈາກປຶ້ມແບບຮຽນ ຖ້າມີເງື່ອນໄຂຄູສາມາດນຳໜັງສືພິມ, ວາລະສານ ຫຼື ສາຍແຜ່ນຊີດີໃຫ້ນັກຮຽນເບິ່ງ.

**ຂັ້ນຕອນທີ 1**

- ຄູຕັ້ງຫົວຂໍ້ສົນທະນາກັບນັກຮຽນຕາມແຕ່ລະຂໍ້ດັ່ງນີ້:
  1) ຄ່າໃຊ້ຈ່າຍທາງກົງ ແລະ ທາງອ້ອມໝາຍເຖິງຫຍັງ?
  2) ການຈັດແບ່ງຄ່າໃຊ້ຈ່າຍຕາມເງື່ອນໄຂແມ່ນແນວໃດ?
- ຫຼັງຈາກສົນທະນາກັນແລ້ວຄູອະທິບາຍ, ສະຫຼຸບ ແລະ ໃຫ້ນັກຮຽນຈົດເອົາເປັນບົດຮຽນ, ໂດຍອີງຕາມປຶ້ມແບບຮຽນຕາມແຕ່ລະຫົວຂໍ້.



kabm6-12-tg-v2.indb 31 23/03/2015 09:13:47

**ຂັ້ນຕອນທີ 2**

- ຄູຢາຍເຈ້ຍຄຳຖາມບົດເຝິກຫັດທີ 1, 2 ໃຫ້ນັກຮຽນແຕ່ລະຄົນອ່ານ ຫຼື ຄູອາດຈະແນະນຳແຕ່ລະຄົນອ່ານບົດເຝິກຫັດທີ 1, 2 ໃນປຶ້ມແບບຮຽນກໍໄດ້.

- ໃຫ້ນັກຮຽນແຕ່ລະຄົນອ່ານ, ຄົ້ນຄວ້າ ຫຼັງຈາກນັ້ນໃຫ້ນັກຮຽນອາສາສະໝັກຕອບບົດເຝິກຫັດທີ 1, 2 ເພື່ອເອົາເປັນຄະແນນການມີສ່ວນຮ່ວມ.

- ຄູສະຫຼຸບເນື້ອໃນບົດເຝິກຫັດທີ 1, 2 ໃຫ້ຖືກຕ້ອງ ຊັດເຈນ ແລະ ຍ້ອງຍໍ.

- ຄູສະຫຼຸບບົດຮຽນໃນແຕ່ລະຫົວຂໍ້ທີ່ຮຽນມາໃນຊົ່ວໂມງນີ້ໂດຍຫຍໍ້.

- ຄູແນະນຳໃຫ້ນັກຮຽນອ່ານຄົ້ນຄວ້າຫົວຂໍ້ທີ່ຈະຮຽນຕໍ່ໄປ ກ່ອນກ້າວເຂົ້າສູ່ບົດຮຽນໃໝ່.

**3) ແນະນຳ**

ຂັ້ນຕອນການເຂົ້າສູ່ບົດຮຽນ ຫຼື ການສອນ, ຄູສາມາດນຳສະເໜີຮູບພາບ, ໜັງສືພິມ ຫຼື ຂໍ້ມູນຂ່າວສານຕ່າງໆ ທີ່ມີເນື້ອໃນກ່ຽວຂ້ອງກັບບົດຮຽນ.

**4) ແຫຼ່ງຂໍ້ມູນເພີ່ມເຕີມ**

ຖ້າມີເງື່ອນໄຂ ກໍລະນີໃຫ້ສຶກສາເອົາເນື້ອໃນທີ່ກ່ຽວຂ້ອງຈາກຫຼາຍແຫຼ່ງ ເຊັ່ນ: ໂທລະພາບ, ໜັງສືພິມ ແລະ ເອກະສານທີ່ກ່ຽວຂ້ອງກັບ ວິຊາ: ທຸລະກິດ.

**5) ເອກະສານປະກອບ**

- ຄຳຖາມ ແລະ ຄຳຕອບບົດເຝິກຫັດທີ 1, 2

**ກິດຈະກຳ II. ການບໍລິຫານການເງິນ**

**1) ການກະກຽມ**

- ເນື້ອໃນບົດຮຽນ ແລະ ຄຳຖາມທີ່ກ່ຽວຂ້ອງ ເຊິ່ງຢູ່ໃນປຶ້ມຄູ່ມືຄູ ວິຊາ: ທຸລະກິດ ມ.6

- ຄຳຖາມ ແລະ ຄຳຕອບບົດເຝິກຫັດທີ 3, 4

- ສ້າງເຄື່ອງມືວັດ ແລະ ປະເມີນຜົນແຕ່ລະຂັ້ນຕອນຕາມຄວາມເໝາະສົມ.

**2) ຂັ້ນຕອນການສອນ**

- ຄູຕັ້ງຄຳຖາມກ່ຽວກັບບົດຮຽນເກົ່າທີ່ຮຽນຜ່ານມາໃຫ້ນັກຮຽນອາສາສະໝັກຕອບ.

- ຫຼັງຈາກນັກຮຽນຕອບແລ້ວ ຄູສະຫຼຸບຄືນໃຫ້ນັກຮຽນຟັງ ພ້ອມທັງຖາມຄືນບົດຮຽນຜ່ານມາ ຍັງມີຈຸດໃດທີ່ບໍ່ເຂົ້າໃຈ ຄູອະທິບາຍເພີ່ມເຕີມ.

- ຄູນຳເຂົ້າສູ່ບົດຮຽນໂດຍການບັນລະຍາຍຕາມແຕ່ລະຫົວຂໍ້ຈາກປຶ້ມແບບຮຽນ ຖ້າມີເງື່ອນໄຂຄູສາມາດນຳໜັງສືພິມ, ວາລະສານ ຫຼື ສາຍແຜ່ນຊີດີໃຫ້ນັກຮຽນເບິ່ງ.

**ຂັ້ນຕອນທີ 1**

- ຄູຕັ້ງຫົວຂໍ້ສົນທະນາກັບນັກຮຽນຕາມແຕ່ລະຂໍ້ດັ່ງນີ້:

1. ຄຳຖາມສຳຄັນກ່ຽວກັບການເກັບກຳການບັນທຶກມີ:

   1.1 ເປັນຫຍັງຕ້ອງບັນທຶກ?

   1.2 ຈະສາມາດສ້າງລະບົບການບັນທຶກໄດ້ຄືແນວໃດ?

1.3 ແມ່ນຫຍັງທີ່ຜູ້ອື່ນຢາກຮູ້ກ່ຽວກັບການເງິນຂອງທຸລະກິດພວກນ້ອງ?

1.4 ທຸລະກິດຂະໜາດນ້ອຍຄວນເກັບກຳບັນທຶກຫຍັງແດ່?

1.5 ແມ່ນຜູ້ໃດທີ່ຈະຕ້ອງຮັບຜິດຊອບເກັບກຳບັນທຶກການເງິນ?

1.6 ມັນແມ່ນທາງທີ່ດີທີ່ຈະເກັບຮັກສາເງິນທຸລະກິດກັບເງິນໃຊ້ຈ່າຍໃນຄອບຄົວໄວ້ນຳກັນບໍ່?

- ຫຼັງຈາກສົນທະນາກັນແລ້ວຄູອະທິບາຍ, ສະຫຼຸບ ແລະ ໃຫ້ນັກຮຽນຈົດເອົາເປັນບົດຮຽນ, ໂດຍອີງຕາມປຶ້ມແບບຮຽນຕາມແຕ່ລະຫົວຂໍ້.

**ຂັ້ນຕອນທີ 2**

- ຄູຈັດແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ ກຸ່ມລະ 4-5 ຄົນ.
- ຄູຢາຍເຈ້ຍຄຳຖາມບົດເຝິກຫັດທີ 3 ໃຫ້ນັກຮຽນແຕ່ລະກຸ່ມອ່ານ ຫຼື ຄູອາດຈະແນະນຳແຕ່ລະກຸ່ມອ່ານບົດເຝິກຫັດທີ 3 ໃນປຶ້ມແບບຮຽນກໍໄດ້.
- ໃຫ້ນັກຮຽນແຕ່ລະກຸ່ມອ່ານ, ຄົ້ນຄວ້າ, ແກ້ບົດເຝິກຫັດທີ 3 ຫຼັງຈາກນັ້ນໃຫ້ຕາງໜ້າກຸ່ມຂຶ້ນລາຍງານ.
- ຄູສະຫຼຸບເນື້ອໃນບົດເຝິກຫັດທີ 3 ໃຫ້ຖືກຕ້ອງ ຊັດເຈນ ແລະ ຍ້ອງຍໍ.

**ຂັ້ນຕອນທີ 3**

- ຄູຕັ້ງຫົວຂໍ້ສົນທະນາກັບນັກຮຽນຕາມແຕ່ລະຂໍ້ດັ່ງນີ້:

1. ການປະເມີນດ້ານການເງິນແມ່ນແນວໃດ?
2. ຈະສ້າງແຜນການຂອງກະແສເງິນສົດໄດ້ຄືແນວໃດ.
3. ການຄາດຄະເນການນຳໃຊ້ກະແສເງິນສົດແມ່ນແນວໃດ?

- ຫຼັງຈາກສົນທະນາກັນແລ້ວຄູອະທິບາຍ, ສະຫຼຸບ ແລະ ໃຫ້ນັກຮຽນຈົດເອົາເປັນບົດຮຽນ, ໂດຍອີງຕາມປຶ້ມແບບຮຽນຕາມແຕ່ລະຫົວຂໍ້.

**ຂັ້ນຕອນທີ 4**

- ຄູຈັດແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມອີກເທື່ອໜຶ່ງກຸ່ມລະ 4-5 ຄົນ.
- ຄູຢາຍເຈ້ຍຄຳຖາມບົດເຝິກຫັດທີ 4 ໃຫ້ນັກຮຽນແຕ່ລະກຸ່ມອ່ານ ຫຼື ຄູອາດຈະແນະນຳແຕ່ລະກຸ່ມອ່ານບົດເຝິກຫັດທີ 4 ໃນປຶ້ມແບບຮຽນກໍໄດ້.
- ໃຫ້ນັກຮຽນແຕ່ລະກຸ່ມອ່ານ, ຄົ້ນຄວ້າ, ແກ້ບົດເຝິກຫັດທີ 4 ຫຼັງຈາກນັ້ນໃຫ້ຕາງໜ້າກຸ່ມຂຶ້ນລາຍງານ.
- ຄູສະຫຼຸບເນື້ອໃນບົດເຝິກຫັດທີ 4 ໃຫ້ຖືກຕ້ອງຊັດເຈນ ແລະ ຍ້ອງຍໍ.
- ຄູສະຫຼຸບບົດຮຽນໃນແຕ່ລະຫົວຂໍ້ທີ່ຮຽນມາໃນຊົ່ວໂມງນີ້ໂດຍຫຍໍ້.
- ຄູແນະນຳໃຫ້ນັກຮຽນອ່ານຄົ້ນຄວ້າຫົວຂໍ້ທີ່ຈະຮຽນຕໍ່ໄປ ກ່ອນກ້າວເຂົ້າສູ່ບົດຮຽນໃໝ່.

**3) ແນະນຳ**

ຂັ້ນຕອນການເຂົ້າສູ່ບົດຮຽນ ຫຼື ການສອນ, ຄູສາມາດນຳສະເໜີຮູບພາບ, ໜັງສືພິມ ຫຼື ຂໍ້



kabm6-12-tg-v2.indb 33 23/03/2015 09:13:47

ມູນຂ່າວສານຕ່າງໆ ທີ່ມີເນື້ອໃນກ່ຽວຂ້ອງກັບບົດຮຽນ.

**4) ແຫຼ່ງຂໍ້ມູນເພີ່ມເຕີມ**

ຖ້າມີເງື່ອນໄຂ ກໍລະນີໃຫ້ສຶກສາເອົາເນື້ອໃນທີ່ກ່ຽວຂ້ອງຈາກຫຼາຍແຫຼ່ງ ເຊັ່ນ: ໂທລະພາບ, ໜັງສືພິມ ແລະ ເອກະສານທີ່ກ່ຽວຂ້ອງກັບ ວິຊາ: ທຸລະກິດ.

**5) ເອກະສານປະກອບ**

- ຄໍາຖາມ ແລະ ຄໍາຕອບບົດເຝິກຫັດທີ 3, 4

## 5. ການວັດ ແລະ ປະເມີນຜົນ

**ສັງເກດຈາກ**

- ການຕອບຄໍາຖາມຂອງນັກຮຽນແຕ່ລະຄົນ.
- ການເຮັດກິດຈະກໍາຮ່ວມກັນຂອງນັກຮຽນແຕ່ລະຄົນ ຫຼື ແຕ່ລະກຸ່ມ.
- ການມີສ່ວນຮ່ວມອອກຄວາມຄິດຄວາມເຫັນ.
- ການສອບເສັງປະຈໍາບົດ.

**ກິດຈະກໍາທີ I. ຄໍາຖາມ ແລະ ຄໍາຕອບ**

**ບົດເຝິກຫັດທີ 1**: ຄ່າໃຊ້ຈ່າຍທາງກົງ ຫຼື ຄ່າໃຊ້ຈ່າຍທາງອ້ອມ?

ຂຽນ ກ ໃສ່ສໍາລັບຄ່າໃຊ້ຈ່າຍທາງກົງ ແລະ ຂຽນ ອ ໃສ່ສໍາລັບຄ່າໃຊ້ຈ່າຍທາງອ້ອມສໍາລັບແຕ່ລະຕົວຢ່າງຂ້າງລຸ່ມນີ້:

| ຕົວຢ່າງ | 1) ເຄື່ອງໝາຍຄ່າໃຊ້ຈ່າຍ | 2) ເງື່ອນໄຂຂອງຄ່າໃຊ້ຈ່າຍ |
|---|---|---|
| ເງິນເດືອນຂອງພະນັກງານ | | |
| ການຊື້ເຄື່ອງມື | | |
| ວັດຖຸດິບ | | |
| ການໂຄສະນາຮ້ານຄ້າ | | |
| ການສ້ອມແປງເຄື່ອງຈັກ | | |
| ການຊື້ສິນຄ້າເຄື່ອງສໍາເລັດຮູບ | | |



kabm6-12-tg-v2.indb 34 23/03/2015 09:13:47

| | | |
|---|---|---|
| ເງິນເດືອນເຈົ້າຂອງທຸລະກິດ | | |
| ສະໜອງເຄື່ອງໃຊ້ຫ້ອງການ | | |
| ບຳລຸງຮັກສາລົດຂົນສົ່ງ | | |
| ຄ່າທຳນຽມທີ່ປຶກສາ ໃນການສຶກສາຕະຫຼາດ | | |
| ຈ່າຍດອກເບ້ຍເງິນກູ້ | | |
| ດິນຈີ່ ແລະ ຊີມັງສຳລັບ ການກໍ່ສ້າງ | | |
| ນໍ້າມັນສຳລັບທຸລະກິດ ໃຫ້ບໍລິການລົດຂົນສົ່ງ | | |
| ຂໍ້ມູນຂອງອາລຸຍມິນຽມ ສຳລັບໂຮງຊ່າງຈອດ | | |
| ທົວຈອດ ແລະ ກາດສ໌ ສຳລັບໂຮງຊ່າງຈອດ | | |
| ເງິນເດືອນຂອງຄົນຂາຍ ໃນຮ້ານເສື້ອຜ້າ | | |
| ຜ້າໜັງສຳລັບໂຮງງານ ຫຍິບເກີບ | | |



kabm6-12-tg-v2.indb 35 23/03/2015 09:13:47

**ບົດເຝິກຫັດທີ 1**: (ຕໍ່) ຄ່າໃຊ້ຈ່າຍທາງກິງ ຫຼື ຄ່າໃຊ້ຈ່າຍທາງອ້ອມ?

| **ຕົວຢ່າງ** | **1) ເຄື່ອງໝາຍຄ່າໃຊ້ຈ່າຍ** | **2) ເງື່ອນໄຂຂອງຄ່າໃຊ້ຈ່າຍ** |
|---|---|---|
| ກະດຸມສໍາລັບຮ້ານຕັດຫຍິບເຄື່ອງ | | |
| ເຊົ່າຕຶກຂອງຫ້ອງການທຸລະກິດ | | |
| ຢາສະຜົມໃຊ້ໃນຮ້ານເສີມສວຍ | | |
| ປະກັນໄພທົ່ວໄປ | | |
| ປະກັນສຸຂະພາບສໍາລັບ ພະນັກງານ | | |
| ສິ່ງເສີມການຂາຍຂອງສິນຄ້າ | | |
| ໂປຣແກຣມຄອມພິວເຕີ | | |
| ຕະປູສໍາລັບຜະລິດເຟີນີເຈີ | | |
| ຄ່າໂຮງຮຽນສໍາລັບ ລູກພະນັກງານ | | |
| ການເຊື່ອມມູນຄ່າຂອງເຄື່ອງຈັກ | | |

**ຄໍາຕອບບົດເຝິກຫັດທີ 1**: ຄ່າໃຊ້ຈ່າຍທາງກິງ ຫຼື ຄ່າໃຊ້ຈ່າຍທາງອ້ອມ

ໃຫ້ຂຽນ ກ ໃສ່ສໍາລັບຄ່າໃຊ້ຈ່າຍທາງກົງ ແລະ ຂຽນ ອ ໃສ່ສໍາລັບຄ່າໃຊ້ຈ່າຍທາງອ້ອມສໍາລັບແຕ່ລະຕົວຢ່າງຂ້າງລຸ່ມນີ້:

| **ຕົວຢ່າງ** | **1) ເຄື່ອງໝາຍຄ່າໃຊ້ຈ່າຍ** | **2) ເງື່ອນໄຂຂອງ ຄ່າໃຊ້ຈ່າຍ** |
|---|---|---|
| ເງິນເດືອນຂອງພະນັກງານ | ກ | |
| ການຊື້ເຄື່ອງມື | ກ | |

| | | |
|---|---|---|
| ວັດຖຸດິບ | ກ | |
| ການໂຄສະນາຮ້ານຄ້າ | ຂ | |
| ການສ້ອມແປງເຄື່ອງຈັກ | ຂ | |
| ການຊື້ສິນຄ້າເຄື່ອງສຳເລັດຮູບ | ກ | |
| ເງິນເດືອນເຈົ້າຂອງທຸລະກິດ | ກ | |
| ສະໜອງເຄື່ອງໃຊ້ຫ້ອງການ | ກ | |
| ບຳລຸງຮັກສາລົດຂົນສົ່ງ | ຂ | |
| ຄ່າທຳນຽມທີ່ປຶກສາ ໃນການສຶກສາຕະຫຼາດ | ຂ | |
| ຈ່າຍດອກເບ້ຍເງິນກູ້ | ກ | |
| ດິນຈີ່ ແລະ ຊີມັງສຳລັບ ການກໍ່ສ້າງ | ກ | |
| ນ້ຳມັນສຳລັບທຸລະກິດ ໃຫ້ບໍລິການລົດຂົນສົ່ງ | ກ | |
| ຂໍ້ມູນຂອງອາລຸຍມີນຽມ ສຳລັບໂຮງຊ່າງຈອດ | ຂ | |
| ທີວຈອດ ແລະ ກາດສ໌ ສຳລັບໂຮງຊ່າງຈອດ | ກ | |
| ເງິນເດືອນຂອງຄົນຂາຍ ໃນຮ້ານເສື້ອຜ້າ | ກ | |
| ຜ້າໜັງສຳລັບໂຮງງານ ຫຍິບເກີບ | ກ | |



kabm6-12-tg-v2.indb 37 23/03/2015 09:13:47

**ຄຳຕອບບົດເຝິກຫັດທີ 1**: (ຕໍ່) ຄ່າໃຊ້ຈ່າຍທາງກົງ ຫຼື ຄ່າໃຊ້ຈ່າຍທາງອ້ອມ

| ຕົວຢ່າງ | 1) ເຄື່ອງໝາຍຄ່າໃຊ້ຈ່າຍ | 2) ເງື່ອນໄຂຂອງຄ່າໃຊ້ຈ່າຍ |
|---|---|---|
| ກະດຸມສຳລັບຮ້ານຕັດຫຍິບເຄື່ອງ | ກ | |
| ເຊົ່າຕຶກຂອງຫ້ອງການທຸລະກິດ | ກ | |
| ຢາສະຜົມໃຊ້ໃນຮ້ານເສີມສວຍ | ກ | |
| ປະກັນໄພທົ່ວໄປ | ອ | |
| ປະກັນສຸຂະພາບສຳລັບ ພະນັກງານ | ອ | |
| ສິ່ງເສີມການຂາຍຂອງສິນຄ້າ | ອ | |
| ໂປຣແກຣມຄອມພິວເຕີ | ອ | |
| ຕະປູສຳລັບຜະລິດເຟີນິເຈີ | ກ | |
| ຄ່າໂຮງຮຽນສຳລັບລູກພະນັກງານ | ອ | |
| ການໝົດມູນຄ່າຂອງເຄື່ອງຈັກ | ກ | |

**ບົດເຝິກຫັດທີ 2**: ການຈັດລະດັບດ້ວຍເງື່ອນໄຂຄ່າໃຊ້ຈ່າຍ

ໃຫ້ນັກຮຽນເບິ່ງບົດເຝິກຫັດທີ 1 ອີກ ແລະ ໝາຍລາຄາຂອງແຕ່ລະວັດສະດຸໃສ່ໃນຕາຕະລາງ "ເງື່ອນໄຂຂອງຄ່າໃຊ້ຈ່າຍ" ດ້ວຍ:

- S ຄ່າໃຊ້ຈ່າຍສຳລັບພະນັກງານ (Salary)
- M ຄ່າໃຊ້ຈ່າຍສຳລັບອຸປະກອນ (Material)
- O ຄ່າໃຊ້ຈ່າຍອື່ນໆ (Other)
- C ຄ່າໃຊ້ຈ່າຍຕົ້ນທຶນ (Capital)

ນັກຮຽນຄວນຄິດໄລ່ອັດຕາຄ່າຫຼຸ້ຍຫ້ຽນ ແລະ ມູນຄ່າທີ່ເສຍໄປປະຈຳປີເພື່ອ:

- ເຄື່ອງຈັກພິເສດທີ່ມີລາຄາ 5,000,000 ກີບ
- ເຄື່ອງຄອມພິວເຕີທີ່ມີລາຄາ 3,000,000 ກີບ
- ລົດຕູ້ນ້ອຍສຳລັບສົ່ງສິນຄ້າມີລາຄາ 80,000,000 ກີບ

ສ້າງແບບຄ່າຫຼຸ້ຍຫຼັງນຂຶ້ນສຳລັບແຕ່ລະຕົວຢ່າງ ແລະ ຕື່ມໃສ່ແບບໂດຍອີງຕາມນັ້ນ **ຄ່າໃຊ້ຈ່າຍທາງກົງ, ຄ່າໃຊ້ຈ່າຍທາງອ້ອມ ແລະ ເງື່ອນໄຂຄ່າໃຊ້ຈ່າຍ**:

ໃນຕາຕະລາງ "ເງື່ອນໄຂຂອງຄ່າໃຊ້ຈ່າຍ" ຂຽນ D ໃສ່ສຳລັບຄ່າໃຊ້ຈ່າຍທາງກົງ ຫຼື ຂຽນ I ໃສ່ສຳລັບຄ່າໃຊ້ຈ່າຍທາງອ້ອມ. ຂຽນ S ໃສ່ສຳລັບຄ່າໃຊ້ຈ່າຍໃຫ້ພະນັກງານ, ຂຽນ M ສຳລັບຄ່າໃຊ້ຈ່າຍສຳລັບອຸປະກອນ, ຂຽນ O ໃສ່ສຳລັບຄ່າໃຊ້ຈ່າຍອື່ນໆ ຫຼື ຂຽນ C ໃສ່ສຳລັບຄ່າໃຊ້ຈ່າຍຕົ້ນທຶນ.

| ຕົວຢ່າງ | ເຄື່ອງໝາຍ<br>ຂອງຄ່າໃຊ້ຈ່າຍ | ເງື່ອນໄຂ<br>ຂອງຄ່າໃຊ້ຈ່າຍ |
|---|---|---|
| ເງິນເດືອນພະນັກງານ | | |
| ຊື້ເຄື່ອງມື | | |
| ວັດຖຸດິບ | | |
| ການໂຄສະນາຮ້ານຄ້າ | | |
| ສ້ອມແປງເຄື່ອງຈັກ | | |
| ຊື້ສິນຄ້າສຳເລັດຮູບ | | |
| ເງິນເດືອນຂອງເຈົ້າຂອງທຸລະກິດ | | |
| ເຄື່ອງໃຊ້ຫ້ອງການ | | |
| ບຳລຸງຮັກສາລົດຂົນສົ່ງ | | |
| ຄ່າທຳນຽມຂອງທີ່ປຶກສາສຳລັບການສຶກສາການຕະຫຼາດ | | |
| ຈ່າຍດອກເບ້ຍສຳລັບສິນເຊື່ອ | | |
| ດິນຈີ່ ແລະ ຊີມັງສຳລັບການກໍ່ສ້າງ | | |
| ນ້ຳມັນສຳລັບໃຫ້ບໍລິການລົດຂົນສົ່ງ | | |



kabm6-12-tg-v2.indb 39 23/03/2015 09:13:47

| | | |
|---|---|---|
| ຂໍ້ມູນສຳລັບອາລຸຍມີນຽມສຳລັບ ໂຮງຊ່າງເຫຼັກ | | |
| ຫົວຈອດໄຟ ແລະ ກາສ ສຳລັບໂຮງຊ່າງຈອດ | | |
| ເງິນເດືອນສຳລັບຜູ້ຂາຍໃນ ຮ້ານຂາຍເສື້ອຜ້າ | | |
| ຜ້າໜັງສຳລັບບໍລິສັດເຮັດເກີບ | | |
| ກະດຸມສຳລັບຮ້ານຕັດເຄື່ອງ | | |
| ຄ່າເຊົ່າສຳລັບຕຶກອາຄານ ຂອງບໍລິສັດ | | |
| ຢາສະຫົວໃນຮ້ານເສີມສວຍ | | |
| ປະກັນໄພທົ່ວໄປ | | |
| ປະກັນສຸຂະພາບສຳລັບພະນັກງານ | | |
| ສິ່ງເສີມການຂາຍຂອງ ສິນຄ້າຢ່າງໜຶ່ງ | | |
| ໂປຣແກຣມຄອມພິວເຕີ | | |
| ຕະປູສຳລັບຜະລິດເຟີນີເຈີ | | |
| ຄ່າໂຮງຮຽນສຳລັບລູກພະນັກງານ | | |
| ມູນຄ່າຂອງເຄື່ອງຈັກຫຼຸດລົງ | | |
| ຊື້ສິນຄ້າໃໝ່ເຂົ້າສາງ | | |
| ເດີນທາງໄປຫາລູກຄ້າ ຢູ່ຕ່າງປະເທດ | | |
| ປະກັນໄພລົດຍົນ | | |



kabm6-12-tg-v2.indb 40 23/03/2015 09:13:48

| | | |
|---|---|---|
| ເຄື່ອງອາໄຫຼ່ໃນທຸລະກິດສ້ອມແປງລົດຍົນ | | |
| ເຄື່ອງໃຊ້ໄຟຟ້າໃນທຸລະກິດກໍ່ສ້າງ | | |
| ສະຫວັດດີການສັງຄົມສຳລັບພະນັກງານທີ່ເຮັດວຽກກັບເຄື່ອງຈັກ | | |
| ຝຸ່ນໃນການຜະລິດກະສິກຳ | | |
| ໃບບິນຄ່າໄຟຟ້າ | | |
| ປຶ້ມຄູ່ມືໃນການເຝິກອົບຮົມ | | |
| ໃບບິນຄ່ານ້ຳ | | |
| ເຄື່ອງດື່ມໃນຮ້ານອາຫານ | | |

**ຄຳຕອບບົດເຝິກຫັດທີ 2:**

**ຄ່າໃຊ້ຈ່າຍທາງກົງ, ຄ່າໃຊ້ຈ່າຍທາງອ້ອມ ແລະ ເງື່ອນໄຂຄ່າໃຊ້ຈ່າຍ:**

ໃນຕາຕະລາງ "ເງື່ອນໄຂຂອງຄ່າໃຊ້ຈ່າຍ" ຂຽນ D ໃສ່ສຳລັບຄ່າໃຊ້ຈ່າຍທາງກົງ ຫຼື ຂຽນ I ໃສ່ສຳລັບຄ່າໃຊ້ຈ່າຍທາງອ້ອມ. ຂຽນ S ໃສ່ສຳລັບຄ່າໃຊ້ຈ່າຍໃຫ້ພະນັກງານ, ຂຽນ M ສຳລັບຄ່າໃຊ້ຈ່າຍສຳລັບອຸປະກອນ, ຂຽນ O ໃສ່ສຳລັບຄ່າໃຊ້ຈ່າຍອື່ນໆ ຫຼື ຂຽນ C ໃສ່ສຳລັບຄ່າໃຊ້ຈ່າຍຕົ້ນທຶນ.

| ຕົວຢ່າງ | ເຄື່ອງໝາຍຂອງຄ່າໃຊ້ຈ່າຍ | ເງື່ອນໄຂຂອງຄ່າໃຊ້ຈ່າຍ |
|---|---|---|
| ເງິນເດືອນພະນັກງານ | S | ທາງກົງ |
| ຊື້ເຄື່ອງມື | D | ທາງກົງ |
| ວັດຖຸດິບ | D | ທາງກົງ |
| ການໂຄສະນາຮ້ານຄ້າ | I | ທາງອ້ອມ |
| ສ້ອມແປງເຄື່ອງຈັກ | I | ທາງອ້ອມ |



kabm6-12-tg-v2.indb 41 23/03/2015 09:13:48

| | | |
|---|---|---|
| ຊື້ສິນຄ້າສຳເລັດຮູບ | M | ທາງກົງ |
| ເງິນເດືອນຂອງເຈົ້າຂອງທຸລະກິດ | S | ທາງກົງ |
| ເຄື່ອງໃຊ້ຫ້ອງການ | M | ທາງກົງ |
| ບຳລຸງຮັກສາລົດຂົນສົ່ງ | O | ທາງອ້ອມ |
| ຄ່າທຳນຽມຂອງທີ່ປຶກສາ<br>ສຳລັບການສຶກສາ<br>ການຕະຫຼາດ | O | ທາງອ້ອມ |
| ຈ່າຍດອກເບ້ຍສຳລັບສິນເຊື່ອ | O | ທາງກົງ |
| ດິນຈີ່ ແລະ ຊີມັງສຳລັບການກໍ່ສ້າງ | M | ທາງກົງ |
| ນ້ຳມັນສຳລັບໃຫ້ບໍລິການ<br>ລົດຂົນສົ່ງ | C | ທາງກົງ |
| ຂໍ້ມູນສຳລັບອາລຸຍມິນຽມສຳລັບ<br>ໂຮງຊ່າງເຫຼັກ | O | ທາງກົງ |
| ຫົວຈອດໄຟ ແລະ ກຼາດສ໌<br>ສຳລັບໂຮງຊ່າງຈອດ | C | ທາງກົງ |
| ເງິນເດືອນສຳລັບຜູ້ຂາຍ<br>ໃນຮ້ານຂາຍເສື້ອຜ້າ | S | ທາງກົງ |
| ຜ້າໜັງສຳລັບບໍລິສັດເຮັດເກີບ | C | ທາງກົງ |
| ກະດຸມສຳລັບຮ້ານຕັດເຄື່ອງ | C | ທາງກົງ |
| ຄ່າເຊົ່າສຳລັບຕຶກອາຄານ<br>ຂອງບໍລິສັດ | C | ທາງກົງ |
| ແຊມພູຢາສະຫົວ<br>ໃນຮ້ານເສີມສວຍ | C | ທາງກົງ |
| ປະກັນໄພໄຟໄໝ້ | O | ທາງອ້ອມ |



kabm6-12-tg-v2.indb 42 23/03/2015 09:13:48

| | | |
|---|---|---|
| ປະກັນໄພສຸຂະພາບສຳລັບ ພະນັກງານ | O | ທາງອ້ອມ |
| ສິ່ງເສີມການຂາຍ ຂອງສິນຄ້າຢ່າງໜຶ່ງ | O | ທາງອ້ອມ |
| ໂປຣແກຣມຄອມພິວເຕີ | O | ທາງອ້ອມ |
| ຕະປູສຳລັບຜະລິດເຟີນີເຈີ | C | ທາງກົງ |
| ຄ່າໂຮງຮຽນສຳລັບລູກພະນັກງານ | O | ທາງອ້ອມ |
| ມູນຄ່າຂອງເຄື່ອງຈັກຫຼຸດລົງ | C | ທາງກົງ |
| ຊື້ສິນຄ້າໃໝ່ເຂົ້າສາງ | C | ທາງກົງ |
| ເດີນທາງໄປຫາລູກຄ້າ ຢູ່ຕ່າງປະເທດ | O | ທາງອ້ອມ |
| ປະກັນໄພລົດຍົນ | O | ທາງອ້ອມ |
| ເຄື່ອງອາໄຫຼ່ໃນທຸລະກິດ ສ້ອມແປງລົດຍົນ | C | ທາງກົງ |
| ເຄື່ອງໃຊ້ໄຟຟ້າ ໃນທຸລະກິດກໍ່ສ້າງ | C | ທາງກົງ |
| ສະຫວັດດີການສັງຄົມ ສຳລັບພະນັກງານ ທີ່ເຮັດວຽກກັບເຄື່ອງຈັກ | O | ທາງອ້ອມ |
| ຝຸ່ນໃນການຜະລິດກະສິກຳ | C | ທາງກົງ |
| ໃບບິນຄ່າໄຟຟ້າ | C | ທາງກົງ |
| ປຶ້ມຄູ່ມືອົບຮົມໃນການ ເຝິກອົບຮົມ | O | ທາງອ້ອມ |
| ໃບບິນຄ່ານ້ຳ | C | ທາງກົງ |



kabm6-12-tg-v2.indb 43 23/03/2015 09:13:48

| | | |
|---|---|---|
| ເຄື່ອງດື່ມໃນຮ້ານອາຫານ ຫຼື ໃນຮ້ານບັນເທີງ | C | ທາງກົງ |

**ກິດຈະກຳ II. ບົດເຝິກຫັດ ແລະ ຄຳຕອບ**

**ຄຳຖາມບົດເຝິກຫັດທີ 3**: ບັນຊີເງິນສົດແບບງ່າຍດາຍ

ທ່ານ ສຸດໃຈ ດຳເນີນທຸລະກິດໄດ້ 3 ປີ ແລ້ວ. ລາວຕ້ອງການຂະຫຍາຍທຸລະກິດຂອງລາວ ແລະ ໄດ້ຮັບເງິນກູ້ຈາກທະນາຄານວັນທີ 23 ມັງກອນ. ຂ້າງລຸ່ມນີ້ແມ່ນບັນຊີການຊື້ຂາຍສຳລັບທຸລະກິດຂອງລາວລະຫວ່າງວັນທີ 23 ມັງກອນ ຫາ 4 ກຸມພາ. ຖ້າ ທ່ານ ສຸດໃຈ ມີເງິນສົດໃນທຸລະກິດຂອງລາວ 28,000,000 ກີບ ໃນວັນທີ 23 ມັງກອນ ລາວຈະມີເງິນສົດເທົ່າໃດໃນວັນທີ 4 ກຸມພາ?

| ວັນທີ | ການຊື້ຂາຍ | | ເງິນຮັບເຂົ້າ (+) | ເງິນຈ່າຍອອກ (-) | ຍອດເງິນປັດຈຸບັນ |
|---|---|---|---|---|---|
| 23 | ຍອດເງິນຂອງວັນທີ 23 ມັງກອນ | | | | 28,000,000 |
| 23 | ຮັບເງິນກູ້ເປັນເງິນສົດ | 164,000,000 | | | |
| 24 | ຈ່າຍໃຫ້ ທ່ານ ແກ້ວ ສຳລັບອາຄານ ແລະ ດິນເປັນເງິນສົດ | 64,000,000 | | | |
| 24 | ຊື້ອຸປະກອນ | 23,000,000 | | | |
| 24 | ຊື້ເຄື່ອງເຟີນີເຈີ | 7,120,000 | | | |
| 25 | ຊື້ວັດຖຸ | 1,400,000 | | | |
| 25 | ຊື້ສິນຄ້າ | 34,200,000 | | | |
| 28 | ຂາຍສິນຄ້າ | 1,000,000 | | | |
| 28 | ຊື້ສິນຄ້າ | 1,200,000 | | | |
| 28 | ຖອນເງິນສົດເພື່ອໃຊ້ສ່ວນຕົວ | 1,400,000 | | | |
| 31 | ຂາຍສິນຄ້າ | 24,808,000 | | | |
| 31 | ຈ່າຍຄ່າໄຟຟ້າ | 12,000,000 | | | |



kabm6-12-tg-v2.indb 44 23/03/2015 09:13:48

| | | | | | |
|---|---|---|---|---|---|
| 2 | ຈ່າຍຄ່າການຊ່ວຍເຫຼືອບາງເວລາ | 688,000 | | | |
| 2 | ຂາຍສິນຄ້າ | 1,000,000 | | | |
| 3 | ຂາຍສິນຄ້າ | 928,000 | | | |
| 3 | ຈ່າຍຄ່າສ້ອມແປງ | 520,000 | | | |
| 4 | ຊື້ສິນຄ້າ | 1,624,000 | | | |
| 4 | ຈ່າຍຄ່າຂົນສົ່ງສິນຄ້າ | 104,000 | | | |
| 4 | ຍອດເງິນທີ່ຍັງເຫຼືອສຸດທ້າຍ | | | | |

❖ **ການລົງບັນຊີ: ຍອດເງິນວັນທີ 4 ກຸມພາ ມີເທົ່າໃດ?**

**ຄຳຖາມ**: ເປັນຫຍັງການບັນທຶກບັນຊີການເງິນຈຶ່ງສຳຄັນ?

**ບັນຊີເງິນສົດແບບງ່າຍດາຍ**

| ວັນທີ | ການຊື້ຂາຍ | | ເງິນຮັບເຂົ້າ (+) | ເງິນຈ່າຍອອກ (-) | ຍອດເງິນປັດຈຸບັນ |
|---|---|---|---|---|---|
| 23 | ຍອດເງິນຂອງວັນທີ 23ມັງກອນ | | | | 28,000,000 |
| 23 | ຮັບເງິນກູ້ເປັນເງິນສົດ | 164,000,000 | | | |
| 24 | ຈ່າຍໃຫ້ ທ່ານ ແກ້ວ ສຳລັບ ອາຄານ ແລະ ດິນເປັນເງິນສົດ | 64,000,000 | | | |
| 24 | ຊື້ອຸປະກອນ | 23,000,000 | | | |
| 24 | ຊື້ເຄື່ອງເຟີນີເຈີ | 7,120,000 | | | |
| 25 | ຊື້ວັດຖຸ | 1,400,000 | | | |
| 25 | ຊື້ສິນຄ້າ | 34,200,000 | | | |
| 28 | ຂາຍສິນຄ້າ | 1,000,000 | | | |
| 28 | ຊື້ສິນຄ້າ | 1,200,000 | | | |



kabm6-12-tg-v2.indb 45 23/03/2015 09:13:48

| | | | | | |
|---|---|---|---|---|---|
| 28 | ຖອນເງິນສົດເພື່ອໃຊ້ສ່ວນຕົວ | 1,400,000 | | | |
| 31 | ຂາຍສິນຄ້າ | 24,808,000 | | | |
| 31 | ຈ່າຍຄ່າໄຟຟ້າ | 12,000,000 | | | |
| 2 | ຈ່າຍຄ່າການຊ່ວຍເຫຼືອບາງເວລາ | 688,000 | | | |
| 2 | ຂາຍສິນຄ້າ | 1,000,000 | | | |
| 3 | ຂາຍສິນຄ້າ | 928,000 | | | |
| 3 | ຈ່າຍຄ່າສ້ອມແປງ | 520,000 | | | |
| 4 | ຊື້ສິນຄ້າ | 1,624,000 | | | |
| 4 | ຈ່າຍຄ່າຂົນສົ່ງສິນຄ້າ | 104,000 | | | |
| 4 | ຍອດເງິນທີ່ຍັງເຫຼືອສຸດທ້າຍ | | | | |

**ຄຳຕອບບົດເຝິກຫັດທີ 3**: ບັນຊີເງິນສົດແບບງ່າຍດາຍ

ທ່ານ ສຸດໃຈ ດຳເນີນທຸລະກິດໄດ້ 3 ປີ ແລ້ວ. ລາວຕ້ອງການຂະຫຍາຍທຸລະກິດຂອງລາວ ແລະ ໄດ້ຮັບເງິນກູ້ຈາກທະນາຄານວັນທີ 23 ມັງກອນ. ຂ້າງລຸ່ມນີ້ແມ່ນບັນຊີການຊື້ຂາຍສຳລັບທຸລະກິດຂອງລາວລະຫວ່າງວັນທີ 23 ມັງກອນ ຫາ 4 ກຸມພາ. ຖ້າ ທ່ານ ສຸດໃຈ ມີເງິນສົດໃນທຸລະກິດຂອງລາວ 28,000,000 ກີບ ໃນວັນທີ 23 ມັງກອນ ລາວຈະມີເງິນສົດເທົ່າໃດໃນວັນທີ 4 ກຸມພາ?

| **ວັນທີ** | **ການຊື້ຂາຍ** | | **ເງິນຮັບເຂົ້າ (+)** | **ເງິນຈ່າຍອອກ (-)** | **ຍອດເງິນປັດຈຸບັນ** |
|---|---|---|---|---|---|
| 23 | ຍອດເງິນຂອງວັນທີ 23 ມັງກອນ | | | | 28,000,000 |
| 23 | ຮັບເງິນກູ້ເປັນເງິນສົດ | 164,000,000 | 164,000,000 | 0 | |
| 24 | ຈ່າຍໃຫ້ ທ່ານ ແກ້ວ ສຳລັບອາຄານ ແລະ ດິນເປັນເງິນສົດ | 64,000,000 | 0 | 64,000,000 | |
| 24 | ຊື້ອຸປະກອນ | 23,000,000 | 0 | 23,000,000 | |



kabm6-12-tg-v2.indb 46 23/03/2015 09:13:48

| | | | | | |
|---|---|---|---|---|---|
| 24 | ຊື້ເຄື່ອງເຟີນິເຈີ | 7,120,000 | 0 | 7,120,000 | |
| 25 | ຊື້ວັດຖຸ | 1,400,000 | 0 | 1,400,000 | |
| 25 | ຊື້ສິນຄ້າ | 34,200,000 | 0 | 32,200,000 | |
| 28 | ຂາຍສິນຄ້າ | 1,000,000 | 1,000,000 | 0 | |
| 28 | ຊື້ສິນຄ້າ | 1,200,000 | 0 | 1,200,000 | |
| 28 | ຖອນເງິນສົດ ເພື່ອໃຊ້ສ່ວນຕົວ | 1,400,000 | 1,400,000 | 0 | |
| 31 | ຂາຍສິນຄ້າ | 24,808,000 | 24,808,000 | 0 | |
| 31 | ຈ່າຍຄ່າໄຟຟ້າ | 12,000,000 | 0 | 1,200,000 | |
| 2 | ຈ່າຍຄ່າການຊ່ວຍ ເຫຼືອບາງເວລາ | 688,000 | 0 | 688,000 | |
| 2 | ຂາຍສິນຄ້າ | 1,000,000 | 1,000,000 | 0 | |
| 3 | ຂາຍສິນຄ້າ | 928,000 | 928,000 | 0 | |
| 3 | ຈ່າຍຄ່າສ້ອມແປງ | 520,000 | 0 | 520,000 | |
| 4 | ຊື້ສິນຄ້າ | 1,624,000 | 0 | 1,624,000 | |
| 4 | ຈ່າຍຄ່າຂົນສົ່ງສິນຄ້າ | 104,000 | 74,384,000 | 104,000 | |
| **4** | **ຍອດເງິນທີ່ຍັງເຫຼືອ ສຸດທ້າຍ** | | **221,136,000** | **145,856,000** | **75,280,000** |

❖ **ການລົງບັນຊີ: ຍອດເງິນວັນທີ 4 ກຸມພາ ມີເທົ່າໃດ?**

**ຄຳຖາມ**: ເປັນຫຍັງການບັນທຶກບັນຊີການເງິນຈຶ່ງສຳຄັນ?

**ຄຳຕອບ**: ຍ້ອນວ່າການບັນທຶກບັນຊີການເງິນເພື່ອໃຫ້ເຮົາຮູ້ວ່າ:

- ທຸລະກິດມີກຳໄລເທົ່າໃດ?
- ທຸລະກິດມີມູນຄ່າເທົ່າໃດ?
- ລູກຄ້າເປັນໜີ້ທຸລະກິດເທົ່າໃດ?



kabm6-12-tg-v2.indb 47 23/03/2015 09:13:48

- ທຸລະກິດທີ່ເປັນໜີ້ທ່ານມີຫຼາຍເທົ່າໃດ?
- ທຸລະກິດຈະຕ້ອງຈ່າຍອາກອນຫຼາຍປານໃດ?
- ດັ່ງນັ້ນມັນຈຶ່ງມີຄວາມສໍາຄັນ.

**ບັນຊີເງິນສົດແບບງ່າຍດາຍ:**

| ວັນທີ | ການຊື້ຂາຍ | | ເງິນຮັບເຂົ້າ (+) | ເງິນຈ່າຍອອກ (-) | ຍອດເງິນປັດຈຸບັນ |
|---|---|---|---|---|---|
| 23 | ຍອດເງິນຂອງວັນທີ 23 ມັງກອນ | 28,000,000 | | | |
| 23 | ຮັບເງິນກູ້ເປັນເງິນສົດ | 164,000,000 | 292,000,000 | 0 | 292,000,000 |
| 24 | ຈ່າຍໃຫ້ ທ່ານ ແກ້ວ ສໍາລັບອາຄານ ແລະ ດິນເປັນເງິນສົດ | 64,000,000 | 291,000,000 | 64,000,000 | 228,000,000 |
| 24 | ຊື້ອຸປະກອນ | 23,000,000 | 228,000,000 | 23,000,000 | 205,000,000 |
| 24 | ຊື້ເຄື່ອງເຟີນິເຈີ | 7,120,000 | 205,000,000 | 7,120,000 | 198,120,000 |
| 25 | ຊື້ວັດຖຸ | 1,400,000 | 198,120,000 | 1,400,000 | 196,720,000 |
| 25 | ຊື້ສິນຄ້າ | 34,200,000 | 196,720,000 | 34,200,000 | 162,520,000 |
| 28 | ຂາຍສິນຄ້າ | 1,000,000 | 162,520,000 | | 163,520,000 |
| 28 | ຊື້ສິນຄ້າ | 1,200,000 | 163,520,000 | 1,200,000 | 162,320,000 |
| 28 | ຖອນເງິນສົດເພື່ອໃຊ້ສ່ວນຕົວ | 1,400,000 | 162,320,000 | 1,400,000 | 160,920,000 |
| 31 | ຂາຍສິນຄ້າ | 24,808,000 | 160,920,000 | 0 | 185,728,000 |
| 31 | ຈ່າຍຄ່າໄຟຟ້າ | 12,000,000 | 185,728,000 | 12,000,000 | 173,728,000 |
| 2 | ຈ່າຍຄ່າການຊ່ວຍເຫຼືອບາງເວລາ | 688,000 | 173,728,000 | 688,000 | 173,040,000 |
| 2 | ຂາຍສິນຄ້າ | 1,000,000 | 173,040,000 | 0 | 174,040,000 |
| 3 | ຂາຍສິນຄ້າ | 928,000 | 174,040,000 | 0 | 174,968,000 |



kabm6-12-tg-v2.indb 48 23/03/2015 09:13:48

| | | | | | |
|---|---|---|---|---|---|
| 3 | ຈ່າຍຄ່າສ້ອມແປງ | 520,000 | 174,968,000 | 520,000 | 174,448,000 |
| 4 | ຊື້ສິນຄ້າ | 1,624,000 | 174,448,000 | 1,624,000 | 172,824,000 |
| 4 | ຈ່າຍຄ່າຂົນສົ່ງສິນຄ້າ | 104,000 | 172,824,000 | 104,000 | 172,720,000 |
| **4** | **ຍອດເງິນທີ່ຍັງເຫຼືອສຸດທ້າຍ** | | **2,997,888,000** | **147,256,000** | **2,850,632,000** |

**ຄຳຖາມບົດເຝິກຫັດທີ 4**: ການຄາດຄະເນກະແສເງິນສົດ

ທ່ານ ແສງ ຕ້ອງການເລີ່ມຕົ້ນທຸລະກິດກໍ່ສ້າງ. ການຄາດຄະເນວຽກງານກະແສເງິນສົດຂ້າງລຸ່ມນີ້ອະທິບາຍໃຫ້ພວກເຮົາຮູ້ກ່ຽວກັບທຸລະກິດຂອງ ທ່ານ ແສງ. ກ່ອນອື່ນໝົດ, ມັນບອກໃຫ້ພວກເຮົາຮູ້ວ່າຜູ້ກ່ຽວຕ້ອງການເງິນຫຼາຍປານໃດ ເພື່ອຈະບໍລິຫານທຸລະກິດຂອງລາວ. ທີ່ເຫັນຢູ່ຂ້າງລຸ່ມນີ້ແມ່ນລາຍການຂອງອຸປະກອນທີ່ບໍລິສັດຂອງ ທ່ານ ແສງ ຕ້ອງການ:

| | **ລາຄາ/ກີບ** |
|---|---|
| ລົດກະບະ (ຂັບເຄື່ອນ 4 ລໍ້) | 29,600,000 |
| ລົດຂົນດິນ | 8,000,000 |
| ຖັງນໍ້າມັນພິເສດ | 400,000 |
| ຊວ້ານ (3 ອັນ) | 1,840,000 |
| ຂວັນ | 600,000 |
| ເຄື່ອງມື | 2,400,000 |
| ຄາດສຳລັບຄາດດິນ (2 ອັນ) | 400,000 |
| ທໍ່ຢາງທິດນໍ້າ | 5,60,000 |
| **ລວມທັງໝົດ** | **43,800,000** |

ນອກຈາກເງິນ 43,800,000 ກີບ ສຳລັບອຸປະກອນແລ້ວ, ທ່ານ ແສງ ຍັງຕ້ອງການ 6,400,000 ກີບ ສຳລັບເຄື່ອງກໍ່ສ້າງ 8,000,000 ກີບ ສຳລັບອຸປະກອນຫ້ອງການ ແລະ 1,600,000 ກີບ ສຳລັບເຄື່ອງໃຊ້ໃນຫ້ອງການ. ດັ່ງນັ້ນ, ຄ່າໃຊ້ຈ່າຍເບື້ອງຕົ້ນຈະຕົກເປັນ 59,800,000 ກີບ.



kabm6-12-tg-v2.indb 49 23/03/2015 09:13:48

ຍ້ອນວ່າ ທ່ານ ແສງ ໄດ້ເຮັດການຄາດຄະເນກະແສເງິນສົດ, ຜູ້ກູ່ຢືມຈຶ່ງສາມາດເຫັນໄດ້ວ່າ ເວລາໃດຈຶ່ງຈະມີລາຍຮັບ ແລະ ຈະຢູ່ໃນລະດັບໃດ. ມັນຍັງສະແດງໃຫ້ເຫັນການໃຊ້ເງິນສົດຂອງຜູ້ກູ່ຢືມ. ໃຫ້ສັງເກດວ່າໃນການຄາດຄະເນເງິນສົດຂ້າງລຸ່ມນີ້, ກະແສເງິນສົດຂອງ ທ່ານ ແສງ ມີການຂຶ້ນໆລົງໆຫຼາຍຕາມລະດູການ. ຈາກເດືອນພະຈິກໄປຈົນເຖິງເດືອນມີນາຜູ້ກູ່ຢືມມີລາຍໄດ້ເຂົ້າເປັນຈຳນວນຫຼວງຫຼາຍ. ເຖິງແນວໃດກໍຕາມ, ມັນມີຢູ່ສອງສາມເດືອນລະຫວ່າງລະດູການທີ່ຜູ້ກູ່ຢືມມີລາຍໄດ້. ໃນໄລຍະເວລາ 3 ເດືອນດັ່ງກ່າວນີ້, ຜູ້ກູ່ຢືມສ້າງລາຍຮັບໄດ້ໜ້ອຍ ແລະ ຕ້ອງໄດ້ໃຊ້ເງິນທີ່ຜູ້ກູ່ຢືມໄດ້ຫາມາແລ້ວກ່ອນໜ້ານີ້.



kabm6-12-tg-v2.indb 50 23/03/2015 09:13:48

| | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ |
|---|---|---|---|---|---|---|---|---|---|---|---|---|
| ແຫຼ່ງລາຍໄດ້: ການຂາຍ | 2,000,000 | 24,000,000 | 28,000,000 | 4,000,000 | 4,000,000 | 8,000,000 | 8,000,000 | 48,000,000 | 48,000,000 | 96,000,000 | 48,000,000 | 48,000,000 |
| ການໃຊ້ຈ່າຍ:<br>- ຕົ້ນທຶນການຂາຍ<br>-ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດ | 9,400,000<br>11,544,000 | 10,80,000<br>12,440,000 | 12,600,000<br>13,344,000 | 2,200,000<br>7,144,000 | 2,200,000<br>7,144,000 | 3,600,000<br>8,440,000 | 3,600,000<br>11,640,000 | 7,200,000<br>19,040,000 | 7,200,000<br>19,040,000 | 14,400,000<br>28,240,000 | 7,200,000<br>17,440,000 | 7,200,000<br>18,640,000 |
| ລວມທັງໝົດ | 20,944,000 | 23,240,000 | 25,944,000 | 9,344,000 | 9,344,000 | 12,040,000 | 15,240,000 | 26,240,000 | 26,240,000 | 42,640,000 | 24,640,000 | 25,840,000 |
| ການໃຊ້ເງິນທັງໝົດ: ເພີ່ມຂຶ້ນ ຫຼື ຫຼຸດລົງ | (944,000) | 760,000 | 2,056,000 | (5,344,000) | (5,344,000) | (4,040,000) | (7,240,000) | 21,760,000 | 21,760,000 | 53,360,000 | 23,360,000 | 22,160,000 |
| ກະແສເງິນສົດທີ່ທະວີຄູນຂຶ້ນ | (944,000) | (184,000) | 1,872,000 | (3,472,000) | (8,816,000) | (12,856,000) | (20,096,000) | 1,66,4000 | 23,424,000 | 76,784,000 | 100,144,000 | 122,304,000 |

ທ່ານ ແສງ ຕ້ອງການເງິນຫຼາຍປານໃດເພື່ອເລີ່ມຕົ້ນທຸລະກິດ? ຜູ້ກູ້ຢືມຕ້ອງການໃຫ້ພຽງພໍກັບຄ່າໃຊ້ຈ່າຍໃນເບື້ອງຕົ້ນບວກເຂົ້າກັບຈຳນວນເງິນພິເສດທີ່ຜູ້ກູ້ຢືມຕ້ອງການເພື່ອເອົາມາໃຊ້ໃນເດືອນທີ່ມີລາຍໄດ້ຕ່ຳ. ຈຸດຕ່ຳສຸດຂອງການຄາດຄະເນກະແສເງິນສົດພາຍໃນ 1 ປີ ຂອງ ທ່ານ ແສງ ແມ່ນຕົກຢູ່ເດືອນທີ 10 (ຕຸລາ) ເວລາມັນລົງມາຮອດ 20,096,000 ຢູ່ຈຸດນີ້, ຕ້ອງໄດ້ຈ່າຍຄ່າໃບຮັບເງິນ (ບິນ), ແຕ່ວ່າຄ່າໃຊ້ຈ່າຍຍັງຫຼາຍກວ່າລາຍໄດ້ຈາກການຂາຍ. ຖ້າວ່າສະພາບການເຊັ່ນນີ້ຍັງມີຕໍ່ໄປ, ອີກບໍ່ດົນລາວຄົງລົ້ມລະລາຍ. ເຖິງຢ່າງໃດກໍຕາມ, ທ່ານ ແສງ ກໍຮູ້ດີວ່າຜູ້ກູ້ຢືມໄດ້ໃຊ້ເວລາມາດົນເພື່ອເຂົ້າສູ່ຕະຫຼາດ ແລະ ສ້າງຄວາມເຊື່ອຖືໃຫ້ຕົນເອງຂຶ້ນມາ.



kabm6-12-tg-v2.indb 51 23/03/2015 09:13:48

ນັກທຸລະກິດສ່ວນຫຼາຍຄົງຈະເວົ້າວ່າ, “ມັນເບິ່ງຄືວ່າຂ້າພະເຈົ້າຕ້ອງການປະມານ 80,000,000 ກີບ ເພື່ອເລີ່ມຕົ້ນທຸລະກິດຂອງຂ້າພະເຈົ້າ 60,000,000 ກີບ ສຳລັບຄ່າໃຊ້ຈ່າຍເບື້ອງຕົ້ນ ແລະ 20,000,000 ກີບ ເພື່ອມາລວມເອົາຄ່າໃຊ້ຈ່າຍທີ່ເກີນລາຍຮັບຂອງຂ້າພະເຈົ້າ ຈົນເຖິງເດືອນຕຸລາ”. ແຕ່ວ່າ ທ່ານ ແສງ ສະຫຼາດຫຼາຍກວ່ານັ້ນ. ຜູ້ກູ່ຍືມກໍຮູ້ດີຢູ່ແລ້ວວ່າ ເງິນທີ່ມີໃນສັນຍາຈະຈ່າຍນັ້ນອາດຈະບໍ່ຈ່າຍໄດ້ທັນເວລາ. ແທນທີ່ວ່າຈະເອົາແຕ່ “ພຽງພໍ” ເພື່ອຈະໃຫ້ເລີ່ມຕົ້ນໃໝ່ນັ້ນ, ທ່ານ ແສງ ໄດ້ໃຊ້ວິທີກົດເກນທົ່ວໄປທີ່ລາວຮຽນຮູ້ມາຈາກນາຍທະນາຄານ, ຜູ້ກູ່ຍືມຈະສ້າງຕັ້ງບໍລິສັດຕົນເອງດ້ວຍເງິນພໍພຽງແຕ່ຈະຊື້ອຸປະກອນ ແລະ ສິນຄ້າໃນເບື້ອງຕົ້ນ (60,000,000 ກີບ), ບວກກັບເຄິ່ງໜຶ່ງຂອງຈຳນວນເງິນທີ່ລາວຄິດວ່າຈະຕ້ອງການ ເພື່ອກວມເອົາຄ່າໃຊ້ຈ່າຍລວມໃນຊຸມເດືອນເລີ່ມໃໝ່. ເຄິ່ງໜຶ່ງຂອງ 20,000,000 ກີບ ແມ່ນ 10,000,000 ກີບ, 10,000,000 ກີບ ບວກກັບ 20,000,000 ກີບ ເຮັດໃຫ້ຍອດເງິນລວມມີເຖິງ 30,000,000 ກີບ ສະເພາະຄ່າໃຊ້ຈ່າຍໃນການດຳເນີນທຸລະກິດ. ແທນທີ່ວ່າຈະເອົາ “ພຽງພໍ” ເຊິ່ງໃນທີ່ສຸດກໍພຽງພໍທີ່ຈະນຳໄປສູ່ບັນຫາ, ທ່ານ ແສງ ເອົາເງິນພຽງພໍເພື່ອຮັບປະກັນຜົນສຳເລັດ. ລາວໄດ້ວາງແຜນຈັດໃຫ້ມີເງິນພິເສດໄວ້ສຳລັບບັນຫາ ທີ່ບໍ່ຄາດຝັນຈະເກີດຂຶ້ນ. ຍ້ອນເຮັດເຊັ່ນນີ້, ຖ້າວ່າລາວຕ້ອງການສ້ອມແປງລົດກະບະຂອງລາວ ຫຼື ຖ້າວ່າລາຄານ້ຳມັນຂຶ້ນ ຫຼື ຖ້າວ່າສັນຍາບາງເທື່ອມີການລ້າຊ້າ, ລາວກໍຍັງສາມາດດຳເນີນທຸລະກິດໄປຕໍ່ໄດ້.

ພວກນ້ອງຕ້ອງເຮັດແນວນີ້ກັບທຸລະກິດຂອງພວກນ້ອງເຊັ່ນດຽວກັນ. ກ່ອນທີ່ພວກນ້ອງຈະຊອກຫາທາງອອກແບບງ່າຍໆ ຫຼື ມີແນວຄິດຈະເລີ່ມດຳເນີນທຸລະກິດ ໃຫ້ຖືກກວ່າທີ່ພວກນ້ອງຄວນດຳເນີນ ໃຫ້ພວກນ້ອງລອງຊອກເບິ່ງວ່າ ຕາມຕົວຈິງແລ້ວມັນຈະຕົກເປັນເທົ່າໃດເພື່ອດຳເນີນທຸລະກິດດັ່ງກ່າວໃຫ້ມັນຖືກຕ້ອງ, ຢ່າລືມວ່າໃຫ້ຄູນຈຸດຕ່ຳສຸດຂອງກະແສເງິນສົດຂອງພວກນ້ອງກັບ 60,000,000 ກີບ ຫຼື ອາດຈະແມ່ນ 45,000,000 ກີບ ແລະ ການຄິດໄລ່ກໍຈະໃກ້ກັບປະລິມານຂອງຕົວເລກແທ້ຈິງຂອງຈຳນວນເງິນທີ່ຕ້ອງການ ເພື່ອມາເລີ່ມເຮັດທຸລະກິດ. ຖ້າພວກນ້ອງເຮັດຕາມກົດເກນດັ່ງກ່າວ ແລະ ພິຈາລະນາແບບລະອຽດກ່ຽວກັບລາຍຈ່າຍທັງໝົດເພື່ອຈະລວມເອົາທັງການຄາດຄະເນກະແສເງິນສົດພວກນ້ອງກໍຈະບໍ່ປະເຊີນກັບການຂາດຕົ້ນທຶນ.

ເປົ້າໝາຍຂອງທ່ານ ແສງ ປັດຈຸບັນແມ່ນໄປຊອກຢືມເງິນ 60,000,000 ກີບ ທີ່ລາວຄິດວ່າຈະຕ້ອງການເພື່ອມາເລີ່ມຕົ້ນທຸລະກິດຂອງລາວ, ພ້ອມທັງເງິນ 30,000,000 ກີບ ທີ່ລາວຕ້ອງການໃຊ້ສຳລັບການດຳເນີນທຸລະກິດ (ລວມເປັນ 90,000,000 ກີບ).

ຫຼັງຈາກສົນທະນາກັບຫຼາຍໆທະນາຄານແລ້ວ, ທ່ານ ແສງ ສາມາດກູ້ເງິນສິນເຊື່ອໄດ້ເປັນເວລາ 3 ປີ ເປັນເງິນ 90,000,000 ກີບ ແລະ ຈະຈ່າຍຄືນເປັນງວດໃນເວລາ 6 ປີ ເຄິ່ງພ້ອມດອກເບ້ຍ 5% ການຄາດຄະເນການນຳໃຊ້ກະແສເງິນສົດໃໝ່ຂອງ ທ່ານ ແສງ ຈະອອກເປັນແນວໃດ ໂດຍຄິດໄລ່ທັງເງິນກູ້ຢືມຂອງຜູ້ກູ່ຍືມ.



kabm6-12-tg-v2.indb 52 23/03/2015 09:13:48

**ຄຳຕອບບົດເຝິກຫັດທີ 4**:

**ການຄາດຄະເນການນຳໃຊ້ກະແສເງິນສົດ**

ເພື່ອສ້າງແຜນຄາດຄະເນການນຳໃຊ້ກະແສເງິນສົດ ພວກນ້ອງຕ້ອງປະເມີນໄວ້ວ່າຄ່າໃຊ້ຈ່າຍສູງປານໃດ ເພື່ອເຮັດໃຫ້ທຸລະກິດຂອງພວກນ້ອງເດີນໄດ້ໄປແຕ່ລະເດືອນສະເພາະປີຕໍ່ປີ. ໃຫ້ຄິດໄລ່ຄືກັບວ່າມີໃບແຈ້ງລາຍຮັບປະຈຳເດືອນທີ່ຢູ່ຄຽງຂ້າງກັນ(ໃບແຈ້ງລາຍຮັບແມ່ນໃບແຈ້ງການທີ່ມີລາຍໄດ້ຈາກການຂາຍ ຄ່າໃຊ້ຈ່າຍໃນການຂາຍ ແລະ ລາຍຈ່າຍການບໍລິຫານ, ດັ່ງນັ້ນ ມັນຈະຊີ້ໃຫ້ເຫັນກ່ຽວກັບຕົວເລກກຳໄລປະຈຳເດືອນ ຫຼື ວ່າຕົວເລກຂາດທຶນ). ເມື່ອບວກ "ແຖວລຸ່ມ" ເຂົ້ານຳກັນໝົດຖ້າແມ່ນໃບແຈ້ງຜົນກຳໄລ ແລະ ຂາດທຶນ. ພວກນ້ອງກໍຈະສາມາດເຫັນກະແສເງິນສົດທີ່ສະສົມ. ໃຫ້ເບິ່ງວ່າແຖວລຸ່ມມີການປ່ຽນແປງແນວໃດ. ຕົວຢ່າງເຫັນໄດ້ດັ່ງຕໍ່ໄປນີ້:

ບໍລິສັດກໍ່ສ້າງຂອງ ທ່ານ ແສງ

ການຄາດຄະເນກະແສເງິນສົດສຳລັບ 12 ເດືອນ, ຈາກວັນທີ 1 ເມສາ ເຖິງວັນທີ 31 ມີນາ

| | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ |
|---|---|---|---|---|---|---|---|---|---|---|---|---|
| ເງິນສົດໃນເວລາເລີ່ມຕົ້ນ | 30,000,000 | 29,056,000 | 29,816,000 | 31,872,000 | 26,528,000 | 21,184,000 | (2,360,000) | (9,600,000) | 12,160,000 | 33,920,000 | 87,280,000 | 110,640,000 |
| ລາຍໄດ້ຈາກການຂາຍ | 20,000,000 | 24,000,000 | 28,000,000 | 4,000,000 | 4,000,000 | 8,000,000 | 8,000,000 | 48,000,000 | 48,000,000 | 96,000,000 | 48,000,000 | 48,000,000 |
| **ການໃຊ້ຈ່າຍ**: | | | | | | | | | | | | |
| - ຕົ້ນທຶນການຂາຍ | 9,400,000 | 10,800,000 | 12,600,000 | 2,200,000 | 2,200,000 | 3,600,000 | 3,600,000 | 7,200,000 | 7,200,000 | 14,400,000 | 7,200,000 | 7,200,000 |
| - ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດ | 11,544,000 | 12,440,000 | 13,344,000 | 7,144,000 | 7,144,000 | 8,440,000 | 11,640,000 | 19,040,000 | 19,040,000 | 28,240,000 | 17,440,000 | 18,640,000 |
| ດອກເບ້ຍ | | | | | | 4,504,000 | | | | | | 3,752,000 |
| ການຈ່າຍຄືນເງິນກູ້ | | | | | | 15,000,000 | | | | | | 15,000,000 |
| **ລວມທັງໝົດ** | 20,944,000 | 23,240,000 | 25,944,000 | 9,344,000 | 9,344,000 | 31,544,000 | 15,240,000 | 26,240,000 | 26,240,000 | 42,640,000 | 24,640,000 | 44,592,000 |
| ຄ່າໃຊ້ຈ່າຍລວມທັງໝົດເພີ່ມຂຶ້ນ ຫຼື ຫຼຸດລົງ | (944,000) | 760,000 | 2,056,000 | (5,344,000) | (5,344,000) | (23,544,000) | (7,240,000) | 21,760,000 | 21,760,000 | 53,360,000 | 23,360,000 | 3,408,000 |
| ກະແສເງິນສົດທີ່ສະສົມ | 29,056,000 | 29,816,000 | 31,872,000 | 26,528,000 | 21,184,000 | (2,360,000) | (9,600,000) | 12,160,000 | 33,920,000 | 87,280,000 | 110,640,000 | 114,048,000 |



kabm6-12-tg-v2.indb 53 23/03/2015 09:13:48

# ບົດທີ 3
# ຂັ້ນຕອນຕໍ່ໄປເພື່ອຈະກາຍເປັນນັກທຸລະກິດມືອາຊີບ

**ຈຳນວນ 2 ຊົ່ວໂມງ**

## 1. ຈຸດປະສົງ

**ກິດຈະກຳ I. ການກະກຽມແຜນທຸລະກິດ**

**ໃຫ້ນັກຮຽນສາມາດ:**

- ຮູ້ຂັ້ນຕອນ, ໂຄງຮ່າງ ແລະ ໂຄງສ້າງຂອງການຂຽນແຜນທຸລະກິດ.
- ເຂົ້າໃຈຂະບວນການຂອງແຜນທຸລະກິດ ຫຼັງຈາກໄດ້ຜ່ານຂັ້ນຕອນຫຼັກໆຂອງການພັດທະນາໃນການຂຽນແຜນໜຶ່ງແລ້ວ.

## 2. ເນື້ອໃນຕົ້ນຕໍ

**ກິດຈະກຳ I. ການກະກຽມແຜນທຸລະກິດ**

ເມື່ອມີຄວາມເຂົ້າໃຈໃນບົດບາດຂອງແຜນທຸລະກິດ ແລະ ໄດ້ຜ່ານຂະບວນການຂຽນແຜນຕົວຢ່າງໜຶ່ງມາແລ້ວ ກໍຈະສາມາດລວບລວມເອົາຄວາມຮູ້ກ່ຽວກັບທຸລະກິດ ແລະ ກໍຈະສາມາດຊອກການສະໜັບສະໜູນ, ມີຄວາມຈຳເປັນທີ່ເຕັມໄປດ້ວຍຂໍ້ສອບຖາມຕົວຈິງ ແລະ ສຳຄັນ.

## 3. ສື່ການສອນ

**ກິດຈະກຳ I. ການກະກຽມແຜນທຸລະກິດ**

- ປື້ມແບບຮຽນ ແລະ ປື້ມຄູ່ມືຄູ ວິຊາ: ທຸລະກິດ ມ.6
- ເອກະສານປະກອບ.
- ກະດານດຳ ຫຼື ຂາວ.

## 4. ວິທີດຳເນີນການສອນ

**ກິດຈະກຳ I. ການກະກຽມແຜນທຸລະກິດ**

**1) ການກະກຽມ**

- ເນື້ອໃນບົດຮຽນ, ຄຳຖາມທີ່ກ່ຽວຂ້ອງ ເຊິ່ງຢູ່ໃນປື້ມຄູ່ມືຄູ ວິຊາ: ທຸລະກິດ ມ.6
- ຄຳຖາມບົດເຝິກຫັດທີ 1 ຄຳຕອບບົດເຝິກຫັດທີ 1
- ສ້າງເຄື່ອງມືວັດ ແລະ ປະເມີນຜົນແຕ່ລະຂັ້ນຕອນຕາມຄວາມເໝາະສົມ.

**2) ຂັ້ນຕອນການສອນ**

- ຄູນຳພານັກຮຽນສ້າງບັນຍາກາດກ່ອນເຂົ້າສູ່ບົດຮຽນຕົວຈິງ.



kabm6-12-tg-v2.indb 54 23/03/2015 09:13:48

- ຄູຖາມທວນຄືນກ່ຽວກັບບົດຮຽນເກົ່າທີ່ຮຽນຜ່ານມາ ໃຫ້ນັກຮຽນອາສາສະໝັກຕອບ ແລະ ຖ້າຍັງມີຈຸດໃດບໍ່ເຂົ້າໃຈຄູອະທິບາຍເພີ່ມຕື່ມອີກ.

**ຂັ້ນຕອນທີ 1**

- ຄູສະເໜີຫົວບົດ ແລະ ສົນທະນາກັບນັກຮຽນກ່ຽວກັບຫົວບົດເພື່ອທຳຄວາມເຂົ້າໃຈ.
- ຄູຕັ້ງຄຳຖາມດັ່ງຕໍ່ໄປນີ້ສົນທະນາກັບນັກຮຽນ ແລະ ໃຫ້ນັກຮຽນອ່ານຄົ້ນຄວ້າຊອກຫາຄຳຕອບຕາມປຶ້ມແບບຮຽນປະມານ 15-20 ນາທີ.

1) ແຜນທຸລະກິດແມ່ນຫຍັງ?
2) ເປັນຫຍັງຈຶ່ງຕ້ອງຂຽນແຜນທຸລະກິດ?
3) ເມື່ອໃດຈຶ່ງຕ້ອງຂຽນແຜນທຸລະກິດ?
4) ມີແຜນທຸລະກິດປະເພດໃດແດ່?
5) ແມ່ນໃຜເປັນຜູ້ຂຽນແຜນທຸລະກິດ?
6) ແຜນທຸລະກິດຂຽນໄດ້ແນວໃດ?
7) ຈະເອົາແຜນທຸລະກິດໄປເຮັດຫຍັງ?
8) ແຜນທຸລະກິດມີຮູບຮ່າງລັກສະນະຄືແນວໃດ?
9) ມີຫຍັງແດ່ທີ່ປະກອບເຂົ້າໃນແຜນທຸລະກິດ?
10) ແຜນທຸລະກິດມີໂຄງຮ່າງການປະກອບຄືແນວໃດ?

ຄູໃຫ້ນັກຮຽນອາສາສະໝັກຕອບຄຳຖາມແຕ່ລະຂໍ້ ຫຼື ຄູອາດຈະບົ່ງຕົວເອົາກໍໄດ້. ຫຼັງຈາກນັກຮຽນຕອບແລ້ວ ຄູໃຫ້ຄະແນນ, ກ່າວຄຳຍ້ອງຍໍຊົມເຊີຍ ແລະ ສະຫຼຸບຄຳຖາມໃນແຕ່ລະຂໍ້ພ້ອມທັງໃຫ້ນັກຮຽນຈົດເອົາເປັນບົດຮຽນ.

**ຂັ້ນຕອນທີ 2**

- ຄູຕັ້ງຫົວຂໍ້ສົນທະນາກັບນັກຮຽນຕາມແຕ່ລະຂໍ້ດັ່ງນີ້:

1) ໂຄງຮ່າງການປະກອບສ້າງແຜນທຸລະກິດມີຄືແນວໃດ?
2) ໂຄງສ້າງຂອງແຜນທຸລະກິດປະກອບມີຫຍັງແດ່?

ຫຼັງຈາກສົນທະນາກັນແລ້ວຄູອະທິບາຍ, ສະຫຼຸບ ແລະ ໃຫ້ນັກຮຽນຈົດເອົາເປັນບົດຮຽນໂດຍອີງໃສ່ປຶ້ມແບບຮຽນຕາມແຕ່ລະຫົວຂໍ້.

- ຄູແນະນຳໃຫ້ນັກຮຽນອ່ານບົດເຝິກຫັດທີ 1 ແລະ ຕອບ ເອົາເປັນຄະແນນກິດຈະກຳ
- ຄູສະຫຼຸບບົດເຝິກຫັດທີ 1 ໃຫ້ຖືກຕ້ອງ ຊັດເຈນ ແລະ ຍ້ອງຍໍ,
- ຄູສະຫຼຸບບົດຮຽນໃນແຕ່ລະຫົວຂໍ້ທີ່ຮຽນມາໃນຊົ່ວໂມງນີ້ໂດຍຫຍໍ້.
- ຄູແນະນຳໃຫ້ນັກຮຽນອ່ານຄົ້ນຄວ້າຫົວຂໍ້ທີ່ຈະຮຽນໃນຊົ່ວໂມງຕໍ່ໄປ ກ່ອນຈະເຂົ້າສູ່ບົດ



kabm6-12-tg-v2.indb 55 23/03/2015 09:13:48

ຮຽນໃໝ່.

**3) ແນະນຳ**

ຂັ້ນຕອນການເຂົ້າສູ່ບົດຮຽນ ຫຼື ການສອນ, ຄູສາມາດນຳສະເໜີຮູບພາບ, ໜັງສືພິມ ຫຼື ຂໍ້ມູນຂ່າວສານຕ່າງໆ ທີ່ມີເນື້ອໃນກ່ຽວຂ້ອງກັບບົດຮຽນ.

**4) ແຫຼ່ງຂໍ້ມູນເພີ່ມເຕີມ**

ຖ້າມີເງື່ອນໄຂກໍລະນີໃຫ້ສຶກສາເອົາເນື້ອໃນທີ່ກ່ຽວຂ້ອງຈາກຫຼາຍແຫຼ່ງ ເຊັ່ນ: ໂທລະພາບ, ໜັງສືພິມ ແລະ ເອກະສານທີ່ກ່ຽວຂ້ອງກັບ ວິຊາ: ທຸລະກິດ.

**5) ເອກະສານປະກອບ**

- ເຈ້ຍຄຳຖາມ ແລະ ຄຳຕອບບົດເຝິກຫັດທີ 1 .
- ບົດທົດສອບ ຫຼື ບົດສອບເສັງ.

## 5. ການວັດ ແລະ ປະເມີນຜົນ

**ສັງເກດຈາກ**

- ການຕອບຄຳຖາມຂອງນັກຮຽນແຕ່ລະຄົນ.
- ການເຮັດກິດຈະກຳຮ່ວມກັນຂອງນັກຮຽນແຕ່ລະກຸ່ມ.
- ການມີສ່ວນຮ່ວມອອກຄວາມຄິດຄວາມເຫັນ.
- ການສອບເສັງປະຈຳບົດ.

**ກິດຈະກຳ I: ບົດເຝິກຫັດ ແລະ ຄຳຕອບ**

**ຄຳຖາມບົດເຝິກຫັດທີ 1:**

1. ໂຄງຮ່າງການປະກອບສ້າງແຜນທຸລະກິດມີຄືແນວໃດ?
2. ໂຄງສ້າງຂອງແຜນທຸລະກິດປະກອບມີຫຍັງແດ່?

**ຄຳຕອບບົດເຝິກຫັດທີ 1:**

1. ໂຄງຮ່າງການປະກອບສ້າງແຜນທຸລະກິດມີຄື:
   1) ໜ້າປົກ.
   2) ສາລະບານ.
   3) ບົດສັງລວມຫຍໍ້.
   4) ລາຍລະອຽດຂອງທຸລະກິດ.
   5) ຂໍ້ມູນກ່ຽວກັບເຈົ້າຂອງ ຫຼື ຜູ້ສົ່ງເສີມທຸລະກິດ.
   6) ແຜນການຕະຫຼາດ.
   7) ໂຄງຮ່າງການຈັດຕັ້ງ.



kabm6-12-tg-v2.indb 56 23/03/2015 09:13:48

8) ແຜນປະຕິບັດງານ.

9) ແຜນການເງິນ.

10) ເອກະສານຊ້ອນທ້າຍ.

2. ໂຄງສ້າງຂອງແຜນທຸລະກິດປະກອບມີ

1) ຂໍ້ມູນພື້ນຖານ.

2) ປະສົບການດ້ານທຸລະກິດ.

3) ໂຄງຮ່າງທຸລະກິດ ແລະ ລາຍລະອຽດ.

4) ການແຂ່ງຂັນຂອງຕະຫຼາດ.

5) ຂະບວນການຜະລິດ ຫຼື ການຂາຍສິນຄ້າ ແລະ ການບໍລິການ.

6) ສະຖານະພາບທາງການເງິນ.

# ບົດທີ 4
# ວິທີອະທິບາຍແຜນດຳເນີນທຸລະກິດສ່ວນຕົວຢ່າງລະອຽດ

**ຈຳນວນ 2 ຊົ່ວໂມງ**

## 1. ຈຸດປະສົງ

**ກິດຈະກຳ I. ວິທີອະທິບາຍແຜນທຸລະກິດສ່ວນຕົວຢ່າງລະອຽດ**

**ໃຫ້ນັກຮຽນສາມາດ:**

- ນຳໃຊ້ຄວາມຮູ້ກ່ຽວກັບ ວິຊາ: ທຸລະກິດ ໃຫ້ເຂົ້າກັບສະພາບການຕະຫຼາດຕົວຈິງ.
- ຮູ້ວ່າແຜນທຸລະກິດປະກອບມີຂໍ້ມູນຫຼາຍຢ່າງ ແຕ່ວ່າແບບແຜນຂອງທຸລະກິດສາມາດປັບເຂົ້າກັບຕົວຈິງໄດ້.

## 2. ເນື້ອໃນຕົ້ນຕໍ

**ກິດຈະກຳ I. ວິທີອະທິບາຍແຜນທຸລະກິດສ່ວນຕົວຢ່າງລະອຽດ**

ໃນເວລາຂອງການຮຽນ ວິຊາ: ທຸລະກິດ ນັກຮຽນຕ້ອງໄດ້ສຶກສາລົງເລິກກ່ຽວກັບຫົວຂໍ້ທີ່ກ່ຽວຂ້ອງຄື:

- ສັງລວມແນວຄວາມຄິດແນວໃດ?
- ສ້າງຕັ້ງທຸລະກິດແນວໃດ?
- ວິທີການດຳເນີນງານທາງທຸລະກິດຈະດຳເນີນໄດ້ແນວໃດ?

ເພື່ອອະທິບາຍແຜນທຸລະກິດໃຫ້ລະອຽດ ນັກຮຽນຕ້ອງນຳໃຊ້ຄວາມຮູ້ທີ່ໄດ້ຮຽນມາຈາກວິຊາ: ທຸລະກິດ ເພື່ອເກັບກຳ ແລະ ນຳໃຊ້ຂໍ້ມູນທີ່ກ່ຽວຂ້ອງກັບແນວຄວາມຄິດທາງທຸລະກິດ. ແຜນທຸລະກິດຈະຊ່ວຍໃຫ້ພວກເຂົາເຈົ້າສາມາດອະທິບາຍໄດ້ຢ່າງຈະແຈ້ງ. ແຜນທຸລະກິດໂດຍຫຼັກໆແລ້ວມີຢູ່ສອງໜ້າທີ່ຄື:

- ມັນຈະບົ່ງບອກຜູ້ລິເລີ່ມທຸລະກິດວ່າ: ຄວາມຄິດທາງທຸລະກິດດັ່ງກ່າວນີ້ຈະສາມາດເປັນໄປໄດ້ ຫຼື ບໍ່.
- ເພື່ອກູ້ເງິນທຶນຈາກຄອບຄົວ, ໝູ່ຄູ່ ຫຼື ກູ້ເງິນຈາກສິນເຊື່ອ, ຈາກທະນາຄານ

ມາດຕະຖານແຜນທຸລະກິດຈະຊ່ວຍໃຫ້ມີຄວາມແນ່ນອນວ່າ ຂໍ້ມູນທຸກຢ່າງທີ່ຕ້ອງມີແມ່ນໄດ້ຖືກເກັບກຳ ແລະ ເອົາມາພິຈາລະນາ, ແຕ່ວ່າສະຖາບັນປ່ອຍເງິນອອກເຊັ່ນ: ທະນາຄານ ຫຼື ວ່າໂຄງການສົ່ງເສີມການລົງທຶນ ສ່ວນຫຼາຍແລ້ວກໍຈະມີເງື່ອນໄຂຂອງພວກເຂົາເຈົ້າ ແລະ ອາດຈະຮຽກຮ້ອງໃຫ້ພັດທະນາແຜນທຸລະກິດເພື່ອພິຈາລະນາດ້ວຍຕົນເອງ.

ແຕ່ລະຂັ້ນຕອນຂອງການພັດທະນາທຸລະກິດ, ນັກຮຽນຈະຕ້ອງສືບຕໍ່ນຳໃຊ້ແຫຼ່ງຂໍ້ມູນ ແລະ



kabm6-12-tg-v2.indb 58 23/03/2015 09:13:48

ການຊ່ວຍເຫຼືອເຫຼົ່ານັ້ນພ້ອມກັບທັດສະນະເພີ່ມໂອກາດເຂົ້າສູ່ການເລີ່ມຕົ້ນ ແລະ ການປັບປຸງທຸລະກິດຂອງພວກເຂົາເຈົ້າໃຫ້ສູງຂຶ້ນ.

## 3. ສື່ການສອນ

**ກິດຈະກຳ I. ວິທີອະທິບາຍແຜນທຸລະກິດສ່ວນຕົວຢ່າງລະອຽດ**

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ວິຊາ: ທຸລະກິດ ມ.6
- ໂຄງຮ່າງ ແລະ ໂຄງສ້າງແຜນທຸລະກິດຕົວຈິງ.
- ກະດານດຳ ຫຼື ຂາວ.

## 4. ວິທີດຳເນີນການສອນ

**ກິດຈະກຳ I. ວິທີອະທິບາຍແຜນທຸລະກິດຕົວຢ່າງລະອຽດໄດ້ແນວໃດ**

**1) ການກະກຽມ**

- ເນື້ອໃນບົດຮຽນ, ຄຳຖາມທີ່ກ່ຽວຂ້ອງ ທີ່ຢູ່ໃນປຶ້ມຄູ່ມືຄູ ວິຊາ: ທຸລະກິດ ມ.6
- ແບບຢ່າງໂຄງຮ່າງ ແລະ ໂຄງສ້າງຂອງແຜນທຸລະກິດຕົວຈິງ.
- ສ້າງເຄື່ອງມືວັດ ແລະ ປະເມີນຜົນແຕ່ລະຂັ້ນຕອນຕາມຄວາມເໝາະສົມ.

**2) ຂັ້ນຕອນການສອນ**

- ຄູນຳພານັກຮຽນສ້າງບັນຍາກາດກ່ອນເຂົ້າສູ່ບົດຮຽນຕົວຈິງ.
- ຄູຖາມທວນຄືນກ່ຽວກັບບົດຮຽນເກົ່າທີ່ຮຽນຜ່ານມາ ໃຫ້ນັກຮຽນອາສາສະໝັກຕອບ ແລະ ຖ້າຍັງມີຈຸດໃດບໍ່ເຂົ້າໃຈຄູອະທິບາຍເພີ່ມຕື່ມອີກ.

**ຂັ້ນຕອນທີ 1**

- ຄູ ແລະ ນັກຮຽນສົນທະນາກັນກ່ຽວກັບການພົວພັນລະຫວ່າງອົງປະກອບຕ່າງໆ ຂອງມາດຕະຖານແຜນທຸລະກິດຕາມແຕ່ລະຫົວຂໍ້ດັ່ງລຸ່ມນີ້:

1) ບົດສະຫຼຸບສຳລັບຜູ້ບໍລິຫານ
2) ແນວຄິດທຸລະກິດ ແລະ ການຕະຫຼາດ
3) ແຜນການ ການຕະຫຼາດກ່ຽວກັບຜະລິດຕະພັນ
4) ແຜນການ ການຕະຫຼາດຂອງລາຄາ
5) ແຜນການຕະຫຼາດກ່ຽວກັບສະຖານທີ່
6) ການວາງແຜນການຕະຫຼາດຂອງການສົ່ງເສີມການຂາຍ
7) ຮູບແບບທາງກົດໝາຍ
8) ເງິນທຶນເບື້ອງຕົ້ນ
9) ແຫຼ່ງເງິນກູ້ທຶນເບື້ອງຕົ້ນ
10) ການຈັດຕັ້ງ ແລະ ພະນັກງານ



kabm6-12-tg-v2.indb 59 23/03/2015 09:13:48

11) ຕົ້ນທຶນ ແລະ ຄ່າໃຊ້ຈ່າຍຕ່າງໆໃນການດຳເນີນທຸລະກິດ

12) ແຜນການກ່ຽວກັບກະແສເງິນສົດ

13) ກຳໄລ

14) ຍອດຍົກມາ

- ຄູອະທິບາຍກ່ຽວກັບການຈັດວາງມາດຕະຖານຂອງແຜນທຸລະກິດ ແລະ ສົນທະນາດ້ານເນື້ອໃນຂອງການຂຽນແຜນທຸລະກິດ ໂດຍໃຫ້ເອົາແຜນທຸລະກິດທີ່ປະສົບຜົນສຳເລັດນັ້ນເປັນ (ຕົວຢ່າງ). ແລະ ໃຫ້ນັກຮຽນດັດແປງມັນຕາມຄວາມຕ້ອງການຂອງແຜນທຸລະກິດຂອງພວກເຂົາເຈົ້າ.

**ຂັ້ນຕອນທີ 2**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ ກຸ່ມລະ 4-5 ຄົນ.

- ຄູໃຫ້ນັກຮຽນແຕ່ລະກຸ່ມອ່ານຄົ້ນຄວ້າກ່ຽວກັບ "ມາດຕະຖານຂອງແຜນທຸລະກິດ" ຕາມປຶ້ມແບບຮຽນໃຫ້ທຳຄວາມເຂົ້າໃຈໃນແຕ່ລະຂໍ້.

- ຄູໃຫ້ແຕ່ລະກຸ່ມຂຽນແຜນທຸລະກິດຂອງພວກເຂົາເຈົ້າຫຼັງຈາກນັ້ນໃຫ້ແຕ່ລະກຸ່ມຂຶ້ນນຳສະເໜີ.

- ຄູແນະນຳຕື່ມອີກໃນເວລາແຕ່ລະກຸ່ມຂຶ້ນນຳສະເໜີ ຖ້າຫາກວ່າແຜນທຸລະກິດຂອງກຸ່ມໃດຍັງບໍ່ທັນຖືກຕ້ອງຕົງກັບເປົ້າໝາຍຕາມບົດຮຽນທີ່ວາງໄວ້.

- ຄູສະຫຼຸບຄືນກ່ຽວກັບການຂຽນແຜນທຸລະກິດອີກເທື່ອໜຶ່ງ ແລະ ໃຫ້ນັກຮຽນຂຽນແຜນທຸລະກິດເປັນບຸກຄົນ ຫຼື ເປັນກຸ່ມ ເພື່ອເອົາເປັນຄະແນນ.

**3) ແນະນຳ**

ຂັ້ນຕອນການເຂົ້າສູ່ບົດຮຽນ ຫຼື ການສອນ, ຄູສາມາດນຳສະເໜີຮູບພາບ, ໜັງສືພິມ ຫຼື ຂໍ້ມູນຂ່າວສານຕ່າງໆ ທີ່ມີເນື້ອໃນກ່ຽວຂ້ອງກັບບົດຮຽນ.

**4) ແຫຼ່ງຂໍ້ມູນເພີ່ມເຕີມ**

ຖ້າມີເງື່ອນໄຂ ກໍລະນີໃຫ້ສຶກສາເອົາເນື້ອໃນທີ່ກ່ຽວຂ້ອງຈາກຫຼາຍແຫຼ່ງ ເຊັ່ນ: ໂທລະພາບ, ໜັງສືພິມ ແລະ ເອກະສານທີ່ກ່ຽວຂ້ອງກັບ ວິຊາ: ທຸລະກິດ.

**5) ເອກະສານປະກອບ**

- ຕົວຢ່າງ: ແຜນທຸລະກິດທີ່ປະສົມຜົນສຳເລັດ

## 5. ການວັດ ແລະ ປະເມີນຜົນ

**ສັງເກດຈາກ**

- ການຕອບຄຳຖາມຂອງນັກຮຽນແຕ່ລະຄົນ.
- ການເຮັດກິດຈະກຳຮ່ວມກັນຂອງນັກຮຽນແຕ່ລະກຸ່ມ.
- ການມີສ່ວນຮ່ວມອອກຄວາມຄິດຄວາມເຫັນ.
- ການຂຽນແຜນທຸລະກິດຂອງນັກຮຽນແຕ່ລະຄົນ.



kabm6-12-tg-v2.indb 60 23/03/2015 09:13:48